# ສະບັບດັດແກ້ເພີ່ມເຕີມ

Distr.: ທົ່ວໄປ
ວັນທີ 20 ເດືອນມິຖຸນາ ປີ 2019

ຕົ້ນສະບັບ: ພາສາອັງກິດ

**ສະພາ ສິດທິມະນຸດ**
**ກອງປະຊຸມຄັ້ງທີ ສີ່ສິບເອັດ**
ວັນທີ 24 ເດືອນມິຖຸນາ –-ວັນທີ 12 ເດືອນກໍລະກົດ ປີ 2019
ວາລະທີ 3
**ສົ່ງເສີມ ແລະ ປົກປ້ອງທຸກດ້ານຂອງສິດທິມະນຸດ, ສິດທິຂອງພົນລະເມືອງ, ສິດທິດ້ານການເມືອງ, ສິດທິດ້ານເສດຖະກິດ, ສິດທິດ້ານສັງຄົມ ແລະ ດ້ານວັດທະນາທຳ ລວມທັງສິດທິດ້ານການພັດທະນາ**

## ການຢ້ຽມຢາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບ ຄວາມທຸກຍາກທີ່ສຸດ ແລະ ສິດທິມະນຸດ *, **

*ພາກສະຫຼຸບສັງລວມ*

ນັບຕັ້ງແຕ່ໄດ້ຮັບເອກະລາດ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບັນລຸເຖິງ ການຂະຫຍາຍຕົວ ດ້ານເສດຖະກິດທີ່ໜ້າປະທັບໃຈ, ເຖິງແມ່ນວ່າຈະມີປະຫວັດເຄີຍເປັນປະເທດຫົວເມືອງຂຶ້ນ ແລະ ມີລະເບີດທີ່ບໍ່ທັນແຕກຕົກຄ້າງຢູ່ໃນຫຼາຍພື້ນທີ່ກໍ່ຕາມ. ລະດັບຄວາມທຸກຍາກໄດ້ຫຼຸດລົງຫຼາຍ, ແຕ່ວ່າ ລະດັບການຂະຫຍາຍຕົວທີ່ສູງ ເຊິ່ງໄດ້ມາຈາກການຂຸດຄົ້ນຊັບພະຍາກອນທຳມະຊາດ ແລະ ການລົງທຶນຂອງຕ່າງປະເທດ ຊໍ້າພັດບໍ່ໄດ້ນໍາໄປສູ່ການຫຼຸດຜ່ອນຄວາມທຸກຍາກໃນລະດັບທີ່ເທົ່າທຽມກັນ. 80 ສ່ວນຮ້ອຍ ຂອງພົນລະເມືອງ ຍັງດຳລົງຊີວິດດ້ວຍເງິນ ໜ້ອຍກວ່າ 2.50 ໂດລາຕໍ່ມື້. ຄວາມບໍ່ສະເໝີພາບກຳລັງເພີ່ມຂຶ້ນ ຍ້ອນກຸ່ມຄົນຊັ້ນສູງໃນຕົວເມືອງຈະເລີນຮຸ່ງເຮືອງຂຶ້ນ ແລະ ໃນຂະນະທີ່ປະຊາຊົນທີ່ມີລາຍຮັບຕໍ່າຈຳນວນຫຼາຍ ຊໍ້າພັດຖືກຈຳກັດ ໃນການເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນທຳມະຊາດທີ່ສຳຄັນຕ່າງໆ. ພັກປະຊາຊົນ ປະຕິວັດລາວ ມີສິດຜູກຂາດດ້ານລະບົບການເມືອງ ແລະ ທາງດ້ານອິດສະຫຼະພາບດ້ານການເມືອງ ເຊິ່ງຄົນສ່ວນຫຼາຍບໍ່ມີ. ບົດລາຍງານສະບັບຫຼ້າສຸດນີ້ ຕ້ອງອ່ານຄຽງຄູ່ກັບຖະແຫຼງການຫຼັງຈາກການຢ້ຽມຢາມຂອງຜູ້ລາຍງານພິເສດ ເຊິ່ງລວມມີ ການປະເມີນລະອຽດກ່ຽວກັບປະເດັນເຫຼົ່ານີ້ ແລະ ກ່ຽວກັບສິ່ງທ້າທາຍສະເພາະ ທີ່ເກີດຂຶ້ນກັບປະຊາຊົນຢູ່ເຂດຊົນນະບົດ, ແມ່ຍິງ ແລະ ກຸ່ມຊົນເຜົ່າສ່ວນໜ້ອຍ.

ບົດລາຍງານນີ້ ສຸມໃສ່ຂໍ້ລິເລີ່ມຕ່າງໆ ແລະ ບັນດາການປະຕິຮູບ ທີ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສາມາດຈັດຕັ້ງປະຕິບັດ ເພື່ອສະໜັບສະໜູນປະຊາຊົນທີ່ຢູ່ໃນຄວາມທຸກຍາກ ແລະ ຍົກສູງການນັບຖືສິດທິມະນຸດຂອງພວກເຂົາ. ສິ່ງເຫຼົ່ານັ້ນລວມເຖິງ ການປະເມີນຄືນບັນດາຍຸດທະສາດການພັດທະນາເສດຖະກິດ ເພື່ອຮັບປະກັນວ່າ ຜົນປະໂຫຍດຈາກການເຕີບໂຕ ໄດ້ມີການແບ່ງປັນຢ່າງສະເໝີພາບກວ່າເກົ່າ, ລົງທຶນໃສ່ລະບົບການປົກປ້ອງທາງສັງຄົມໃຫ້ເຂັ້ມແຂງກວ່າເກົ່າ ເຊິ່ງປັດຈຸບັນສ່ວນຫຼາຍຍັງບໍ່ມີ ແລະ ຮັບຮອງເອົານະໂຍບາຍ ດ້ານຄວາມໂປ່ງໃສ, ການມີສ່ວນຮ່ວມທີ່ມີຄວາມໝາຍ ແລະ ການສ້າງຄວາມເຂັ້ມແຂງທາງອຳນາດ ໃຫ້ແກ່ປະຊາຊົນຜູ້ທຸກຍາກ ແລະ ດຶງເອົາການມີສ່ວນຮ່ວມຂອງພວກເຂົາເຂົ້າໃນການປຶກສາຫາລືກັບມວນຊົນຢ່າງແທ້ຈິງ.

* ບົດສະຫຼຸບສັງລວມຂອງບົດລາຍງານນີ້ ໄດ້ແຈກຢາຍເປັນພາສາທາງການທຸກພາສາ. ບົດລາຍງານເອງ ເຊິ່ງຊ້ອນທ້າຍ ມາກັບບົດສະຫຼຸບສັງລວມນີ້ ແມ່ນໄດ້ແຈກຢາຍ ເປັນພາສາທີ່ຍື່ນໃຫ້ເທົ່ານັ້ນ.

** ບົດລາຍງານ ໄດ້ຍື່ນໄປຍັງສູນບໍລິການຈັດກອງປະຊຸມ ພາຍຫຼັງຄົບກຳນົດ ເພື່ອສະທ້ອນໃຫ້ເຫັນເຖິງຂໍ້ມູນທີ່ໃໝ່ຫຼ້າສຸດ.

# ເອກະສານຊ້ອນທ້າຍ

## ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບ ຄວາມທຸກຍາກທີ່ສຸດ ແລະ ສິດທິມະນຸດ ຈາກການໄປຢ້ຽມຢາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂອງທ່ານ

## ສາລະບານ

*ເລກໜ້າ*


| | | | |
|---|---|---|---|
| I. | | ພາກສະເໜີ | 3 |
| II. | | ການເຂົ້າເຖິງຂໍ້ມູນຂ່າວສານ | 5 |
| III. | | ການຫັນເອົາການຂະຫຍາຍຕົວດ້ານເສດຖະກິດໄປສູ່ການຫຼຸດຜ່ອນຄວາມທຸກຍາກ | 6 |
| | A. | ນະໂຍບາຍດ້ານເສດຖະກິດ | 7 |
| | B. | ຄວາມເຊື່ອມໂຍງລະຫວ່າງທີ່ດິນ ແລະ ຄວາມທຸກຍາກ | 10 |
| | C. | ຄິດຄືນໃໝ່ກ່ຽວກັບໄຟຟ້າພະລັງນໍ້າ | 12 |
| IV. | | ບັນດາໂຄງການປົກປ້ອງສັງຄົມທີ່ສຳຄັນ | 13 |
| | A. | ດ້ານສາທາລະນະສຸກ | 14 |
| | B. | ການສຶກສາ | 15 |
| V. | | ສິ່ງທ້າທາຍ ແລະ ໂອກາດ | 16 |
| | A. | ລະເບີດທີ່ບໍ່ທັນແຕກ | 16 |
| | B. | ຄວາມທຸກຍາກໃນເຂດຊົນນະບົດ | 16 |
| | C. | ກຸ່ມຊົນເຜົ່າສ່ວນໜ້ອຍ | 17 |
| | D. | ບົດບາດຍິງ-ຊາຍ | 18 |
| | E. | ເດັກນ້ອຍ | 18 |
| | F. | ລະບຽບຂອງກົດໝາຍ | 19 |
| VI. | | ອົງການປະຊາສັງຄົມ ເປັນຄູ່ຮ່ວມໃນການພັດທະນາ | 20 |
| VII. | | ຊຸມຊົນອົງການຈັດຕັ້ງສາກົນ ແລະ ຜູ້ປະກອບການຂອງບໍລິສັດຕ່າງໆ | 21 |
| | A. | ອົງການສະຫະປະຊາຊາດ | 21 |
| | B. | ສະຖາບັນການເງິນສາກົນ | 22 |
| | C. | ຂະແໜງທຸລະກິດ | 23 |
| VIII. | | ຂໍ້ສະເໜີແນະທີ່ເປັນບຸລິມະສິດ | 23 |

# I. ພາກສະເໜີ

1. ຜູ້ລາຍງານພິເສດກ່ຽວກັບຄວາມຫຍຸ້ງຍາກທີ່ສຸດ ແລະ ສິດທິມະນຸດທີ່ໄປຢ້ຽມຢາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລະຫວ່າງ ວັນທີ 18 ຫາ 28 ເດືອນມີນາ ປີ 2019. ວັດຖຸປະສົງຂອງການຢ້ຽມຢາມ ແມ່ນເພື່ອລາຍງານຕໍ່ສະພາສິດທິມະນຸດວ່າ ບັນດານະໂຍບາຍ ແລະ ແຜນງານຕ່າງໆ ຂອງລັດຖະບານ ກ່ຽວກັບ ຄວາມທຸກຍາກທີ່ສຸດນັ້ນ ສອດຄ່ອງກັບພັນທະດ້ານສິດທິມະນຸດໄດ້ໃນລະດັບໃດ ແລະ ເພື່ອໃຫ້ຂໍ້ສະເໜີແນະ ແບບສ້າງສັນຕໍ່ລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ. ຜູ້ລາຍງານພິເສດ ຂໍຂອບໃຈມາຍັງລັດຖະບານ ທີ່ ເຊື້ອເຊີນທ່ານມາ ແລະ ອໍານວຍຄວາມສະດວກໃນລະຫວ່າງການຢ້ຽມຢາມ ແລະ ການສືບຕໍ່ມີສ່ວນຮ່ວມ. ບົດລາຍງານສະບັບນີ້ ແມ່ນຍື່ນໂດຍອີງຕາມມະຕິ ເລກທີ 35/19 ຂອງສະພາສິດທິມະນຸດ.[1]

2. ຜູ້ລາຍງານພິເສດ ໄດ້ປຶກສາຫາລື ກັບປະຊາຊົນຜູ້ທີ່ດໍາລົງຊີວິດຢູ່ພາຍໃຕ້ສະພາບຄວາມທຸກຍາກ, ຜູ້ຕາງໜ້າອົງການປະຊາສັງຄົມ ແລະ ບັນດາອົງການສະຫະປະຊາຊາດ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທໍາ ຕ່າງໆ ແລະ ບັນດາສະຖານທູດ. ນອກຈາກນະຄອນຫຼວງວຽງຈັນແລ້ວ, ທ່ານຍັງໄດ້ເດີນທາງໄປແຂວງຈໍາປາສັກ ເພື່ອຢ້ຽມຢາມບ້ານແຫ່ງໜຶ່ງທີ່ມີປະຊາຊົນຍົກຍ້າຍມາຢູ່ ເພື່ອເປີດທາງໃຫ້ແກ່ການສ້າງອ່າງໂຕ່ງຂອງເຂື່ອນໄຟຟ້າ ພະລັງນໍ້າ, ເດີນທາງໄປແຂວງອັດຕະປື ເພື່ອຢ້ຽມຢາມແຄ້ມພັກເຊົາຊົ່ວຄາວ ສໍາຫຼັບຜູ້ລອດຊີວິດຈາກກໍລະນີ ເຂື່ອນເຊປຽນ-ເຊນໍ້ານ້ອຍແຕກ ທັງ 3 ແຫ່ງ ຄື: ຫາດຍາວ, ຕາມະຢອດ ແລະ ດົງບາກ ແລະ ບ້ານທີ່ພັງທະລາຍ ໝົດຍ້ອນເຂື່ອນແຕກ (ບ້ານໃໝ່) ແລະ ໄປແຂວງຫົວພັນ ເຊິ່ງທ່ານໄດ້ໄປຢ້ຽມຢາມ ເມືອງຫົວເມືອງ ແລະ ບ້ານ ຜານາງ, ບ້ານຜາກະຕ່າຍ ແລະ ບ້ານມອນ. ທ່ານໄດ້ໄປຢ້ຽມຢາມໂຮງຮຽນ, ສຸກສາລາ, ໂຮງໝໍ ແລະ ບ່ອນທໍາລາຍ ລະເບີດທີ່ບໍ່ທັນແຕກ ແລະ ພົບກັບນາຍບ້ານ, ນາຍຄູ, ພະນັກງານສາທາລະນະສຸກ ແລະ ຜູ້ຕາງໜ້າສະຫະພັນ ແມ່ຍິງ, ພ້ອມທັງບັນດາພະນັກງານລັດຫຼາຍທ່ານ ຢູ່ຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນສູນກາງ.

3. ໃນຕອນສະຫຼຸບຂອງການຢ້ຽມຢາມ, ຜູ້ລາຍງານພິເສດໄດ້ນໍາສະເໜີສິ່ງທີ່ຄົ້ນພົບຂອງທ່ານຕໍ່ບັນດາ ທ່ານ ຜູ້ຕາງໜ້າຈາກບັນດາກະຊວງ, ຜູ້ທີ່ສົນໃຈເຂົ້າຮ່ວມການສົນທະນາທີ່ມີຜົນ ແລະ ສົນໃຈໃນຂໍ້ສະເໜີແນະແບບ ສ້າງສັນ. ບົດລາຍງານສະບັບນີ້ ປະກອບມີຂໍ້ສະເໜີແນະ ດ້ວຍຄວາມຕັ້ງໃຈທີ່ຈະສະໜັບສະໜູນຄວາມ ພະຍາຍາມທີ່ຢາກເຮັດໃຫ້ສິດທິມະນຸດຂອງປະຊາຊົນຜູ້ທີ່ຢູ່ພາຍໃຕ້ຄວາມທຸກຍາກປະກົດຜົນເປັນຈິງ ແລະ ເພື່ອ ສົ່ງເສີມການພັດທະນາແບບຍືນຍົງ. ບົດລາຍງານນີ້ ຄວນອ່ານຄຽງຄູ່ໄປກັບ ຖະແຫຼງການຂອງຜູ້ລາຍງານພິເສດ ໃນຕອນທ້າຍຂອງການລົງຢ້ຽມຢາມ,[2] ເນື່ອງຈາກວ່າ ຂໍ້ສະເໜີແນະຫຼາຍຂໍ້ທີ່ລະບຸໃນບົດລາຍງານນີ້ ແມ່ນອີງໃສ່ ລາຍລະອຽດຂອງສິ່ງຄົ້ນພົບ ແລະ ຫຼັກຖານອ້າງອີງທີ່ສະໜັບສະໜູນ ທີ່ລວມຢູ່ໃນຖະແຫຼງການດັ່ງກ່າວ ເຊິ່ງບໍ່ ໄດ້ນໍາມາກ່າວລົ້ມຄືນໃນບົດລາຍງານນີ້ ຍ້ອນຂໍ້ຈໍາກັດດ້ານກໍານົດຄວາມຍາວ (ຈໍານວນຄໍາ) ຂອງບົດ.

4. ໃນດ້ານການຫຼຸດຜ່ອນຄວາມທຸກຍາກ, ມີຫຼາຍຢ່າງທີ່ຈະສະເໜີແນະ. ປະເທດກໍ່ເຮັດໄດ້ດີຫຼາຍຢ່າງໜ້າ ປະທັບໃຈ ໃນການຫຼຸດຜ່ອນຈໍານວນຜູ້ທີ່ດໍາລົງຊີວິດພາຍໃຕ້ເສັ້ນລະດັບຄວາມທຸກຍາກສາກົນ. ອັດຕາສ່ວນຂອງ ຜູ້ທີ່ດໍາລົງຊີວິດໂດຍມີເງິນໃຊ້ຈ່າຍໜ້ອຍກວ່າ 1.90 ໂດລາສະຫະລັດ ຕໍ່ມື້ໄດ້ຫຼຸດລົງຈາກ 52.4 ສ່ວນຮ້ອຍ ໃນປີ 1997 ເປັນ 22.7 ສ່ວນຮ້ອຍ ໃນປີ 2012, ເຊິ່ງສະແດງໃຫ້ເຫັນໃນຂໍ້ມູນໃໝ່ຫຼ້າສຸດທີ່ມີ.[3] ອັດຕາການເຂົ້າຮຽນ ສຸດທິຊັ້ນມັດທະຍົມ ເພີ່ມຂຶ້ນຈາກ 27 ສ່ວນຮ້ອຍ ໃນປີ 2002 ເປັນ 50 ສ່ວນຮ້ອຍ ໃນປີ 2012.[4] ອັດຕາການ ຕາຍຂອງແມ່ຍິງ ຍ້ອນສາເຫດທີ່ກ່ຽວຂ້ອງກັບການຖືພາ ຫຼຸດລົງເຄິ່ງໜຶ່ງລະຫວ່າງຕົວເລກປີ 2005 ແລະ 2015,[5]

---

[1] ຜູ້ລາຍງານພິເສດ ສະແດງຄວາມຮູ້ບຸນຄຸນມາຍັງການສຶກສາຄົ້ນຄວ້າ ແລະ ວິໄຈທີ່ດີເລີດ ຂອງ ທ່ານ ບາຊາມ ຄາວາຈາ, ທ່ານ ນາງ ຣີແບັກກາ ຣິດແດລ ແລະ ພະນັກງານຫ້ອງການຂອງຄະນະກໍາມາທິການໃຫຍ່ດ້ານສິດທິມະນຸດ ຂອງອົງການສະຫະປະ ຊາຊາດ (the Office of the United Nations High Commissioner for Human Rights (OHCHR)8.

[2] ຄັດຈາກ: www.ohchr.org/EN/NewsEvents/Pages/DisplayNews.aspx? NewsID= 24417& LangID=E.

[3] ອົງການທະນາຄານໂລກ, "ຖານຂໍ້ມູນກ່ຽວກັບຄວາມທຸກຍາກ ແລະ ຄວາມສະເໝີພາບ ຂອງ ສາທາລະນະລັດ ປະຊາທິປະ ໄຕ ປະຊາຊົນລາວ". ຄັດຈາກ http://povertydata.worldbank.org/poverty/country/LAO.

[4] ອົງການທະນາຄານໂລກ, "ເອກະສານນະໂຍບາຍວ່າດ້ວຍຄວາມທຸກຍາກ ຂອງ ສປປ ລາວ: ປັດໄຈຜັກດັນ ສໍາລັບການຫຼຸດ ຜ່ອນຄວາມທຸກຍາກ ໃນສປປ ລາວ ເດືອນຕຸລາ ປີ 2015, ໜ້າ 9. ຄັດຈາກ http://documents.worldbank.org/curated/en/590861467722637341/pdf/101567-REPLACENENT-PUBLIC-Lao-PDR-Poverty-Policy-Notes-Drivers-of-Poverty-Reduction-in-Lao-PDR.pdf.

[5] Jonna P. Estudillo (East-West Center), "ແຜນງານຂອງລັດຖະບານ ໄດ້ເລີ່ມຕົ້ນ ເພື່ອຫຼຸດຜ່ອນອັດຕາການຕາຍ ຂອງ ແມ່ ໃນ ສປປ ລາວ: ບັດນີ້ ຈະເຮັດຫຍັງຕໍ່ໄປ?", ວັນທີ 30 ເດືອນມີນາ ປີ 2018. ຄັດຈາກ

ແລະ ເຖິງຢ່າງນັ້ນ 33 ສ່ວນຮ້ອຍ ຂອງເດັກອາຍຸລຸ່ມ 5 ປີ ຍັງມີສະພາບຂາດສານອາຫານແບບເຕັ້ຍ ເຊິ່ງຫຼຸດລົງຈາກ 44 ສ່ວນຮ້ອຍ ໃນປີ 2012.[6] ລັດຖະບານໄດ້ສ້າງຕັ້ງກອງທຶນຫຼຸດຜ່ອນຄວາມທຸກຍາກ, ເຊິ່ງສຸມໃສ່ການພັດທະນາບ້ານທຸກຍາກທີ່ສຸດ.[7] ການພັດທະນາດັ່ງກ່າວໄດ້ບັນລຸຜົນ ເຖິງແມ່ນວ່າ ຢູ່ເຂດຊົນນະບົດເຫຼົ່ານັ້ນ ຈະມີລະເບີດທີ່ບໍ່ທັນແຕກຕົກຄ້າງມາເປັນເວລາດົນນານແລ້ວກໍ່ຕາມ ເຊິ່ງເປັນລະເບີດທີ່ສະຫະລັດອາເມລິກາເຄີຍຖິ້ມໃສ່ ໃນລະຫວ່າງ ປີ 1964 ແລະ 1973 ເຊິ່ງມີສ່ວນເຮັດໃຫ້ມີຄວາມທຸກຍາກ ແລະ ເຖິງແມ່ນວ່າ ຈະເຄີຍໄດ້ຮັບຜົນຮ້າຍຈາກຈັກກະພັດພວກລ່າເມືອງຂຶ້ນໃນສະໄໝກ່ອນກໍ່ຕາມ.

5. ການຍົກສູງຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ພົ້ນຈາກລະດັບລາຍຮັບຕໍ່າສຸດ ຕ້ອງເປັນຈຸດເລີ່ມຕົ້ນ ບໍ່ແມ່ນຈຸດສິ້ນສຸດຂອງຄວາມພະຍາຍາມຂອງລັດຖະບານ ແລະ ການຂະຫຍາຍຕົວທີ່ໄວວາດ້ານເສດຖະກິດ ຂອງປະເທດ ບໍ່ໄດ້ນໍາໄປສູ່ການຫຼຸດຜ່ອນຄວາມທຸກຍາກທີ່ສົມຄູ່ກັນ. ໜ້າເສຍດາຍ ຜູ້ທີ່ຫຼຸດພົ້ນຈາກຄວາມທຸກຍາກໄດ້ຢ່າງເປັນທາງການນັ້ນ ຈໍານວນຫຼາຍ ກໍ່ຍັງຄົງຢູ່ໃນລະດັບທີ່ໃກ້ຄຽງກັບເສັ້ນຄວາມທຸກຍາກ ຫຼື ຕົກຢູ່ພາຍໃຕ້ເສັ້ນຄວາມທຸກຍາກຄືນອີກ. ໃນປີ 2012, 80 ສ່ວນຮ້ອຍ ຂອງປະຊາຊົນ ຍັງດໍາລົງຊີວິດໃນສະພາບທີ່ມີລາຍຮັບຕໍ່າກວ່າ 2.50 ຕໍ່ມື້.[8] 80 ສ່ວນຮ້ອຍ ຂອງເດັກນ້ອຍປະສົບກັບຄວາມຂາດເຂີນໃນບາງຮູບແບບ ເຊິ່ງມີຜົນຕາມມາທີ່ຮ້າຍແຮງ ຕໍ່ຜະລິດຕະພາບ ແລະ ການເຂົ້າຮ່ວມທາງສັງຄົມຂອງພວກເຂົາ ໃນໄລຍະຍາວ.[9] ມີອັດຕາສ່ວນຂອງການຫຼຸດຜ່ອນຄວາມທຸກຍາກ ກັບການຂະຫຍາຍຕົວດ້ານເສດຖະກິດຂອງປະເທດ ຕໍ່າກວ່າປະເທດອື່ນໆໃນພາກພື້ນ ແລະ ຄວາມບໍ່ສະເໝີພາບກໍ່ກໍາລັງເພີ່ມຂຶ້ນ.[10]

6. ບັນຫາສ່ວນໜຶ່ງ ແມ່ນຂຶ້ນກັບຍຸດທະສາດຂອງລັດຖະບານ ໃນການບັນລຸການຂະຫຍາຍຕົວດ້ານເສດຖະກິດໂດຍລວມ, ເຊິ່ງສ່ວນຫຼາຍຈະຈັດຕັ້ງປະຕິບັດຕາມຄໍາແນະນໍາຂອງຄູ່ຮ່ວມສາກົນ. ຈຸດສຸມສ່ວນໃຫຍ່ແມ່ນເລັ່ງໃສ່ໂຄງການກໍ່ສ້າງພື້ນຖານໂຄງລ່າງຂະໜາດໃຫຍ່ ເຊັ່ນ: ເຂື່ອນໄຟຟ້າພະລັງນໍ້າ ແລະ ເສັ້ນທາງລົດໄຟ, ການຂຸດຄົ້ນຊັບພະຍາກອນ ແລະ ສິ່ງຈູງໃຈສໍາລັບການລົງທຶນຂອງຕ່າງປະເທດ ໄດ້ເອື້ອປະໂຫຍດໃຫ້ແກ່ກຸ່ມຄົນຊັ້ນສູງທີ່ຮັ່ງມີເປັນສ່ວນຫຼາຍແບບບໍ່ສົມສ່ວນ ແລະ ເຮັດໃຫ້ປະເທດຕ້ອງແບກຫາບພັນທະການຈ່າຍແທນຄືນໜີ້ສິນກ້ອນໃຫຍ່, ເຊິ່ງບໍ່ໄດ້ເຮັດໃຫ້ລາຍຮັບແຫ່ງຊາດທີ່ສໍາຄັນເພີ່ມຂຶ້ນເທົ່າທີ່ຄວນ ຫຼື ບໍ່ໄດ້ສ້າງການມີວຽກເຮັດງານທໍາໃຫ້ແກ່ຄົນລາວໃຫ້ຫຼາຍເທົ່າທີ່ຄວນ. ເມື່ອບໍ່ມີການລົງທຶນໃສ່ການສຶກສາ, ສາທາລະນະສຸກ ແລະ ລະບົບການປົກປ້ອງທາງສັງຄົມໃຫ້ເຂັ້ມແຂງ ເຊິ່ງຈະສະໜັບສະໜູນຄົນຈໍານວນຫຼາຍ ທີ່ອາດຖືກປະຖິ້ມໄວ້ເບື້ອງຫຼັງຈາກເສດຖະກິດຂ້າມຜ່ານ, ປະຊາຊົນໃນອັດຕາສ່ວນຫຼາຍທີ່ສຸດຈິ່ງໄດ້ຮັບຜົນປະໂຫຍດໜ້ອຍທີ່ສຸດ ຈາກການເຕີບໂຕດ້ານເສດຖະກິດ.

7. ອຸປະສັກຕ່າງໆທີ່ມີຢູ່ໃນໂຄງສ້າງກົງຈັກທີ່ຍັງຄົງມີຕະຫຼອດມາ ເປັນການກີດຂວາງປະຊາຊົນທີ່ຢູ່ໃນຄວາມທຸກຍາກ, ໂດຍສະເພາະຜູ້ທີ່ຢູ່ຊົນນະບົດຫ່າງໄກສອກຫຼີກ ແລະ ຜູ້ທີ່ເປັນກຸ່ມຊົນເຜົ່າ ເຮັດໃຫ້ສິດທິມະນຸດຂອງພວກເຂົາບໍ່ປະກົດຜົນເປັນຈິງໄດ້ຢ່າງເຕັມສ່ວນ. ເຖິງແມ່ນວ່າລັດຖະບານໄດ້ຮັບຮອງເອົາບັນດາລະບຽບກົດໝາຍ ແລະ ຜັນຂະຫຍາຍບັນດານະໂຍບາຍທີ່ໜ້າປະທັບໃຈຫຼາຍສະບັບ ແຕ່ສ່ວນຫຼາຍກໍ່ຍັງຂາດການຈັດຕັ້ງປະຕິບັດທີ່ມີຄວາມໝາຍ. ບັນດາອົງການຈັດຕັ້ງສາກົນ ເຊິ່ງມີບົດບາດຕົ້ນຕໍໃນການໃຫ້ຄໍາແນະນໍາ ແລະ ໃຫ້ທຶນແກ່ລັດຖະບານ ກໍ່ຍັງບໍ່ໄດ້ພະຍາຍາມຢ່າງເຕັມທີ່ ໃນການຮັບປະກັນວ່າ ການຂະຫຍາຍຕົວດ້ານເສດຖະກິດນັ້ນ

www.eastwestcenter.org/publications/government-programs-have-begun-reduce-maternal-deaths-in-lao-pdr-now-what-comes-next.

6 ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສູນສະຖິຕິແຫ່ງຊາດ, “ການສໍາຫຼວດດັດຊະນີສັງຄົມຂອງລາວ ຄັ້ງທີ II: ບົດລາຍງານສິ່ງທີ່ຄົ້ນພົບຂອງການສໍາຫຼວດ, ປີ 2018, ໜ້າ 17 ແລະ 36. ຄັດຈາກwww.unicef.org/eap/sites/unicef.org.eap/files/2018 -06/Summary%20Survey%20Findings%20Report%20an%20statistical%20snapshots %20of%20Lao%20Social%20Indicator%20Survey%20II.pdf.

7 ການພົບປະປະຊຸມກັບ ກອງທຶນຫຼຸດຜ່ອນຄວາມທຸກຍາກ, ວັນທີ 25 ເດືອນມີນາ ປີ 2019.

8 ອົງການທະນາຄານໂລກ, “ເອກະສານນະໂຍບາຍຫຼຸດຜ່ອນຄວາມທຸກຍາກ ຂອງ ສປປ ລາວ”, ໜ້າ 9.

9 ອົງການສະຫະປະຊາຊາດ ກອງທຶນເພື່ອເດັກ (United Nations Children’s Fund (UNICEF)) ແລະ ກະຊວງແຜນການ ແລະ ການລົງທຶນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, *SDGs ແລະ ເດັກ: ການວັດແທກ ຄວາມຄືບໜ້າດ້ານສະຫັວດດີພາບຂອງເດັກ ໃນ ສປປ ລາວ* (ບົດລາຍງານເບື້ອງຕົ້ນ, 2018), ໜ້າ 12.

10 ອົງການທະນາຄານໂລກ, ພາບລວມກ່ຽວກັບຄວາມທຸກຍາກ ໃນສປປ ລາວ: ບົດລາຍງານຄວາມທຸກຍາກ ສໍາລັບການສໍາຫຼວດການຊົມໃຊ້ ແລະ ລາຍຈ່າຍ ຂອງປະເທດລາວ ສົກປີ 2012–2013”, ໜ້າ 8. ຄັດຈາກhttp://documents.worldbank.org/curated/en/868521467998508506/pdf/100120-WP-P146141-PUBLIC-Box393225B-Poverty-Profile-in-Lao-PDR-publication-version-12-19-14.pdf.

ເລັ່ງໃສ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນລາວສ່ວນຫຼາຍ ມີແຕ່ເຮັດວຽກ ພຽງແຕ່ໃຫ້ສຳເລັດບັນດາກິດຈະກຳ ແລະ ບັນລຸຄາດໝາຍຂອງຕົນເທົ່ານັ້ນ.

8. ບໍ່ຈຳເປັນຈະຕ້ອງໄປຕາມທິດທາງນີ້. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດທີ່ຮັ່ງມີທາງດ້ານຊັບພະຍາກອນທຳມະຊາດ, ມີພົນລະເມືອງທີ່ໜຸ່ມນ້ອຍ ທີ່ມີຄວາມຫຼາກຫຼາຍ. ຜູ້ລາຍງານພິເສດໄດ້ພົບປະກັບຄົນລາວ ຜູ້ທີ່ມີຄວາມຍຶດໝັ້ນສູງຕໍ່ການປັບປຸງຊີວິດການເປັນຢູ່ຂອງທຸກຄົນ, ແຕ່ຍັງພົບຄວາມຫຍຸ້ງຍາກໃນການດຳເນີນງານໃນສະພາບແວດລ້ອມໂດຍລວມ ທີ່ມີຢູ່ຂ້ອນຂ້າງຈຳກັດ, ໃນຂະນະທີ່ໃຫ້ການບໍລິການສາທາລະນະສຸກ, ການສຶກສາ ແລະ ດ້ານອື່ນໆໃນເຂດຫ່າງໄກສອກຫຼີກ ໂດຍມີຊັບພະຍາກອນຢ່າງຈຳກັດ ແລະ ໄດ້ຮັບຄ່າຕອບແທນທີ່ບໍ່ແນ່ນອນ. ທ່ານໄດ້ລົມກັບຜູ້ທີ່ເຮັດວຽກຢ່າງບໍ່ຮູ້ອິດເມື່ອຍ ໃນການສະໜັບສະໜູນຄອບຄົວ ແລະ ຊຸມຊົນຂອງພວກເຂົາ ແລະ ໄດ້ພົບປະກັບພະນັກງານລັດຈຳນວນຫຼາຍທ່ານ ຜູ້ທີ່ເຫັນໄດ້ຢ່າງຈະແຈ້ງວ່າມີຄວາມເສຍສະຫຼະ ແລະ ກະຕືລືລົ້ນທີ່ຈະຊອກຫາວິທີທີ່ມີປະສິດທິຜົນ. ຖ້າຫາກວ່າ ສາມາດຊຸກຍູ້ລັດຖະບານໃຫ້ຮັບຮອງເອົາບັນດານະໂຍບາຍດ້ານຄວາມໂປ່ງໃສ ແລະ ການມີສ່ວນຮ່ວມຢ່າງມີ ຄວາມໝາຍ ແລະ ເຂົ້າຮ່ວມໃນການປຶກສາຫາລືກັບມວນຊົນຢ່າງແທ້ຈິງ, ຄົງຈະສາມາດບັນລຸໄດ້ຫຼາຍ ໃນການສົ່ງເສີມການພັດທະນາແບບຍືນຍົງ ແລະ ການລຶບລ້າງຄວາມທຸກຍາກ.

9. ເປັນການພັດທະນາທີ່ສຳຄັນ ທີ່ລັດຖະບານໄດ້ເລີ່ມຕົ້ນເຂົ້າມີສ່ວນຮ່ວມກັບກົນໄກດ້ານສິດທິມະນຸດສາກົນ ແລະ ສົ່ງບັດເຊີນໃຫ້ຜູ້ລາຍງານພິເສດມາ ຫຼັງຈາກທີ່ປະຫວ່າງມາດົນ. ຜູ້ລາຍງານພິເສດ ກໍ່ມີຄວາມກະຕືລືລົ້ນທີ່ໄດ້ຮັບຟັງວ່າ ລັດຖະບານວາງແຜນການເຊື້ອເຊີນຜູ້ທີ່ມີພາລະບົດບາດຮັບຜິດຊອບຂັ້ນຕອນພິເສດ ໃຫ້ມາຢ້ຽມຢາມແຕ່ລະປີ ແລະ ເພື່ອຮຽນຮູ້ຈາກຫ້ອງວ່າການສຳນັກງານນາຍົກວ່າ ປະເທດພວມພະຍາຍາມທີ່ຈະບັນລຸຕາມສົນທິສັນຍາສາກົນ ວ່າດ້ວຍການປົກປ້ອງທຸກຄົນຈາກການຫາຍໂຕແບບຖືກບັງຄັບ ແລະ ສົນທິສັນຍາສາກົນວ່າດ້ວຍການປົກປ້ອງສິດທິຂອງແຮງງານເຄື່ອນຍ້າຍ ແລະ ສະມາຊິກຄອບຄົວຂອງພວກເຂົາທຸກຄົນ. ລັດຖະບານ ຄວນປະຕິບັດຕາມບາດກ້າວເຫຼົ່ານັ້ນ, ເຊິ່ງຈະເປັນການສະແດງອອກທີ່ສຳຄັນ ເຖິງຄວາມຍຶດໝັ້ນຕໍ່ສິດທິມະນຸດ ແລະ ຖ້າເຮັດໄດ້ແນວນັ້ນ ກໍ່ຄວນຈະໄດ້ຮັບຄວາມເຊື່ອໝັ້ນຢ່າງແທ້ຈິງຈາກຊຸມຊົນສາກົນ. ລັດຖະບານກໍ່ຄວນສ້າງສະຖາບັນແຫ່ງຊາດດ້ານສິດທິມະນຸດ ເຊິ່ງປະຕິບັດຕາມບັນດາຫຼັກການທີ່ກ່ຽວຂ້ອງກັບສະຖານະຂອງສະຖາບັນແຫ່ງຊາດ ເພື່ອການສົ່ງເສີມ ແລະ ປົກປ້ອງສິດທິມະນຸດ ຢ່າງເຕັມສ່ວນ (ບັນດາຫຼັກການປາຣີສ).

# II. ການເຂົ້າເຖິງຂໍ້ມູນຂ່າວສານ

10. ການຂາດເຂີນການເຂົ້າເຖິງຂໍ້ມູນຂ່າວສານ ຄຽງຄູ່ກັບມີການຈຳກັດເສລີພາບໃນການອອກສຽງ, ເປັນອຸປະສັກອັນໃຫຍ່ຫຼວງຕໍ່ການພັດທະນາແບບຍືນຍົງ, ຄວາມເປັນເຈົ້າຂອງຂອງປະຊາຊົນລາວຕໍ່ຊັບພະຍາກອນທຳມະຊາດຂອງປະເທດ ແລະ ການເຮັດໃຫ້ສິດທິມະນຸດປະກົດຜົນເປັນຈິງ. ລັດຖະບານ ແລະ ຄູ່ຮ່ວມສາກົນບໍ່ສາມາດແກ້ໄຂຄວາມທຸກຍາກໄດ້ ໂດຍປັດສະຈາກຄວາມເຂົ້າໃຈອັນຖືກຕ້ອງ ກ່ຽວກັບສິ່ງທ້າທາຍຕ່າງໆທີ່ປະຊາຊົນລາວປະເຊີນ, ແຕ່ການເກັບກຳຂໍ້ມູນທີ່ມີຢ່າງຈຳກັດ ແລະ ການຂາດຄວາມໂປ່ງໃສ ເຮັດໃຫ້ເປັນການຍາກທີ່ຈະປະເມີນລະດັບຄວາມທຸກຍາກໃນປັດຈຸບັນໄດ້ຢ່າງຖືກຕ້ອງຊັດເຈນ, ເຊິ່ງນຳໄປສູ່ບັນດາແຜນງານ ທີ່ໄດ້ຮັບການອອກແບບໂດຍອີງໃສ່ຂໍ້ມູນທີ່ມີຢ່າງຈຳກັດ, ຫຼ້າສະໄໝ ແລະ ບາງຄັ້ງກໍ່ເປັນຂໍ້ມູນທີ່ບິດເບືອນ. ບັນດາອົງການຈັດຕັ້ງທີ່ເປັນເອກະລາດ ໄດ້ຕັ້ງຄຳຖາມກ່ຽວກັບຄວາມໜ້າເຊື່ອຖືຂອງຕົວເລກຂໍ້ມູນທາງການ ເຊິ່ງຊີ້ໃຫ້ເຫັນວ່າ ເປັນການຕອບຮັບກັບສິ່ງຄົ້ນພົບຕົວຈິງຂອງພວກເຂົາ, ແຕ່ວ່າ ລັດຖະບານກໍ່ບໍ່ໄດ້ສະແດງຄວາມສົນໃຈ ເພື່ອແກ້ໄຂຄວາມແຕກຕ່າງດ້ານຂໍ້ມູນດັ່ງກ່າວ. ບັນຫາເຫຼົ່ານັ້ນ ຖືກຫ້າມເຜີຍແຜ່ບາງສ່ວນ (ເຊັນເຊີບາງສ່ວນ) ໃນໂຕຂອງມັນເອງ ໂດຍລັດຖະບານຊຸກຍູ້ໃຫ້ເປັນແບບນັ້ນ, ເຊິ່ງເຮັດໃຫ້ການສົນທະນາ ແລະ ສິ່ງທີ່ຄົ້ນພົບທີ່ສຳຄັນນັ້ນຍັງຄົງເຊື່ອງຊ້ອນຢູ່ໃນຄວາມມືດ.

11. ລັດຖະບານ ຄວນອອກຄຳສັ່ງໃນລະດັບສູງສຸດວ່າ ໃຫ້ຖືເປັນບຸລິມະສິດການເກັບກຳ ແລະ ເຜີຍແຜ່ຂໍ້ມູນທີ່ທັນກັບສະພາບການໃໝ່ ແລະ ທີ່ໜ້າເຊື່ອຖືໄດ້, ລວມທັງ ຮຽກຮ້ອງວ່າ ຂໍ້ມູນຕົວເລກ ທີ່ເກັບກຳນັ້ນ ຕ້ອງແມ່ນບົນພື້ນຖານຄວາມສະເໝີຕົ້ນສະເໝີປາຍ ແລະ ເຂັ້ມງວດກວ່າເກົ່າ ແລະ ມີໄວ້ເພື່ອເຜີຍແຜ່ຕໍ່ມວນຊົນ ແລະ ຢ່າງໄວວາ. ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ຄວາມໂປ່ງໃສຊ່ວຍໃຫ້ພະນັກງານລັດຕັດສິນໃຈໂດຍອີງໃສ່ຫຼັກຖານຢັ້ງຢືນ, ຫຼຸດຜ່ອນການສໍ້ລາດບັງຫຼວງ, ເພີ່ມຄວາມເຊື່ອໝັ້ນຂອງມວນຊົນ ແລະ ສ້າງຄວາມເຂັ້ມແຂງດ້ານອຳນາດ

ໃຫ້ແກ່ບຸກຄົນ. ການລິເລີ່ມໃໝ່ ໃນການສະໜອງການເຂົ້າເຖິງຂໍ້ມູນຂ່າວສານທາງອອນລາຍ ແມ່ນມີທ່າອ່ຽງທີ່ດີ ແລະ ຄວນຈະຂະຫຍາຍ. ລັດຖະບານ ຄວນຮັບປະກັນວ່າ ປະຊາຊົນໄດ້ຮັບຂໍ້ມູນຂ່າວສານ ແລະ ສາມາດສ້າງຂໍ້ມູນ ແລະ ແບ່ງປັນຂໍ້ມູນຢ່າງມີອິດສະຫຼະ ແລະ ມີຄວາມເພິ່ງພໍໃຈໃນການໃຊ້ສິດທິໃນການອອກສຽງຢ່າງເປັນອິດສະຫຼະ ດັ່ງທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນລາວ ແລະ ກົດໝາຍສາກົນວ່າດ້ວຍສິດທິມະນຸດ. ສິ່ງນີ້ອາດລວມເຖິງການໃຫ້ການສະໜັບສະໜູນ ບັນດາກິດຈະກໍາ ເຊັ່ນ: ພົນລະເມືອງວາລະສານສາດ (citizen journalism), ການສໍາຫຼວດຄໍາຄິດເຫັນ ແລະ ການໂຕ້ວາທີຂອງມວນຊົນ, ສູນການຮຽນຮູ້ຂອງຊຸມຊົນ, ການແປ ແລະ ການເຂົ້າຮ່ວມໃນກອງປະຊຸມ, ການຝຶກອົບຮົມໃຫ້ຜູ້ຂຽນບລັອກ (bloggers), ການແຂ່ງຂັນຂອງໂຮງຮຽນ ແລະ ການໄປແລກປ່ຽນຂອງຊາວໜຸ່ມ. ປະຊາຊົນຜູ້ໄດ້ຮັບຂໍ້ມູນຂ່າວສານ ທີ່ເຂົ້າຮ່ວມໃນບັນດາກິດຈະກໍາທີ່ຕັ້ງໃຈຈັດຕັ້ງຂຶ້ນມານັ້ນ ຈະສາມາດປະກອບສ່ວນໄດ້ຫຼາຍຂຶ້ນເຂົ້າໃນການພັດທະນາທີ່ຍືນຍົງ.

12. ຊຸມຊົນອົງການສາກົນ ຕ້ອງສະໜັບສະໜູນລັດຖະບານ ດ້ວຍຄວາມຊ່ຽວຊານ ແລະ ດ້ວຍຊັບພະຍາກອນ ທີ່ຈໍາເປັນ ເພື່ອເພີ່ມການເກັບກໍາຂໍ້ມູນ ແລະ ຄວາມໂປ່ງໃສຢ່າງເປັນລະບົບ, ລວມທັງ ຜ່ານການສະໜັບສະໜູນ ຖານຂໍ້ມູນອອນລາຍ ແລະ ໂພຕອລ (portals) ທີ່ເປັນເອກະລາດ. ຝ່າຍອົງການສາກົນຕ່າງໆ ກໍ່ຄວນເຜີຍແຜ່ຂໍ້ມູນ ແລະ ການສຶກສາຄົ້ນຄວ້າຂອງຕົນສູ່ມວນຊົນຢ່າງສະໝໍ່າສະເໝີ. ໄດ້ແບ່ງປັນ ແລະ ພົນລະນາກ່ຽວກັບບັນດາບົດຄົ້ນຄວ້າວິໄຈ ແລະ ບົດລາຍງານທີ່ມີຄຸນນະພາບສູງ ແຕ່ວ່າຍັງບໍ່ໄດ້ຈັດພິມເຜີຍແຜ່ກັບຜູ້ລາຍງານພິເສດແບບປິດລັບ ເຊິ່ງບົດເຫຼົ່ານັ້ນ ລວມມີບັນດາຂໍ້ມູນຂ່າວສານທີ່ມີຄຸນຄ່າ ແຕ່ອາດຈະບໍ່ມີມື້ໄດ້ຮັບການເຜີຍແຜ່ເລີຍ ແລະ ບໍ່ສາມາດອ້າງອີງເຖິງອີກດ້ວຍ. ບາງອົງການຈັດຕັ້ງທີ່ໂດດເດັ່ນ ປະຕິເສດບໍ່ຢາກເຜີຍແຜ່ຂໍ້ມູນຂ່າວສານທີ່ສໍາຄັນຕໍ່ມວນຊົນ ເຖິງແມ່ນວ່າຈະສະເໜີຂໍແລ້ວຫຼາຍເທື່ອກໍ່ຕາມ. ບັນດາອົງການຈັດຕັ້ງສາກົນຄວນພິຈາລະນາຄືນຢ່າງຈິງຈັງ ກ່ຽວກັບບົດຮຽນທີ່ຖອດຖອນໄດ້ກ່ຽວກັບປະເດັນການຈໍາກັດຄົນລາວບໍ່ໃຫ້ເຂົ້າເຖິງຂໍ້ມູນຂ່າວສານທີ່ມີຄຸນຄ່າ ແລະ ເປັນຂໍ້ມູນຂ່າວສານທີ່ເປັນກາງແບບເອກະລາດ, ໂດຍສະເພາະຢູ່ໃນປະເທດທີ່ຍັງເປັນອັນດັບທີ 170 ໃນຈໍານວນ 180 ປະເທດ ໃນດ້ານດັດຊະນີໝາຍຂອງຄວາມມີອິດສະຫຼະດ້ານສື່ສານມວນຊົນໂລກ (the World Press Freedom Index) ທີ່ຈັດອັນດັບໃນປີ 2018.

## III. ການຫັນເອົາການຂະຫຍາຍຕົວດ້ານເສດຖະກິດໄປສູ່ການຫຼຸດຜ່ອນຄວາມທຸກຍາກ

13. GDP ທີ່ເພີ່ມຂຶ້ນຢ່າງໜ້າປະທັບໃຈນັ້ນ ຍັງບໍ່ໄດ້ຫັນປ່ຽນໄປສູ່ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນສ່ວນຫຼາຍ ຢ່າງເໝາະສົມເທື່ອ. ປັດໄຈຕ່າງໆທີ່ປະກອບສ່ວນຍັງຄົງແມ່ນຄວາມທຸກຍາກແບບຕໍ່ເນື່ອງ ແລະ ຈໍາກັດໂອກາດການນໍາໃຊ້ສິດທິມະນຸດຂອງປະຊາຊົນຜູ້ທຸກຍາກເຫຼົ່ານັ້ນ ລວມມີງົບປະມານທີ່ບໍ່ຈະແຈ້ງ, ລາຍຈ່າຍຂອງລັດທີ່ບໍ່ພຽງພໍ ໃສ່ການບໍລິການດ້ານສັງຄົມທີ່ສໍາຄັນ ເຊັ່ນ: ການສຶກສາ ແລະ ສາທາລະນະສຸກ, ການສູນເສຍລາຍຮັບແຫ່ງລັດ ຍ້ອນການອານຸຍາດໃຫ້ຍົກເວັ້ນອາກອນແບບໃຈກວ້າງເກີນໄປໃຫ້ແກ່ບໍລິສັດ ແລະ ຍ້ອນການສໍ້ລາດບັງຫຼວງ, ລະບົບອາກອນແບບຫຼຸດຖອຍລົງ ເຊິ່ງເປັນພາລະທີ່ບໍ່ເທົ່າທຽມກັນ ສໍາລັບຜູ້ທຸກຍາກ ແລະ ພາໃຫ້ມີໜີ້ສິນເພີ່ມຂຶ້ນເຊິ່ງສ່ວນຫຼາຍກໍ່ເປັນໜີ້ສິນທີ່ບໍ່ເປີດເຜີຍ. ບັນດາໂຄງການກໍ່ສ້າງໂຄງລ່າງພື້ນຖານຂະໜາດໃຫຍ່ ສ່ວນຫຼາຍມີຜົນສະທ້ອນທາງລົບ ແລະ ເຖິງຂັ້ນວ່າເພີ່ມຄວາມທຸກຍາກໃຫ້ແກ່ປະຊາຊົນທີ່ໄດຮັບຜົນສະທ້ອນໂດຍກົງ. ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຄົ້ນພົບວ່າ ເຖິງແມ່ນວ່າການຂະຫຍາຍຕົວຂອງ GDP ຈະສູງກວ່າບັນດາປະເທດເພື່ອນມິດຂອງຕົນ ແຕ່ວ່າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍ່ມີອັດຕາການຫຼຸດຜ່ອນຄວາມທຸກຍາກທີ່ຕໍ່າກວ່າ, ສ່ວນໜຶ່ງກໍ່ແມ່ນຍ້ອນການເອື່ອຍອີງໃສ່ແຕ່ການລົງທຶນໂດຍກົງຂອງຕ່າງປະເທດ ແລະ ຂະແໜງຊັບພະຍາກອນທໍາມະຊາດ[11]. ລັດຖະບານໄດ້ສຸມຄວາມພະຍາຍາມຂອງຕົນໃສ່ການຫຼຸດພົ້ນອອກຈາກການເປັນປະເທດດ້ອຍພັດທະນາ, ເຊິ່ງໃນຕົວມັນເອງກໍ່ຈະບໍ່ແກ້ໄຂສິ່ງທ້າທາຍໃນລະດັບໂຄງສ້າງແຕ່ຢ່າງໃດ. ໃນຕົວຈິງແລ້ວ, ການຫຼຸດພົ້ນດັ່ງກ່າວ ຈະເປັນຂີດໝາຍສິ້ນສຸດການເຂົ້າເຖິງການຊ່ວຍເຫຼືອ ແລະ ສິດທິພິເສດດ້ານການຄ້າບາງຢ່າງ, ເຊິ່ງອາດເຮັດໃຫ້ສະຖານະການຂອງຜູ້ທຸກຍາກຍິ່ງຊຸດໂຊມລົງກວ່າເກົ່າ.[12]

---

[11] ໜັງສືພິມ *The Phnom Penh Post*, "ຍັງມີຄວາມທຸກຍາກໃນລາວເຖິງວ່າຈະມີການຂະຫຍາຍຕົວດ້ານເສດຖະກິດ", ວັນທີ 2 ເດືອນເມສາ ປີ 2019. ຄັດຈາກ www.phnompenhpost.com/business/poverty-persisting-laos-despite-economic-growth.

[12] ອົງການສະຫະປະຊາຊາດ, ຄະນະກໍາມະການດ້ານນະໂຍບາຍການພັດທະນາ, ການປະເມີນຜົນກະທົບ: ແມ່ນຫຍັງເກີດຂຶ້ນເມື່ອປະເທດໃດໜຶ່ງ ພົ້ນຈາກການເປັນປະເທດດ້ອຍພັດທະນາ?". ຄັດຈາກ www.un.org/ldcportal/impact-assessments-what-happens-when-a-country-graduates-from-the-ldc-category.

ຄວນຈະສຸມການໂຕ້ຖຽງໃສ່ການຮັບປະກັນໃຫ້ມີຜົນສຳເລັດ ໃນການຫຼຸດຜ່ອນຄວາມທຸກຍາກຢ່າງເປັນຮູບປະທຳ, ແທນທີ່ຈະແມ່ນເພື່ອຕອບສະໜອງຕາມຕົວຊີ້ວັດທີ່ເປັນນາມມະທຳ.

14. ໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ສະບັບທີ 9 ທີ່ຈະມາເຖິງ ໃນໄລຍະປີ 2021-2025, ລັດຖະບານ ຄວນເປີດກວ້າງຮັບເອົາຍຸດທະສາດການເຕີບໂຕ, ການຈັດສັນງົບປະມານ ແລະ ນະໂຍບາຍກ່ຽວກັບອາກອນທີ່ຈັດເປັນບຸລິມະສິດໃຫ້ແກ່ການລຶບລ້າງຄວາມທຸກຍາກ ໃນພາກປະຕິບັດຕົວຈິງ, ແທນທີ່ຈະແມ່ນພຽງແຕ່ເປັນຄຳເວົ້າ ເຊິ່ງບໍ່ພຽງແຕ່ປົກປ້ອງສິດທິມະນຸດຂອງປະຊາຊົນລາວຈຳນວນຫຼວງຫຼາຍເທົ່ານັ້ນ ແຕ່ຍັງຈະສ້າງໃຫ້ມີການພັດທະນາແບບຍືນຍົງ ແລະ ມີປະສິດທິຜົນອີກດ້ວຍ.

15. ບັນດາຍຸດທະສາດການເຕີບໂຕທີ່ມີຢູ່ປັດຈຸບັນ ສ່ວນຫຼາຍແມ່ນເອື່ອຍອີງໃສ່ບັນດາໂຄງການເຂື່ອນໄຟຟ້າພະລັງນ້ຳ ແລະ ໂຄງການສຳປະທານທີ່ດິນ ທີ່ລວມມີຄວາມສ່ຽງຢ່າງສຳຄັນ ແລະ ມີຜົນຕອບແທນທີ່ບໍ່ແນ່ນອນ. ໂຄງການເຫຼົ່ານັ້ນ ຄວນຈະມີການດຸ່ນດ່ຽງໂດຍບັນດານະໂຍບາຍສົ່ງເສີມຂະແໜງການອື່ນໆ ເຊັ່ນ: ການຜະລິດກະສິກຳແບບຍືນຍົງ, ການພັດທະນາຕົວເມືອງ ແລະ ການທ່ອງທ່ຽວ ເຊິ່ງຈະຮຽກຮ້ອງໃຫ້ມີກຳລັງແຮງງານທີ່ມີການສຶກສາ, ມີສຸຂະພາບແຂງແຮງ ແລະ ມີທັກສະ ເຊິ່ງຈະສາມາດກໍ່ຕົວຂຶ້ນມາໄດ້ ຈາກຜົນຂອງແຜນງານດ້ານການສຶກສາທີ່ມີຄຸນນະພາບສູງ, ແຜນງານດ້ານການປະກັນສຸຂະພາບທີ່ມີທຶນສະໜັບສະໜູນເປັນຢ່າງດີ ທີ່ສະໜັບສະໜູນປະຊາຊົນຜູ້ທີ່ທຸກຍາກທີ່ສຸດ, ການສ້າງຄວາມເຂັ້ມແຂງດ້ານອຳນາດໃຫ້ແກ່ແມ່ຍິງ ແລະ ມີການປົກປ້ອງທາງສັງຄົມທີ່ສາມາດເຂົ້າເຖິງໄດ້ຢ່າງແທ້ຈິງ. ເພື່ອເຮັດໃຫ້ໂຄງລ່າງພື້ນຖານ ປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ, ຕ້ອງໄດ້ນຳໃຊ້ວິທີການແບບມີສ່ວນຮ່ວມ, ໂດຍຖືເອົາສິດຜົນປະໂຫຍດ ແລະ ການປະກອບສ່ວນຂອງຊຸມຊົນຊົນນະບົດ ແລະ ຊຸມຊົນຜູ້ທຸກຍາກເປັນສິ່ງນຳທາງ. ຜູ້ສະໜອງທຶນສາກົນ ຄວນສະໜັບສະໜູນໂຄງການທີ່ສອດຄ່ອງກັບເປົ້າໝາຍເຫຼົ່ານັ້ນ.

16. ໃນເຂດຊົນນະບົດ, ຜູ້ລາຍງານພິເສດໄດ້ລົມກັບຊາວກະສິກອນທີ່ຜະລິດຕາມສັນຍາທີ່ເລົ່າວ່າ ພວກເຂົາຕິດຢູ່ໃນວົງຈອນຄວາມທຸກຍາກ, ເຊິ່ງລາຍງານວ່າ ພວກເຂົາພົບຄວາມຫຍຸ້ງຍາກຈາກການຕັດສິນໃຈແບບລວມສູນ ກ່ຽວກັບປະເພດຂອງພືດຕ່າງໆ. ພວກເຂົາຄວນ ມີສິດແບບອິດສະຫຼະໃນການຈັດຕັ້ງ ແລະ ດຳເນີນການຕັດສິນໃຈທີ່ສຳຄັນວ່າ ພວກເຂົາຄວນປູກຫຍັງ ແລະ ຂາຍແນວໃດ, ລວມທັງກ່ຽວກັບວ່າ ການສະໜັບສະໜູນປະເພດໃດ ທີ່ລັດສາມາດສະໜອງໃຫ້ດີທີ່ສຸດ ເຊັ່ນ: ແຜນງານປະກັນໄພຂະໜາດນ້ອຍ ເຊິ່ງມີຄວາມສຳຄັນເປັນພິເສດ ເນື່ອງຈາກການປ່ຽນແປງດິນຟ້າອາກາດນັບມື້ນັບສົ່ງຜົນສະທ້ອນຕໍ່ລະບົບນິເວດທີ່ອ່ອນແອ ເຊັ່ນດຽວກັນຂໍ້ມູນຂ່າວສານ, ຄຳແນະນຳ ລວມທັງ ການເຈລະຈາຕໍ່ລອງເງື່ອນໄຂສັນຍາແບບເປັນທຳ ແລະ ເຄືອຂ່າຍດ້ານເສດຖະກິດລະດັບພາກພື້ນທີ່ອະນຸຍາດໃຫ້ໄດ້ຮັບປະໂຫຍດສູງສຸດ ຈາກແຮງງານຂອງພວກເຂົາ.

17. ລັດຖະບານ ຄວນມີບົດບາດທີ່ຫ້າວຫັນກວ່າເກົ່າ ໃນການຫຼຸດຜ່ອນຄວາມທຸກຍາກ ແລະ ເອື້ອຍອີງ ໃສ່ຜູ້ໃຫ້ທຶນສາກົນ ແລະ ຜົນປະໂຫຍດຈາກການລົງທຶນຂອງຕ່າງປະເທດໃຫ້ໜ້ອຍລົງ ແລະ ສຸດທ້າຍແລ້ວຈະໄປເຖິງປະຊາຊົນທີ່ຢູ່ໃນຄວາມທຸກຍາກ. ລັດຖະບາຍຄວນກະຈາຍ ຄວາມພະຍາຍາມຂອງຕົນສຸມໃສ່ການສະໜັບສະໜູນຊຸມຊົນ ແລະ ບຸກຄົນ ແລະ ສ້າງຄວາມເຂັ້ມແຂງດ້ານອຳນາດໃຫ້ແກ່ພວກເຂົາ ໃຫ້ເປັນເຈົ້າການໃນການພັດທະນາພວກເຂົາເອງ.

## A. ນະໂຍບາຍດ້ານເສດຖະກິດ

18. ມີການເຊື່ອມໂຍງກັນແບບເຂັ້ມແຂງ ແລະ ແບບໂດຍກົງລະຫວ່າງ ວິທີການທີ່ລັດຖະບານເພີ່ມລາຍຮັບ ແລະ ໃຊ້ຈ່າຍງົບປະມານຂອງຕົນ ແລະ ວິທີທີ່ລັດຖະບານປະຕິບັດຕາມພັນທະດ້ານສິດທິມະນຸດຂອງຕົນ.[13]

### ງົບປະມານທີ່ມີຄວາມໂປ່ງໃສ ເຊື່ອມໂຍງກັບການຫຼຸດຜ່ອນຄວາມທຸກຍາກ

19. ເຖິງແມ່ນວ່າຈະມີບາດກ້າວທີ່ສຳຄັນຢ່າງຫຼວງຫຼາຍ ໃນຫວ່າງປີມໍ່ໆມານີ້, ລວມທັງ ກົດໝາຍງົບປະມານປີ 2015, ລາຍລະອຽດຕົ້ນຕໍ ກ່ຽວກັບງົບປະມານຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍ່ບໍ່ໄດ້ເປັນຂໍ້ມູນທີ່ມີໃຫ້ສຳລັບມວນຊົນ ແລະ ຂໍ້ມູນທີ່ມີ ສ່ວນຫຼາຍແມ່ນຫຼ້າສະໄໝແລ້ວ ແລະ ບໍ່ພຽງພໍຕໍ່ຜູ້ທີ່ຢູ່ໃນພາກ

[13] ອົງການ OHCHR, "ເຮັດໃຫ້ສິດທິມະນຸດປະກົດຜົນເປັນຈິງ ຜ່ານງົບປະມານຂອງລັດຖະບານ", ປີ 2017, ໜ້າ 12. ຄັດຈາກ www.ohchr.org/Documents/Publications/RealizingHRThroughGovernmentBudgets.pdf.

ລັດ, ຜູ້ໃຫ້ທຶນ ແລະ ມວນຊົນ.[14] ຕໍ່ກັບການສະເໜີຂໍຫຼາຍຄັ້ງຂອງຜູ້ລາຍງານພິເສດ ເພື່ອຂໍຕົວເລກຂໍ້ມູນລາຍຈ່າຍຂອງລັດ ແມ່ນບໍ່ໄດ້ຮັບຄໍາຕອບ ຫຼື ໄດ້ຄໍາຕອບທີ່ເປັນຂໍ້ມູນດຶງອອກມາທີ່ຫຼ້າສະໄໝແລ້ວ ເຊິ່ງສົ່ງມາໃຫ້ເທື່ອລະໜ້ອຍ.

20. ແຕ່ລະປີ, ລັດຖະບານ ຄວນຈັດພິມເຜີຍແຜ່ຂໍ້ມູນຂ່າວສານຕົ້ນຕໍ ໃນຮູບແບບທີ່ຮັບປະກັນວ່າ ໃຫ້ມີການເຂົ້າເຖິງໄດ້ຢ່າງມີຄວາມໝາຍ ແລະ ລວມມີລາຍຮັບພາຍໃນທັງໝົດ, ທຶນຊ່ວຍເຫຼືອລ້າຂອງສາກົນ ແລະ ທຶນກູ້ຢືມຈາກສາກົນ ພ້ອມທັງການວິເຄາະ ການຈັດສັນງົບປະມານ ແລະ ລາຍຈ່າຍຕົວຈິງ. ການຕິດຕາມ ແລະ ປະເມີນຜົນລາຍຈ່າຍຕົວຈິງ ແລະ ປະສິດທິຜົນຂອງມັນ ກໍ່ເປັນສິ່ງທີ່ສໍາຄັນ. ລັດຖະບານຄວນສ້າງຕັ້ງກົນໄກເຊິ່ງຜ່ານກົນໄກດັ່ງກ່າວ ອົງການປະຊາສັງຄົມ ແລະ ມວນຊົນ ສາມາດເຂົ້າຮ່ວມໃນການຈັດລຽງບຸລິມະສິດ ແລະ ການຕິດຕາມ ແລະ ປະເມີນຜົນດ້ານງົບປະມານ.

21. ຄູ່ຮ່ວມສາກົນ ຄວນອໍານວຍຄວາມສະດວກ ແລະ ຊຸກຍູ້ໃຫ້ມີການຈັດພິມ ແລະ ເຜີຍແຜ່ ຂໍ້ມູນທີ່ກ່ຽວຂ້ອງຢ່າງທັນເວລາ, ຮັບປະກັນໃຫ້ມີການເຂົ້າເຖິງຂໍ້ມູນຂອງພວກເຂົາເອງ ແລະ ສະໜັບສະໜູນການມີສ່ວນຮ່ວມຂອງອົງການພາກປະຊາສັງຄົມ ແລະ ຂອງມວນຊົນເຂົ້າໃນຂະບວນການຂຶ້ນແຜນງົບປະມານ.

### ລາຍຈ່າຍຂອງລັດ ໃນຂົງເຂດນະໂຍບາຍຕົ້ນຕໍ

22. ລາຍຈ່າຍດ້ານສັງຄົມຂອງລັດ ແມ່ນສໍາຄັນຫຼາຍ ເພື່ອຫຼຸດຜ່ອນຄວາມທຸກຍາກ, ເປັນການອໍານວຍຄວາມສະດວກໃຫ້ແກ່ການປຸກລະດົມສັງຄົມ ແລະ ການເຮັດໃຫ້ສິດທິມະນຸດປະກົດຜົນເປັນຈິງ. ເຖິງແມ່ນວ່າ ລັດຖະບານໄດ້ໃຫ້ຄວາມມຸ່ງໝັ້ນທີ່ສໍາຄັນ, ແຕ່ວ່າ ການໃຊ້ຈ່າຍດ້ານສັງຄົມໃນຕົວຈິງ ສ່ວນຫຼາຍແລ້ວແມ່ນຍັງຂາດເຂີນ, ຍັງຄົງຕໍ່າເມື່ອທຽບກັບມາດຕະຖານຂອງພາກພື້ນ ແລະ ບໍ່ໄດ້ເພີ່ມຂຶ້ນ ໂດຍສອດຄ່ອງກັບການເຕີບໂຕຂອງ GDP. ຂໍ້ມູນທີ່ມີຢູ່ ສະແດງໃຫ້ເຖິງການໃຊ້ຈ່າຍທີ່ໜ້ອຍລົງໃສ່ວຽກງານສາທາລະນະສຸກ, ການສຶກສາ ແລະ ຄວາມໝັ້ນຄົງທາງສັງຄົມ ເປັນຫຼັກຖານຢັ້ງຢືນວ່າ ປະເທດບໍ່ໄດ້ນໍາໃຊ້ຊັບພະຍາກອນທີ່ມີຢູ່ ໃຫ້ເກີດປະໂຫຍດສູງສຸດ ເພື່ອຮອງຮັບການສະໜອງການບໍລິການທີ່ຈໍາເປັນ. ອີງຕາມຄູ່ຮ່ວມພັດທະນາ ໃນປີ 2017 ການໃຊ້ຈ່າຍໃສ່ວຽກງານສາທາລະນະສຸກ ແມ່ນ 1.7 ສ່ວນຮ້ອຍ ຂອງ GDP, ເຊິ່ງຄືກັນກັບທີ່ໄດ້ໃຊ້ຈ່າຍໃນໄລຍະປີ 2010/11 ແລະ ກວມເອົາ 6.5 ສ່ວນຮ້ອຍ ງົບປະມານຂອງລັດຖະບານ ທຽບກັບ 9ສ່ ວນຮ້ອຍ ຕາມຄາດໝາຍງົບປະມານ[15]. ການໃຊ້ຈ່າຍໃສ່ການສຶກສາ ແມ່ນ 3.11 ສ່ວນຮ້ອຍ ຂອງ GDP ແລະ ເປັນ 13.4 ສ່ວນຮ້ອຍ ຂອງງົບປະມານ ທຽບກັບ 17 ສ່ວນຮ້ອຍ ຂອງຄາດໝາຍ. ອັດຕາສ່ວນຂອງງົບປະມານທີ່ໃຊ້ຈ່າຍໃສ່ການສຶກສາ ໃນປີ 2017 ແມ່ນຕໍ່າກວ່າ 6 ປີກ່ອນໜ້ານັ້ນ.

23. ງົບປະມານຂອງລັດຖະບານ ສະທ້ອນໃຫ້ເຫັນເຖິງບຸລິມະສິດທີ່ແທ້ຈິງຂອງຕົນ. ການລົງທຶນແບບຍືນຍົງໃສ່ປະຊາຊົນລາວ ຮຽກຮ້ອງໃຫ້ມີການເພີ່ມລາຍຈ່າຍຂຶ້ນຫຼາຍ ໃສ່ສາທາລະນະສຸກ, ການສຶກສາ ແລະ ການປົກປ້ອງທາງສັງຄົມ.

### ນະໂຍບາຍດ້ານອາກອນ ແບບທະວີຄູນ ແລະ ການສ້າງລາຍຮັບ

24. ເຖິງແມ່ນວ່າ ລັດຖະບານຢູ່ພາຍໃຕ້ຄວາມກົດດັນທີ່ຢາກຫຼຸດຜ່ອນການຂາດດູນດ້ານການເງິນຂອງຕົນ, ແຕ່ວ່າການຫຼຸດຜ່ອນບໍ່ຄວນຈະເຮັດໃຫ້ຂາດເຂີນໃນການໃຊ້ຈ່າຍໃສ່ການປົກປ້ອງທາງສັງຄົມ. ການສະໜອງສິ່ງຈູງໃຈດ້ານການເງິນແບບບໍ່ມີເປົ້າໝາຍຢ່າງຊັດເຈນພຽງພໍ ແລະ ການຍົກເວັ້ນອາກອນທີ່ໃຈໃຫຍ່ເກີນໄປ ເພື່ອຊຸກຍູ້ການລົງທຶນ ໄດ້ຈໍາກັດການເກັບລາຍຮັບແຫ່ງຊາດຢ່າງຫຼວງຫຼາຍ, ພາໃຫ້ແມ່ນແຕ່ທະນາຄານໂລກ ແລະ

[14] ອົງການທະນາຄານໂລກ, "ທຶນຊ່ວຍເຫຼືອລ້າເພື່ອປະຕິຮູບການຄຸ້ມຄອງການເງິນ ຂອງ ສປປ ລາວ", ເອກະສານຂໍ້ມູນໂຄງການ, ວັນທີ 4 ເດືອນກັນຍາ ປີ 2018, p. 6. ຄັດຈາກ http://documents.worldbank.org/curated/en/611241536118876855/pdf/Project-Information-Document-PID-Lao-PDR-Public-Finance-Management-Reform-Grant-P167661.pdf.

[15] ບົດລາຍງານກ່ຽວກັບລາຍຈ່າຍຂອງລັດ ມີຄວາມແຕກຕ່າງກັນໄປ. ບົດລາຍງານ 2018 ຂອງຄະນະກໍາມາທິການເສດ ຖະກິດ ແລະ ສັງຄົມ ສໍາລັບ ອາຊີ ແລະ ປາຊີຟິກ ພົບວ່າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃຊ້ຈ່າຍ 0% ຂອງ GDP ໃສ່ການປົກປ້ອງທາງສັງຄົມ, 1%ໃສ່ສາທາລະນະສຸກ ແລະ 3% ໃສ່ການສຶກສາ, ເຊິ່ງເປັນລະດັບການໃຊ້ຈ່າຍຕໍ່າທີ່ສຸດ ໃນພາກພື້ນນີ້. ຄະນະກໍາມາທິການ ດ້ານເສດຖະກິດ ແລະ ສັງຄົມ ສໍາລັບ ອາຊີ ແລະ ປາຊີຟິກ, "ບົດລາຍງານພາບ ລວມທາງດ້ານສັງຄົມ ສໍາລັບ ອາຊີ ແລະ ປາຊີຟິກ ທີ່ໄດ້ຮັບການປົກປ້ອງທີ່ບໍ່ດີ , ປີ 2018, ໜ້າ 46. ຄັດຈາກ www.unescap.org/sites/default/files/publications/Social_Outlook.pdf.

ອົງການກອງທຶນການເງິນສາກົນ ກໍ່ຕ້ອງໄດ້ຮຽກຮ້ອງໃຫ້ມີການທົບທວນ ແລະ ປະຕິຮູບ ການຍົກເວັ້ນດັ່ງກ່າວ[16]. ສ່ວນໜຶ່ງ ກໍ່ແມ່ນຍ້ອນການຫຼຸດຜ່ອນອາກອນເຫຼົ່ານັ້ນ ເຮັດໃຫ້ລາຍຮັບຈາກອາກອນເປັນເປີເຊັນຂອງ GDP ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລົງຕໍ່າ, ເຊິ່ງຫຼຸດລົງຈາກ 13.8ສ່ວນຮ້ອຍ ຂອງ GDP ໃນປີ 2014 ມາເປັນ 12.2 ສ່ວນຮ້ອຍ ໃນປີ 2017, ຕໍ່າກວ່າປະເທດອ້ອມຂ້າງຂອງຕົນ ເຊັ່ນ: ກໍາປູເຈຍ, ໄທ ແລະ ຫວຽດນາມ [17]. ເຖິງແມ່ນວ່າ ນະໂຍບາຍດ້ານອາກອນ ສາມາດນໍາໃຊ້ເພື່ອແກ້ໄຂຄວາມບໍ່ສະເໝີພາບ, ສາທາລະນະລັດ ປະຊາທິປະ ໄຕ ປະຊາຊົນລາວ ໃນປັດຈຸບັນ ກໍ່ເກັບລາຍຮັບແຫ່ງຊາດຂອງຕົນໄດ້ ເຊິ່ງສ່ວນຫຼາຍແມ່ນຈາກອາກອນມູນຄ່າເພີ່ມ (VAT) [18], ເຊິ່ງຍິ່ງເພີ່ມພາລະທີ່ໃຫຍ່ຫຼວງກວ່າເກົ່າ ໃຫ້ປະຊາຊົນຜູ້ທຸກຍາກ. ອາກອນລາຍໄດ້, ເຊິ່ງຫັກແບບທະວີຄູນ, ກວມເອົາໜ້ອຍກວ່າ 10 ສ່ວນຮ້ອຍ ຂອງລາຍຮັບແຫ່ງຊາດຈາກອາກອນ[19] ແລະ ຜູ້ຕາງໜ້າຂອງກະຊວງການເງິນ ກ່າວວ່າ ກະຊວງບໍ່ໄດ້ໃສ່ໃຈເລື່ອງຄວາມບໍ່ສະເໝີພາບໃນການເກັບອາກອນ ແລະ ການຂຶ້ນງົບປະມານ[20].

25. ລາຍຮັບແຫ່ງຊາດຈາກອາກອນ ເປັນເປີເຊັນຂອງ GDP ຄວນເພີ່ມຂຶ້ນ ແລະ ລາຍຈ່າຍ ແລະ ການລົງທຶນໃສ່ຂະແໜງສັງຄົມ ຄວນເພີ່ມຂຶ້ນຫຼາຍກວ່ານີ້. ຄວນເປີດເຜີຍການຍົກເວັ້ນອາກອນ ແລະ ອັດຕາພາສີທີ່ມີຢູ່ໃນປັດຈຸບັນສູ່ມວນຊົນໃຫ້ຮັບຮູ້ ແລະ ປະເມີນຜົນ ເພື່ອຄວາມຮອບຄອບດ້ານການເງິນ ແລະ ເປັນການປະກອບສ່ວນເຂົ້າໃນເສດຖະກິດໂດຍລວມຂອງພວກເຂົາ, ໃນເມື່ອວ່າແນວໃດກໍ່ໄດ້ມີການຍອມສະຫຼະລາຍຮັບແຫ່ງຊາດຫຼາຍຂະໜາດນີ້ແລ້ວ. ຄວນຈະແກ້ໄຂຄວາມບໍ່ສະເໝີພາບໃນນະໂຍບາຍດ້ານອາກອນທີ່ກໍາລັງເພີ່ມຂຶ້ນ, ເຊິ່ງກົດຂວາງການເຕີບໂຕ ແລະ ລັດຖະບານ ຄວນວິເຄາະຜົນກະທົບຂອງນະໂຍບາຍດ້ານອາກອນທີ່ກະຈາຍຕໍ່ກຸ່ມຄົນທີ່ແຕກຕ່າງກັນ ແລະ ຮັບປະກັນວ່າ ລະບົບອາກອນ ແມ່ນເປັນແບບທະວີຄູນ. ຄວນຊົດເຊີຍການສືບຕໍ່ເອື່ອຍອີງໃສ່ນະໂຍບາຍວ່າດ້ວຍອາກອນມູນຄ່າເພີ່ມ (VAT) ໂດຍມີມາດຕະການເພີ່ມລາຍຮັບຕົວຈິງ ຂອງຄົວເຮືອນທຸກຍາກທີ່ໄດ້ຮັບຜົນສະທ້ອນຢ່າງບໍ່ສົມສ່ວນ.

**ໜີ້ສິນພາກລັດ ແລະ ໂຄງການລິເລີ່ມໜຶ່ງແລວທາງ ແລະ ໜຶ່ງເສັ້ນທາງ (the Belt and Road Initiative)**

26. ເຖິງແມ່ນວ່າ ໜີ້ສິນທີ່ເພີ່ມຂຶ້ນນັ້ນ ອາດສົມເຫດສົມຜົນດ້ານເສດຖະກິດ ແຕ່ວ່າລັກສະນະຕົວຈິງຂອງໜີ້ສິນນັ້ນ ກໍ່ມີຄວາມສໍາຄັນ. ທັງຈໍານວນໜີ້ສິນ ແລະ ເງື່ອນໄຂຂອງການກູ້ຢືມ ລວມທັງອັດຕາດອກເບ້ຍ, ຕົ້ນທຶນຄ່າບໍລິການ ແລະ ຄ່າທໍານຽມເບື້ອງຕົ້ນ ສາມາດເຮັດໃຫ້ທຶນທີ່ມີໄວ້ສໍາລັບຄົນຮຸ່ນຫຼັງໃນອານາຄົດຫຼຸດໜ້ອຍຖອຍລົງ. ປະເທດໄດ້ຮັບເອົາໜີ້ສິນພາກລັດຈໍານວນຫຼວງຫຼາຍ ເພື່ອສະໜອງທຶນໃຫ້ແກ່ບັນດາໂຄງການໃຫຍ່ໆ, ນັບມື້ນັບແມ່ນເງິນກູ້ຢືມທີ່ມີເງື່ອນໄຂແບບບໍ່ຈະແຈ້ງ ແລະ ເງື່ອນໄຂທີ່ບໍ່ແມ່ນສໍາປະທານ, ໂດຍບໍ່ຮູ້ແນ່ນອນວ່າ ຈະມີບົດຮຽນທີ່ຖອດຖອນໄດ້ຫຍັງແດ່ສໍາລັບອານາຄົດ[21]. ລັດຖະບານ ຄວນຈະໂປ່ງໃສກ່ຽວກັບຈໍານວນລວມ ແລະ ລັກສະນະຕົວຈິງຂອງໜີ້ສິນ ແລະ ພັນທະທີ່ກ່ຽວຂ້ອງ ທີ່ໄດ້ຮັບເອົາມາ.

27. ບົດບາດຂອງໂຄງການລິເລີ່ມໜຶ່ງແລວທາງ ແລະ ໜຶ່ງເສັ້ນທາງ (the Belt and Road Initiative (BRI)), ເຊິ່ງເປັນແຜນງານໂຄງລ່າງພື້ນຖານລະດັບໂລກທີ່ຂ້ອນຂ້າງທະເຍີທະຍານສູງຂອງຈີນ ເປັນຕົວຢ່າງໜຶ່ງທີ່ອະທິບາຍເຖິງບັນຫານີ້. ຍ້ອນວ່າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ກູ້ຢືມເງິນຢ່າງມະຫາສານ

---

[16] ກອງທຶນການເງິນສາກົນ, "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ການປຶກສາຫາລື ກ່ຽວກັບ ມາດຕາ IV ໃນປີ 2017, ວັນທີ 23 ເດືອນມີນາ ປີ 2018. ຄັດຈາກ www.imf.org/en/Publications/CR/Issues/ 2018/03/ 23/Lao-Peoples-Democratic-Republic- 2017-Article-IV-Consultation-Press-Release-Staff-Report-and-45750; ແລະ ທະນາຄານໂລກ, ການຕິດຕາມກວດກາ ເສດຖະກິດຂອງ ສປປ ລາວ, ເດືອນມິຖຸນາ ປີ 2018, ໜ້າ 12 ແລະ 37. ຄັດຈາກhttp://documents.worldbank.org/curated/en/ 418261529002464394/Lao-PDR-economic-monitor-safeguarding-stability-an-ongoing-agenda-thematic-section-how-can-farmers-get-more-for-their-rice-and-consumers-pay-less.

[17] ຂໍ້ມູນຕົວເລກຂອງອົງການທະນາຄານໂລກ, ກອງທຶນການເງິນສາກົນ, ປຶ້ມສະຖິຕິປະຈໍາປີ ດ້ານການເງິນ ແລະ ໄຟລ໌ ຕົວເລກຂໍ້ມູນຂອງລັດຖະບານ ແລະ ການຄາດຄະເນຕົວເລກ GDP ຂອງທະນາຄານໂລກ ແລະ ອົງການຈັດຕັ້ງ ເພື່ອການຮ່ວມມື ແລະ ພັດທະນາດ້ານເສດຖະກິດ, ລາຍຮັບແຫ່ງຊາດຈາກອາກອນ (% ຂອງ GDP): ກໍາປູເຈຍ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໄທ ແລະ ຫວຽດນາມ. ຄັດຈາກ https://data.worldbank.org/indicator/ GC.TAX. TOTL. GD.ZS?locations=LA-VN-TH-KH&year_low_desc=false.

[18] ທະນາຄານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ບົດລາຍງານດ້ານເສດຖະກິດ ປະຈໍາປີ 2017, ໜ້າ 23.

[19] Ibid.

[20] ກອງປະຊຸມພົບປະກັບ ກະຊວງການເງິນ, ວັນທີ 25 ເດືອນມີນາ ປີ 2019.

[21] ກອງທຶນການເງິນສາກົນ," ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ກອງປະຊຸມປຶກສາຫາລືມາດຕາທີ IV ປີ 2017", ໜ້າ 5 ແລະ 9.

ຈາກຈີນ ເພື່ອສະໜອງທຶນໃຫ້ໂຄງການ BRI, ໃນປີ 2018 ຈຶ່ງເຮັດໃຫ້ໄດ້ຊື່ວ່າ ເປັນປະເທດໜຶ່ງ ໃນຈຳນວນ 8 ປະເທດ ທີ່ມີຄວາມສ່ຽງສະເພາະຈາກຄວາມກົດດັນຈາກໜີ້ສິນ[22]. ລະຫວ່າງປີ 2010 ຮອດປີ 2015, ອັດຕາສ່ວນຂອງໜີ້ສິນພາກລັດຂອງປະເທດລາວທີ່ຕິດໜີ້ຈີນ ເພີ່ມຂຶ້ນຈາກ 20 ສ່ວນຮ້ອຍ ເປັນ 45 ສ່ວນຮ້ອຍ[23] ແລະ ມູນຄ່າຂອງໂຄງການໂຄງລ່າງພື້ນຖານທີ່ຈີນສະໜັບສະໜູນຢູ່ເບື້ອງຫຼັງ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເກີນອັດຕາ GDP ປົກກະຕິ ໃນປີ 2017.[24]

28. ໃນເມື່ອໂຄງການ BRI ມີຄວາມສຳຄັນເພີ່ມຂຶ້ນຄືດັ່ງກ່າວ ສຳລັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ບົດຮຽນທີ່ຖອດຖອນໄດ້ຈາກໜີ້ສິນທີ່ກ່ຽວຂ້ອງກັບໂຄງການ BRI ຈະມີບົດບາດສຳຄັນເພີ່ມຂຶ້ນໃນການປັບດັດນະໂຍບາຍດ້ານເສດຖະກິດຂອງປະເທດ ແລະ ກຳນົດຄວາມອາດສາມາດຂອງຕົນເພື່ອຮັບປະກັນຄວາມຢູ່ດີກິນດີທາງດ້ານສັງຄົມ ແລະ ການຫຼຸດຜ່ອນຄວາມທຸກຍາກ. ແຕ່ໜ້າເສຍດາຍ, ເງື່ອນໄຂຕ່າງໆຂອງໂຄງການໂຄງລ່າງພື້ນຖານຂອງຈີນຫຼາຍໂຄງການ ບໍ່ໂປ່ງໃສເລີຍ ແລະ ມີຂ່າວລືຫຼາຍກ່ຽວກັບຫຼັກຊັບຄ້ຳປະກັນທີ່ມີຄຸນຄ່າ ທີ່ປະເທດໄດ້ຈຳນຳໄວ້ ໃນກໍລະນີທີ່ມີຫຍັງຜິດພາດເກີດຂຶ້ນ. ຍ້ອນມີຄວາມບໍ່ຈະແຈ້ງ ຈຶ່ງເປັນການຍາກທີ່ຈະປະເມີນວ່າ ບັນດາເງື່ອນໄຂ, ຕົ້ນທຶນຄ່າບໍລິການ ແລະ ຜົນທີ່ຕາມມາຕ່າງໆ ໃນກໍລະນີທີ່ມີຂໍ້ຜິດພາດເກີດຂຶ້ນຈະສົ່ງຜົນໃຫ້ມີໄພຂົ່ມຂູ່ຫຍັງແດ່ ໃນໄລຍະຍາວ. ແນ່ນອນ ປະເທດນີ້ ກໍ່ບໍ່ແມ່ນປະເທດດຽວ ທີ່ໂດດດ່ຽວໃນເລື່ອງນີ້. ເຖິງແມ່ນວ່າ ພາກສ່ວນຕ່າງໆ ໃນລະບົບຂອງອົງການສະຫະປະຊາຊາດ ຈັດໃຫ້ໂຄງການ BRI ເປັນວິທີທາງໜຶ່ງເພື່ອບັນລຸເປົ້າໝາຍພັດທະນາແບບຍືນຍົງ ກໍ່ຕາມ[25], ບາງປະເທດ ກໍ່ໄດ້ຫຼຸດບັນດາເງື່ອນໄຂທີ່ບໍ່ເອື້ອອຳນວຍຕ່າງໆລົງໄດ້ຫຼາຍ ໃນເມື່ອກ່ອນນັ້ນ[26]. ໃນເມື່ອ ບັນດາໂຄງການ BRI ໄດ້ຂະຫຍາຍໄປທົ່ວໂລກ, ຈີນ ເຊິ່ງເປັນປະເທດທີ່ກູ້ຢືມ ແລະ ຊຸມຊົນອົງການສາກົນ ຄວນຈະສ້າງຄວາມເຂົ້າໃຈທີ່ມີຂໍ້ມູນ ພຽບພ້ອມຫຼາຍກວ່າເກົ່າ ແລະ ເໝາະສົມກວ່າເກົ່າ ກ່ຽວກັບຄວາມສ່ຽງທີ່ອາດເກີດຂຶ້ນ ແລະ ປະໂຫຍດທີ່ມີຄວາມອາດສາມາດວ່າຈະເກີດຂຶ້ນເຊັ່ນດຽວກັນກັບ ຄວາມສຳຄັນຂອງຄວາມໂປ່ງໃສ.

## B. ຄວາມເຊື່ອມໂຍງລະຫວ່າງທີ່ດິນ ແລະ ຄວາມທຸກຍາກ

29. ທີ່ດິນມີຄວາມສຳຄັນຫຼາຍຕໍ່ການດຳລົງຊີວິດຂອງປະຊາຊົນຜູ້ທຸກຍາກຈຳນວນຫຼວງຫຼາຍ, ແຕ່ວ່າ ຄວາມໝັ້ນຄົງດ້ານທີ່ດິນຂອງພວກເຂົາ ສ່ວນຫຼາຍແລ້ວຊ້ຳພັດມີໜ້ອຍ. ລັດຖະບານໄດ້ບຸກບືນໃຫ້ມີໂຄງການລິເລີ່ມຂະໜາດໃຫຍ່, ລວມທັງບັນດາໂຄງການໂຄງລ່າງພື້ນຖານ ແລະ ການປູກພືດອຸດສາຫະກຳຂະໜາດໃຫຍ່, ເຊິ່ງໄດ້ແຍກປະຊາຊົນອອກຈາກທີ່ດິນຂອງຕົນ, ສ່ວນຫຼາຍສົ່ງຜົນໃຫ້ມີຄວາມລຳບາກ ແລະ ຕິດໜີ້ສິນ. ຜູ້ລາຍງານພິເສດ ໄດ້ຮັບການລາຍງານຫຼາຍຄັ້ງກ່ຽວກັບການສູນເສຍທີ່ດິນ ແລະ ການຍົກຍ້າຍຈັດສັນ, ນຳໄປສູ່ການສູນເສຍວິຖີການດຳລົງຊີວິດ, ຄວາມບໍ່ຄ້ຳປະກັນດ້ານສະບຽງອາຫານ, ຂາດການເຂົ້າເຖິງນ້ຳ, ການຊົດເຊີຍທີ່ບໍ່ພຽງພໍ ຫຼື ບໍ່ມີການຊົດເຊີຍຫຍັງເລີຍ ສຳລັບການສູນເສຍຊັບພະຍາກອນ, ເຮັດໃຫ້ທຸກຍາກລົງກວ່າເກົ່າ ແລະ ຕິດໜີ້ສິນ ຍ້ອນ

---

[22] John Hurley et al (ສູນພັດທະນາທົ່ວໂລກ),“ ການກວດກາເບິ່ງຜົນກະທົບຂອງໜີ້ສິນຂອງ ໂຄງການລິເລີ່ມໜຶ່ງແລວທາງ ແລະ ໜຶ່ງເສັ້ນທາງຈາກແນວຄິດດ້ານນະໂຍບາຍ, ເດືອນມີນາ ປີ 2018. ຄັດຈາກwww.cgdev.org/publication/examining-debt-implications-belt-and-road-initiative-a-policy-perspective. ອີງຕາມສະຖາບັນຄົ້ນ ຄ້ວາແຫ່ງໜຶ່ງ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບການຊ່ວຍເຫຼືອສູງສຸດເປັນອັນດັບ 4, ໃນບັນດາຜູ້ທີ່ໄດ້ຮັບກະແສທີ່ບໍ່ໄດ້ຮັບການສຳປະທານຈາກຈີນໃນໂລກ ແຕ່ປີ 2000 ເຖິງ 2014. ວິທະຍາໄລ William and Mary, “ຮ່ອງຮອຍການພັດທະນາທົ່ວໂລກຂອງຈີນ”, AIDDATA. ຄັດຈາກ www.aiddata.org/china-official-finance.

[23] ທະນາຄານໂລກ, “ການຕິດຕາມກວດກາເສດຖະກິດຂອງລາວ,” ເດືອນເມສາ ປີ 2017, ໜ້າ 11.ຄັດຈາກ http://pubdocs.worldbank.org/en/933741497262078111/LEM-PPT-English.pdf.

[24] ອົງການສະຫະປະຊາຊາດ, ພະແນກກິດຈະການດ້ານເສດຖະກິດ ແລະ ສັງຄົມ, "ກິດຈະກຳປະຈຸບັນຂອງ BRI ໃນ ສປປລາວ", ວັນທີ 6 ເດືອນພະຈິກ ປີ 2018. , ຄັດຈາກ www.brisdgs.org/sites/default/files/inline-files/Current%20Activities%20of%20BRI%20in%20Lao%20PDR_2.pdf.

[25] ເບິ່ງໃນອົງການສະຫະປະຊາຊາດ, ພະແນກກິດຈະການດ້ານເສດຖະກິດ ແລະ ສັງຄົມ, "ຮ່ວມກັນສ້າງ ໜຶ່ງແລວທາງ ແລະໜຶ່ງເສັ້ນທາງ' ໄປສູ່ເປົ້າໝາຍການພັດທະນາແບບຍືນຍົງ", ວນທີ 16 ດືອນສິງຫາ ປີ 2016. ຄັດຈາກ www.un.org/development/desa/en/news/policy/building-belt-road-towards-sdgs.html; ອົງການສະຫະປະຊາຊາດ ໂຄງການພັດທະນາ ແລະ ສູນແລກປ່ຽນເສດຖະກິດສາກົນຂອງຈີນ, "ໂຄງການລິເລີ່ມໜຶ່ງແລວທາງ ແລະ ໜຶ່ງເສັ້ນທາງ: ວິທີການໃໝ່ ໃນການຫັນປ່ຽນການປົກຄອງທົ່ວໂລກໄປສູ່ການພັດທະນາແບບຍືນຍົງ”, ປີ 2017. ຄັດຈາກ www.cn.undp.org/content/dam/china/docs/Publications/UNDP-CH-GGR%202017.pdf.

[26] ວາລະສານ ນັກເສດຖະສາດ,“ບົດລາຍງານປະເທດ: ມາເລເຊຍ, ໜ່ວຍງານຂ່າວສານ, ວັນທີ 2 ເດືອນເມສາ ປີ 2019, ໜ້າ 25.

ການຖືກບັງຄັບໃຫ້ຂ້າມຜ່ານໄປສູ່ເສດຖະກິດທີ່ອີງໃສ່ເງິນສົດ. ນະໂຍບາຍ “ຫັນເອົາທີ່ດິນໃຫ້ເປັນທຶນ” ໄດ້ປົກຄຸມປະເທດ ໂດຍບັນດາໂຄງການສຳປະທານທີ່ດິນ ຫຼາຍກວ່າ 1,750 ໂຄງການ[27], ໂດຍໂອນສິດໃຫ້ແກ່ບັນດາບໍລິສັດນຳໃຊ້ທີ່ດິນຕອນກວ້າງຂວາງ, ບາງຄັ້ງເປັນເວລາຍາວນານເຖິງສັດຕະວັດ ແລະ ສ່ວນຫຼາຍແມ່ນປັດສະຈາກການພິຈາລະນາຢ່າງພຽງພໍກ່ຽວກັບການນຳໃຊ້ທີ່ດິນປັດຈຸບັນ.

30. ລັດຖະບານຕ້ອງໄດ້ມີພັນທະໃນການດຳເນີນບາດກ້າວຕ່າງໆ ໃນການຄົ້ນຄິດຄືນວິທີການຂອງຕົນ ລວມທັງ ການໂຈະໂຄງການຂຸດຄົ້ນບໍ່ແຮ່ ແລະ ໂຄງການປູກຢາງພາລາ ແລະ ໂຄງການປູກໄມ້ອີກ ໃນປີ 2012. ໃນປີ 2017, ພັກປະຊາຊົນ ປະຕິວັດລາວ ໄດ້ສັງເກດເຫັນວ່າ ການເວນຄືນທີ່ດິນ ເປັນ “ພາລະອັນໜັກໜ່ວງ”[28]. ເຈົ້າໜ້າທີ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ອະທິບາຍວ່າ ຕາມທິດທາງຂອງກະຊວງແຜນການ ແລະ ການລົງທຶນ ພວກເຂົາໄດ້ຢຸດເຊົາການອານຸມັດສຳປະທານທີ່ດິນແລ້ວ ໃນຂະນະທີ່ປັດຈຸບັນກຳລັງມີການທົບທວນຄືນໂຄງການທີ່ໄດ້ສຳປະທານໄປແລ້ວ.

31. ການປະເມີນຄືນດັ່ງກ່າວ ຄວນດຳເນີນການຫຼາຍກວ່າການຍົກເລີກບາງສັນຍາທີ່ບໍ່ມີການຈັດຕັ້ງປະຕິບັດເທົ່ານັ້ນ. ການປະເມີນນີ້ ສະໜອງໂອກາດໃຫ້ລັດຖະບານໄດ້ຮັບຮູ້ເຖິງຄວາມສຳຄັນຂອງທີ່ດິນ ຕໍ່ປະຊາຊົນ ແລະ ເພື່ອປົກປ້ອງສິດນຳໃຊ້ທີ່ດິນຂອງພວກເຂົາ ໂດຍຖືເອົາເປັນວິທີທາງໃນການຫຼຸດຜ່ອນຄວາມທຸກຍາກ. ການຄຸ້ມຄອງທີ່ດິນ ບໍ່ຄວນດຳເນີນໄປເປັນແບບກະແຈກກະຈາຍເປັນບາງຄັ້ງຄາວເທົ່ານັ້ນ, ແຕ່ຄວນເປັນແບບມີສ່ວນຮ່ວມ, ສະທ້ອນເຖິງ ແລະ ສະໜອງການປົກປ້ອງການນຳໃຊ້ທີ່ດິນປັດຈຸບັນ ແລະ ຕ້ອງດຳເນີນເປັນປົກກະຕິ, ມີລັກສະນະໂປ່ງໃສ ໂດຍໃຫ້ມີການເຂົ້າເຖິງການປົວແປງຕ່າງໆ.

32. ຜົນໄດ້ຮັບຂອງການທົບທວນປັດຈຸບັນທີ່ກຳລັງດຳເນີນຢູ່ ຄວນເປີດເຜີຍຕໍ່ມວນຊົນ ແລະ ບໍ່ວ່າການສຳປະທານໃດໆກໍ່ຕາມທີ່ຈະອະນຸມັດໃນອານາຄົດນັ້ນ ຕ້ອງແມ່ນພາຍຫຼັງທີ່ປະຕິບັດໄດ້ທຸກຂໍ້ຕາມການປະເມີນທີ່ກົດໝາຍຮຽກຮ້ອງ ແລະ ຕາມທຸກຂະບວນການຕາມກົດໝາຍໃຫ້ສຳເລັດກ່ອນ, ລວມທັງໃຫ້ມີການປຶກສາຫາລືຢ່າງມີຄວາມໝາຍກັບປະຊົນທ້ອງຖິ່ນ ແລະ ມີການຊົດເຊີຍທີ່ເປັນທຳ. ລັດຖະບານຄວນພະຍາຍາມ ທີ່ຈະນຳເອົາບັນດາໂຄງການສຳປະທານປັດຈຸບັນທີ່ບໍ່ປະຕິບັດຕາມເງື່ອນໄຂສັນຍາຂອງພວກເຂົາ ໃຫ້ປະຕິບັດຕາມເງື່ອນໄຂ ຫຼື ບັນດາໂຄງການທີ່ສະແດງໃຫ້ເຫັນວ່າ ມີຜົນກະທົບໃນທາງລົບຕໍ່ຊຸມຊົນໃຫ້ປະຕິບັດຕາມ ລະບຽບກົດໝາຍ ຫຼື ບໍ່ດັ່ງນັ້ນກໍ່ໃຫ້ຍົກເລີກ ຫຼື ແກ້ໄຂກ່ອນ ແລະ ໃຫ້ສະໜອງການປົວແປງໃຫ້ແກ່ປະຊາຊົນທີ່ໄດ້ຮັບອັນຕະລາຍ.

33. ໃນຂະນະທີ່ຍັງຢູ່ໃນປະເທດ, ຜູ້ລາຍງານພິເສດ ໄດ້ຮັບຂໍ້ມູນມືໜຶ່ງຈາກຫຼາຍພາກສ່ວນ ກ່ຽວກັບສະພາບການທີ່ທ້າທ້າຍຫຼາຍ ທີ່ປະຊາຊົນປະເຊີນ ໃນເມືອງທ່າແຕງ, ແຂວງເຊກອງ ຜູ້ເຊິ່ງໄດ້ຮັບຜົນສະທ້ອນຈາກການສູນເສຍທີ່ດິນ ໃຫ້ແກ່ສວນປູກໄມ້ຢາງພາລາ. ລາວແຈ້ງເຕືອນວ່າ ຍັງມີ 10 ຄົນທີ່ຍັງຄົງຖືກກັກຕົວຢູ່ໂດຍບໍ່ມີຄະດີໃດເລີຍ.[29] ລັດຖະບານ ຄວນປົວແປງກໍລະນີຄວາມບໍ່ຍຸຕິທຳທີ່ເກີດຂຶ້ນເຫຼົ່ານີ້, ສະໜອງດິນ ແລະ ການຊ່ວຍເຫຼືອດ້ານມະນຸດສະທຳໃຫ້ແກ່ສະມາຊິກຊຸມຊົນ ຕາມຄວາມເໝາະສົມ ແລະ ປ່ອຍຜູ້ທີ່ຖືກກັກຕົວໄວ້ນັ້ນ ເພື່ອສະແດງໃຫ້ເຫັນເຖິງຄວາມມຸ່ງຫວັງທີ່ດີ ແລະ ລຶບລ້າງຄວາມເໜົ່າເປື່ອຍດັ່ງກ່າວ.

34. ການຄຸ້ມຄອງທີ່ດິນ ຕ້ອງພິຈາລະນາການນຳໃຊ້ທີ່ດິນໃນປັດຈຸບັນ ແລະ ຜົນກະທົບທີ່ສະຫຼັບສັບຊ້ອນຂອງການສູນເສຍທີ່ດິນ ແລະ ການຍົກຍ້າຍຖິ່ນຖານທີ່ຕາມມາ. ວິທີການໃດກໍ່ຕາມທີ່ດຳເນີນກັບດ້ານທີ່ດິນ, ບໍ່ວ່າຈະເປັນການລິເລີ່ມຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຫຼື ເປັນຜົນມາຈາກນະໂຍບາຍການລົງທຶນ ຫຼື ນະໂຍບາຍປ່າໄມ້, ທີ່ຄາດເດົາແບບຫຼັບຫູຫຼັບຕາວ່າ ປະຊາຊົນສາມາດສູນເສຍທີ່ດິນທີ່ພວກເຂົາເຄີຍອາໄສ ຫຼື ຖືກຍົກຍ້າຍໄດ້ ໂດຍບໍ່ມີຄວາມສ່ຽງທີ່ຈະມີຜົນທາງລົບທີ່ຕາມມານັ້ນ ມີແຕ່ຈະສ້າງຄວາມທຸກຍາກ ແລະ ເພີ່ມຄວາມບໍ່ພໍໃຈຂຶ້ນຕື່ມອີກ.

35. ລັດຖະບານຄວນດຳເນີນການປະເມີນທີ່ລະອຽດຖີ່ຖ້ວນ ເບິ່ງການຈັດຕັ້ງປະຕິບັດ ແລະ ຜົນກະທົບ ຂອງການຍົກຍ້າຍຈັດສັນ, ການເວນຄືນ ແລະ ການຊົດເຊີຍ. ການທົບທວນ ຄວນປະເມີນຕາມກົດໝາຍວ່າດ້ວຍການ

[27] ອີງຕາມຕົວເລກທີ່ສະໜອງໃຫ້ ໂດຍກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

[28] ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວສະບັບເລກທີ 026/ CC ປີ 2017, ວ່າດ້ວຍການເພີ່ມທະວີວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນໃນໄລຍະໃໝ່.

[29] ສະຫະພັນສາກົນເພື່ອສິດທິມະນຸດ ແລະ ການເຄື່ອນໄຫວເພື່ອສິດທິມະນຸດຂອງລາວ, "ປະເດັນບັນຫາດ້ານສິດທິມະນຸດທີ່ເປນຄວາມກັງວົນຕົ້ນຕໍ", ວັນທີ 7 ເດືອນມີນາ ປີ 2019. ຄັດຈາກ www.ohchr.org/Documents/Issues/EPoverty/Lao/FIDH.pdf.

ຍົກຍ້າຍຖິ່ນຖານ ແລະ ການຈັດສັນອາຊີບ ສະບັບປີ 2018 ຄືນໃໝ່ ເບິ່ງໃນດ້ານສິດທິມະນຸດ ແລະ ມາດຕະຖານອື່ນໆທີ່ກ່ຽວຂ້ອງ. ການທົບທວນດັ່ງກ່າວ ຄວນນໍາໄປສູ່ຂອບຮ່າງຍຸດທະສາດດ້ານການຊົດເຊີຍທີ່ໂປ່ງໃສ, ເປັນລະບົບ ແລະ ມີຄວາມສະເໝີພາບ ເຊິ່ງຈະຊົດເຊີຍໃຫ້ປະຊາຊົນຢ່າງຖືກຕ້ອງ ຕໍ່ກັບມູນຄ່າທີ່ມີປະສິດທິຜົນ ຂອງຊັບສິນຂອງພວກເຂົາ.

36. ຂອບຮ່າງກົດໝາຍ ຄວນປົກປ້ອງສິດການຄອບຄອງທີ່ດິນ ແລະ ສິດທິໃນການດໍາລົງຊີວິດຂອງປະຊາຊົນໝົດທຸກຄົນ, ລວມທັງຫຼາຍແສນຄົນ ຜູ້ທີ່ປັດຈຸບັນດໍາລົງຊີວິດຢູ່ເຂດທີ່ຫາກໍ່ຖືກຈັດສັນເປັນ "ເຂດປ່າໄມ້" ໃນຊຸມປີຂອງທົດສະວັດມໍ່ໆມານີ້, ເຊິ່ງເປັນຜູ້ທີ່ອາໄສໃນທີ່ດິນຊຸມຊົນ ແລະ ເປັນຜູ້ທີ່ອາໄສການເຮັດໄຮ່. ຄວນເປັນເປົ້າໝາຍສໍາຄັນຂອງຄວາມພະຍາຍາມໃນການປະຕິຮູບການອອກໃບຕາດິນໃນປັດຈຸບັນ. ການອອກໃບຕາດິນ ຄວນດໍາເນີນໄປໃນວິທີທາງທີ່ບໍ່ທໍາລາຍການເຂົ້າເຖິງທີ່ດິນ ທີ່ປະຊາຊົນອາໄສຢູ່, ຫຼືກລ່ຽງການບັງຄັບໃຊ້ຂໍ້ຮຽກຮ້ອງທີ່ເຫັນໄດ້ຢ່າງຊັດເຈນວ່າ ເປັນພາລະອັນເກີນຄວນທີ່ຮຽກຮ້ອງໃຫ້ຢັ້ງຢືນປະຫວັດການນໍາໃຊ້ທີ່ດິນ ແລະ ຂໍ້ຮຽກຮ້ອງໃຫ້ຢັ້ງຢືນວ່າມີການນໍາໃຊ້ມາຢ່າງຕໍ່ເນື່ອງເປັນໄລຍະເວລາທີ່ບໍ່ເໝາະສົມກັບສະພາບຕົວຈິງ ແລະ/ ຫຼື ບໍ່ມີລັກສະນະແບບຍືນຍົງ. ສິດຄອບຄອງທີ່ດິນຕາມປະເພນີ ຄວນຈະໄດ້ຮັບການປົກປ້ອງ.

37. ລັດຖະບານ ຄວນສ້າງອົງການທີ່ເປັນເອກະລາດ ເພື່ອຊີ້ນໍາ ແລະ ປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ, ດ້ານສັງຄົມ ແລະ ດ້ານສິດທິມະນຸດ ຂອງບັນດາໂຄງການກໍ່ສ້າງໂຄງລ່າງພື້ນຖານ ທີ່ກ່ຽວຂ້ອງກັບຊັບພະຍາກອນທໍາມະຊາດ ແລະ ໂຄງການອື່ນໆ ແລະ ສວນປູກໄມ້ອຸດສາຫະກໍາຂະໜາດໃຫຍ່ອື່ນໆ, ລວມທັງຜູ້ທີ່ຈະຕ້ອງຖືກຍົກຍ້າຍຈັດສັນແບບບໍ່ສະໝັກໃຈ ແລະ ຜູ້ທີ່ຈະສູນເສຍທີ່ດິນ. ອົງການດັ່ງກ່າວ ຄວນຈະມີກົນໄກການຮ້ອງທຸກແບບຮັກສາຄວາມລັບ, ເຊິ່ງຜ່ານກົນໄກດັ່ງກ່າວ ອົງການນີ້ ຈະໄດ້ຮັບເອົາຄໍາຮ້ອງທຸກໂດຍກົງຈາກບັນດາບຸກຄົນ ແລະ ຊຸມຊົນ, ໂດຍບໍ່ມີຂໍ້ຮຽກຮ້ອງໃຫ້ສູນເສຍສິ່ງປົວແປງທີ່ເປັນທາງເລືອກ. ກົນໄກນີ້ ຄວນສ້າງຄວາມເຂັ້ມແຂງດ້ານອໍານາດໃຫ້ສາມາດສືບສວນສອບສວນ ບັນດາຂໍ້ກ່າວຫາ ແລະ ບົ່ງມະຕິການແກ້ໄຂທີ່ເໝາະສົມ.

38. ຊຸມຊົນອົງການສາກົນ ຕ້ອງບັນທຶກຄວາມລົ້ມເຫຼວຂອງຕົນ ໃນດ້ານການຄຸ້ມຄອງທີ່ດິນ. ຊຸມຊົນອົງການສາກົນມີປະຫວັດໃນການສະໜັບສະໜູນແຜນງານການຍົກຍ້າຍຈັດສັນ ທີ່ມີຜົນສະທ້ອນທີ່ເປັນບັນຫາທີ່ເກີດຂຶ້ນແບບດຽວກັນຊໍ້າແລ້ວຊໍ້າອີກ ຄືກັນກັບຜົນສະທ້ອນທີ່ຜູ້ລາຍງານພິເສດໄດ້ເຫັນປະຈັກຕາ. ການເຂົ້າມາມີສ່ວນຮ່ວມຂອງອົງການທະນາຄານໂລກ ໃນໂຄງການອອກໃບຕາດິນທີ່ຜ່ານມາ ໄດ້ຮັບການລາຍງານວ່າ ເຮັດໃຫ້ມີສິດຄອບຄອງທີ່ດິນຂອງຜູ້ຮັ່ງມີ ໃນຂະນະທີ່ເຮັດໃຫ້ຜູ້ທຸກຍາກມີຄວາມອ່ອນແອລົງ. ໃນການມີສ່ວນຮ່ວມຄັ້ງໃໝ່ຂອງທະນາຄານໂລກ ໃນການຄຸ້ມຄອງທີ່ດິນ, ບັນດາຄວາມຫວ່ງເປັນໄຍທີ່ໄດ້ຍົກຂຶ້ນມາເລື້ອຍໆ ໂດຍບັນດາອົງການປະຊາສັງຄົມ ແລະ ຄູ່ຮ່ວມພັດທະນາຕ່າງໆນັ້ນ ຕ້ອງໄດ້ສະທ້ອນໃຫ້ເຫັນເຖິງການປະຕິຮູບກົດໝາຍທີ່ດິນ ແລະ ປ່າໄມ້ ແລະ ມີການພິຈາລະນາເຖິງຄວາມລົ້ມເຫຼວໃນໄລຍະທີ່ຜ່ານມາ ຂອງລັດຖະບານ ໃນການຈັດຕັ້ງປະຕິບັດຫຼາຍນະໂຍບາຍ ທີ່ເອີ້ນວ່າ "ຄວາມຍືນຍົງ""ທີ່ໄດ້ແນະນໍາໃຫ້ສໍາລັບຂະແໜງໄຟຟ້າພະລັງນໍ້າ.

## C. ຄິດຄືນໃໝ່ກ່ຽວກັບໄຟຟ້າພະລັງນໍ້າ

39. ດັ່ງທີ່ທ່ານນາຍົກລັດຖະມົນຕີໄດ້ຮັບຮູ້ຢ່າງຖືກຕ້ອງ ພາຍຫຼັງໄພພິບັດເຂື່ອນໄຟຟ້າເຊປຽນ-ເຊນໍ້ານ້ອຍແຕກ ໃນປີ 2018, ເຖິງເວລາແລ້ວ ທີ່ ປະເທດຊາດຈະທົບທວນເບິ່ງຂະແໜງ ໄຟຟ້າພະລັງນໍ້າ. ລັດຖະບານຄວນຊຸກຊວນເປີດການສົນທະນາກ່ຽວກັບອະນາຄົດຂອງເຂື່ອນໄຟຟ້າພະລັງງານນໍ້າ ແລະ ບົດບາດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນຖານະເປັນຜູ້ສົ່ງອອກພະລັງງານ, ເຖິງຢ່າງໃດກໍ່ຕາມ, ລາຍລະອຽດຂອງການໂຈະທີ່ຖືກບັງຄັບ ຫຼັງຈາກເຂື່ອນແຕກກໍ່ຍັງບໍ່ຈະແຈ້ງ ແລະ ປະກົດວ່າບໍ່ໄດ້ນໍາໃຊ້ກັບຫຼາຍເຂື່ອນທີ່ໄດ້ວາງແຜນໄວ້ແລ້ວ ເຊິ່ງກໍາລັງພິຈາລະນາຢູ່. ຂອບເຂດຂອງການທົບທວນໃນປັດຈຸບັນແມ່ນແຄບຫຼາຍ. ທະນາຄານໂລກ ກໍາລັງນໍາພາຂະບວນການໜຶ່ງ ທີ່ພິ ຈາລະນາພຽງແຕ່ຄວາມປອດໄພຂອງເຂື່ອນເທົ່ານັ້ນ, ແຕ່ບໍ່ໄດ້ພິຈາລະນາເຖິງຜົນກະທົບອັນເຕັມທີ່ຂອງເຂື່ອນໄຟ ຟ້າພະລັງນໍ້າທີ່ມີຢູ່ ແລະ ທີ່ໄດ້ວາງແຜນໄວ້ແລ້ວ. ການກວດກາເທື່ອດຽວກ່ຽວກັບເຂື່ອນແຕ່ລະແຫ່ງແມ່ນບໍ່ພຽງພໍ

40. ດ້ວຍເຫດຜົນດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ, ລັດຖະບານ ຄວນເອົາໃຈໃສ່ປະຕິບັດຕາມຂໍ້ແນະນໍາຈາກຜູ້ຊ່ຽວຊານ ເຊັ່ນ: ຄະນະກໍາມາທິການແມ່ນໍ້າຂອງ ແລະ ດໍາເນີນການທົບທວນຄືນແບບຮອບດ້ານກ່ຽວກັບບົດບາດ ແລະ ອະນາຄົດຂອງຂະແໜງໄຟຟ້າພະລັງງານນໍ້າ, ເບິ່ງຜົນກະທົບໃນປັດຈຸບັນ ແລະ ໃນ

ອະນາຄົດຂອງເຂື່ອນທີ່ມີຢູ່ແລ້ວ ແລະ ທີ່ໄດ້ວາງແຜນໄວ້ແລ້ວ, ມີຈັກໂຄງການ ແລະ ໂຄງການໃດຄວນດຳເນີນຕໍ່ໄປແລະ ຄວນປັບດັດວິທີການຈັດແຈງການກໍ່ສ້າງ ແລະ ການດຳເນີນງານຄືແນວໃດ ຕາມຄວາມສ່ຽງດ້ານສັງຄົມ ແລະ ດ້ານສິ່ງແວດລ້ອມ. ຄວນເຜີຍແຜ່ຜົນຂອງການທົບທວນຄືນຕໍ່ສາທາລະນະ ແລະ ຄວນປະກອບມີດັ່ງຕໍ່ໄປນີ້:

a) ການປະເມີນສະພາບລວມກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ລະບົບນິເວດ ແລະ ສິດທິມະນຸດຂອງໂຄງການເຂື່ອນໄຟຟ້າພະລັງນໍ້າທີ່ມີຢູ່ແລ້ວ ແລະ ມີແຜນການແລ້ວ, ລວມທັງ ການດຳລົງຊີວິດ ແລະ ການຄໍ້າປະກັນສະບຽງອາຫານ ສຳລັບຊຸມຊົນທີ່ຖືກກະທົບຈາກເຂດເທິງ ແລະ ເຂດລຸ່ມສາຍນໍ້າຈາກໂຄງການເຂື່ອນໄຟຟ້າພະລັງນໍ້າ, ໂດຍຄຳນຶງເຖິງຜົນກະທົບຂອງການປ່ຽນແປງດິນຟ້າອາກາດ;
b) ການປະເມີນຕະຫຼາດໄຟຟ້າໃນພາກພື້ນທີ່ມີການຄາດຄະເນການສະໜອງ ແລະ ຄວາມຕ້ອງການທີ່ທັນສະໄໝ;
c) ການວິເຄາະກ່ຽວກັບຂອບເຂດ, ລັກສະນະ ແລະ ຜົນສະທ້ອນຂອງໜີ້ສິນພາກລັດທີ່ນຳໃຊ້ເຂົ້າໃນການສະໜັບສະໜູນໂຄງການໄຟຟ້າພະລັງງານນໍ້າ, ລາຍໄດ້ເຊິ່ງເປັນຜົນໄດ້ຮັບຂອງແຕ່ລະໂຄງການ ແລະ ການຄາດຄະເນໃນອະນາຄົດ, ພ້ອມທັງການນຳໃຊ້ລາຍຮັບຈົນມາຮອດປັດຈຸບັນ;
d) ຜົນກະທົບຂ້າມຊາຍແດນ;
e) ການປະເມີນນັກລົງທຶນ, ນັກພັດທະນາ ແລະ ຜູ້ດຳເນີນການທີ່ປະຕິບັດຕາມກົດໝາຍຂອງປະເທດ ແລະ ມາດຕະຖານສາກົນ.

41. ນອກຈາກການສ້າງຕັ້ງອົງການກວດສອບທີ່ສະເໜີ ໃນວັກ 37 ຂ້າງເທິງແລ້ວ, ຄວນມີທຸກເອກະສານທີ່ກ່ຽວຂ້ອງກັບໂຄງການໄຟຟ້າພະລັງງານນໍ້າ ເຊັ່ນ: ການປະເມີນຜົນກະທົບ ແລະ ແຜນການຄຸ້ມຄອງ ແລະ ການຕິດຕາມກວດກາດ້ານສິ່ງແວດລ້ອມ ແລະ ດ້ານສັງຄົມ ແລະ ແຜນການຄຸ້ມຄອງ ແລະ ຄວນມີໃຫ້ສາທາລະນະກ່ຽວກັບຂໍ້ມູນທີ່ອະທິບາຍວ່າ ໂຄງການປະກອບສ່ວນຄືແນວໃດ ເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ ແລະ ການພັດທະນາແບບຍືນຍົງ.

42. ລັດຖະບານ ຄວນທົບທວນສະຖານະການຂອງຜູ້ທີ່ໄດ້ຮັບຜົນກະທົບຈາກເຂື່ອນເຊປຽນ-ເຊນໍ້ານ້ອຍແຕກ, ລວມທັງປະຊາຊົນທີ່ຖືກຍົກຍ້າຍ ທີ່ຍັງຢູ່ໃນບ່ອນພັກເຊົາຊົ່ວຄາວ ແລະ ຜູ້ທີ່ໄດ້ລາຍງານເຖິງຄວາມຊັກຊ້າໃນການໄດ້ຮັບການສະໜັບສະໜູນດ້ານການເງິນ. ເຖິງແມ່ນວ່າ ລັດຖະບານຢືນຢັນວ່າ ຂໍ້ກ່າວຫາຂອງການຊັກຊ້າແມ່ນບໍ່ມີມູນຄວາມຈິງກໍ່ຕາມ, ແຕ່ວ່າ ຜູ້ລາຍງານພິເສດໄດ້ຮັບການລາຍງານທີ່ສອດຄ່ອງກັນ ແລະ ແບບເປັນເອກະລາດ ກ່ຽວກັບ ການຊົດເຊີຍດ້ານການເງິນທີ່ຊັກຊ້າ ຈາກຜູ້ທີ່ອາໄສຢູ່ໃນຄ້າຍຕ່າງໆທີ່ແຕກຕ່າງກັນ. ປະຊາຊົນຄວນໄດ້ຮັບການຊົດເຊີຍຢ່າງທັນການ ສຳລັບການສູນເສຍທີ່ດິນ ແລະ ຊັບສິນຂອງຕົນ. ເຖິງແມ່ນວ່າລັດຖະບານໄດ້ຊີ້ໃຫ້ເຫັນວ່າ ຕົນມີຈຸດປະສົງເພື່ອໃຫ້ປະຊາຊົນມີຂໍ້ມູນກ່ຽວກັບການກຳນົດເວລາຕອບສະໜອງ ແລະ ໃຫ້ຄຳປຶກສາກັບພວກເຂົາຢ່າງມີຄວາມໝາຍກ່ຽວກັບແຜນການທີ່ມີທ່າແຮງ, ຜູ້ສົນທະນາຫຼາຍຄົນໄດ້ລາຍງານວ່າ ພວກເຂົາມີຂໍ້ມູນໜ້ອຍ ຫຼື ບໍ່ໄດ້ຮັບການປຶກສາຫາລືທັງເລີຍ. ລັດຖະບານ ຍັງຄວນໃຫ້ການສະໜັບສະໜູນດ້ານຈິດຕະ ສາດ, ໂດຍສະເພາະຕໍ່ແມ່ຍິງ.

43. ຜູ້ປະຕິບັດງານສາກົນທີ່ຍັງມີຄວາມຄິດໃນແງ່ດີຕໍ່ຂະແໜງໄຟຟ້າພະລັງງານນໍ້າ ຄວນໃຫ້ເຫດຜົນແບບຍືນຍົງຂອງບັນດາໂຄງການສະເພາະ, ໃນກໍລະນີທີ່ບໍ່ມີການສະສົມຢ່າງລະອຽດ, ແທນທີ່ຈະເປັນການປະເມີນຜົນແບບຄັ້ງດຽວ, ຄວນເປັນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງທຸກໂຄງການທີ່ມີຢູ່ແລ້ວ ແລະ ທີ່ໄດ້ວາງແຜນໄວ້ແລ້ວ. ໃນຄວາມຈິງແລ້ວ ທະນາຄານໂລກ ຄວນພິຈາລະນາເຖິງວິທີການທີ່ຂະແໜງໄຟຟ້າພະລັງງານນໍ້າ ຄວນປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ, ໃນແງ່ຂອງການສ້າງລາຍຮັບທີ່ຕໍ່າ, ການຂາດຄວາມໂປ່ງໃສ, ຄວາມສາມາດທີ່ຈຳກັດໃນການຕິດຕາມກວດກາ ແລະ ການບັງຄັບໃຊ້ກົດໝາຍ, ການສ້າງວຽກເຮັດງານທຳຕໍ່າສຸດ ແລະ ປັກທຸງການລົງທຶນໃສ່ການບໍລິການສັງຄົມ ຄືແນວໃດ.

## IV. ບັນດາໂຄງການປົກປ້ອງສັງຄົມທີ່ສຳຄັນ

44. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບໍ່ມີລະບົບປົກປ້ອງສັງຄົມທີ່ມີການເຄື່ອນໄຫວແບບຮອບດ້ານ ແລະ ປະຊາຊົນຕ້ອງອີງໃສ່ເຄືອຂ່າຍທີ່ຂຶ້ນກັບຍາດຕິພີ່ນ້ອງ, ບ້ານ, ຊົນເຜົ່າ ຫຼື ການອຸປະຖຳ. ບ່ອນໃດ

ທີ່ມີໂຄງການສະໜັບສະໜູນ ເຊັ່ນ: ຜູ້ທີ່ຢູ່ໃນຂະແໜງເສດຖະກິດຢ່າງເປັນທາງການ, ຂະແໜງການເຫຼົ່ານັ້ນກໍ່ບໍ່ໄດ້ດຳເນີນການຢ່າງເປັນປົກກະຕິສະເໝີໄປ. ນອກນັ້ນ, ຜູ້ລາຍງານພິເສດໄດ້ຮັບລາຍງານທີ່ສອດຄ່ອງກັນຂອງໂຮງຮຽນ ແລະ ໂຮງໝໍວ່າ ມີການເກັບຄ່າທຳນຽມແບບບໍ່ເປັນທາງການ ເຊິ່ງເປັນການກີດຂວາງປະຊາຊົນຜູ້ທຸກຍາກ ບໍ່ສາມາດເຂົ້າເຖິງ ຫຼື ເຮັດໃຫ້ສິ່ງນັ້ນເປັນໄປບໍ່ໄດ້. ລັດຖະບານ ຄວນຕິດຕາມກວດກາບັນຫາເຫຼົ່ານັ້ນ, ດຳເນີນການເພື່ອຢຸດຕິການໃຫ້ສິນບົນດັ່ງກ່າວ, ລວມທັງ ຄວາມຮັບຜິດຊອບຕໍ່ປະຊາຊົນ ແລະ ຈັດສັນງົບປະມານໃນວົງກ້ວາງ ເພື່ອກຳຈັດທຸກຄວາມຕ້ອງການຂອງແຫຼ່ງລາຍໄດ້ເສີມ. ລັດຖະບານ ຄວນຢຸດຕິການປະຕິບັດຕົວຈິງການຈ່າຍເງິນໃຫ້ພະນັກງານລັດ ໃນເວລາມີການຊັກຊ້າ ຫຼື ຮຽກຮ້ອງໃຫ້ຄູເຮັດວຽກ ໂດຍບໍ່ໄດ້ຮັບຄ່າຈ້າງ.[30]

## A. ດ້ານສາທາລະນະສຸກ

45. ການເຂົ້າເຖິງການຮັກສາສຸຂະພາບ ແລະ ການປະກັນສຸຂະພາບທີ່ສາມາດຈ່າຍໄດ້ແມ່ນສິ່ງສຳຄັນທີ່ສຸດ ເພື່ອຮັບປະກັນວ່າຄ່າໃຊ້ຈ່າຍດ້ານສາທາລະນະສຸກ ບໍ່ໄດ້ພັກດັນປະຊາຊົນໃຫ້ຕົກຢູ່ໃນຄວາມທຸກຍາກ. ການປັບປຸງການເຂົ້າເຖິງການຮັກສາສຸຂະພາບທີ່ສາມາດຈ່າຍໄດ້ ໃນໄລຍະທີ່ຜ່ານມາ ສະແດງເຖິງຄວາມກ້າວໜ້າຢ່າງແທ້ຈິງ. ເຖິງຢ່າງໃດກໍ່ຕາມ, ຜູ້ລາຍງານພິເສດໄດ້ຮັບການລາຍງານທີ່ສອດຄ່ອງກັນ ກ່ຽວກັບການຮັກສາສຸຂະພາບທີ່ມີຄຸນນະພາບຕໍ່າ, ອັດຕາກວມເອົາດ້ານສາທາລະນະສຸກຍັງບໍ່ພຽງພໍໃນເຂດຊົນນະບົດ ແລະ ປະຊາຊົນຈຳນວນຫຼາຍບໍ່ສາມາດຈ່າຍຄ່າປິ່ນປົວສຸກເສີນຂັ້ນພື້ນຖານໄດ້.

46. ລັດຖະບານບໍ່ສະໜອງງົບປະມານໃນການຮັກສາສຸຂະພາບຢ່າງພຽງພໍ ຫຼື ບໍ່ສະໜອງງົບປະມານທີ່ພຽງພໍ ເພື່ອຮັບປະກັນວ່າ ປະຊາຊົນຜູ້ທຸກຍາກສາມາດເຂົ້າເຖິງການປິ່ນປົວສຸຂະພາບ. ເປີເຊັນການໃຊ້ຈ່າຍດ້ານສາທາລະນະສຸກ ໃນ GDP ຢູ່ໃນລະດັບຕໍ່າທີ່ສຸດໃນພາກພື້ນ[31]. ທະນາຄານໂລກພົບວ່າ, ໃນບັນດາຜູ້ທີ່ຢູ່ໃນ ຫຼື ຢູ່ໃກ້ກັບຄວາມທຸກຍາກ, 13 ສ່ວນຮ້ອຍ ແມ່ນຢູ່ໃນສະຖານະການດັ່ງກ່າວ ຍ້ອນວ່າມີບັນຫາດ້ານສຸຂະພາບ[32]. ໃນລະຫວ່າງການຢ້ຽມຢາມຂອງຜູ້ລາຍງານພິເສດ, ເຈົ້າໜ້າທີ່ກະຊວງສາທາລະນະສຸກກ່າວວ່າ ປະຊາຊົນ 94 ສ່ວນຮ້ອຍ ໄດ້ຮັບການຄຸ້ມຄອງໂດຍກອງທຶນປະກັນສຸຂະພາບ, ເຊິ່ງສະໜອງການຄຸ້ມຄອງ ແລະ ການປິ່ນປົວເດັກໂດຍບໍ່ເສຍຄ່າ ສຳລັບເດັກອາຍຸຕໍ່າກ່ວາ 5 ປີ, ເຖິງຢ່າງໃດກໍ່ຕາມ[33], ພວກເຂົາບໍ່ສາມາດເວົ້າໄດ້ວ່າ ມີຈັກຄົນ ໃນຈຳນວນນັ້ນໄດ້ເຂົ້າເຖິງການຮັກສາສຸຂະພາບແລ້ວ[34].

47. ການເຂົ້າເຖິງການຮັກສາສຸຂະພາບຍັງບໍ່ສະເໝີພາບທີ່ສຸດ. ປະຊາຊົນຈາກກຸ່ມປະຊາກອນທຸກຍາກທີ່ສຸດ ແລະ ຜູ້ທີ່ຢູ່ໃນເຂດຊົນນະບົດມີການເຂົ້າເຖິງຢ່າງຈຳກັດ[35]. ເຖິງແມ່ນວ່າ ຢູ່ໃນບັນດາບ້ານທີ່ມີສຸກສາລາແລ້ວ, ປະຊາຊົນໄດ້ລາຍງານຢ່າງເປັນປົກກະຕິວ່າ ພວກເຂົາຕ້ອງໄດ້ເດີນທາງໄປໂຮງໝໍເມືອງ ຫຼື ໂຮງໝໍແຂວງ ສຳລັບບັນຫາສຸຂະພາບທີ່ຮ້າຍແຮງ ແລະ ສຳລັບພວກເຂົາຫຼາຍຄົນ, ຄ່າໃຊ້ຈ່າຍໃນການຮັກສາສຸຂະພາບ ແລະ ການເດີນທາງເປັນສິ່ງກີດຂວາງພວກເຂົາຈາກການສະແຫວງຫາການປິ່ນປົວ. ໃນເມືອງໜຶ່ງ, ເຈົ້າໜ້າທີ່ລັດຖະບານຍອມຮັບວ່າ 22 ບ້ານ ໃນຈຳນວນ 78 ບ້ານບໍ່ສາມາດເຂົ້າເຖິງການຮັກສາສຸຂະພາບໃນລະດູຝົນ.

48. ລັດຖະບານ ຄວນເພີ່ມງົບປະມານດ້ານສາທາລະນະສຸກ ໃຫ້ສອດຄ່ອງກັບທ່າອ່ຽງຂອງພາກພື້ນ ແລະສ້າງລາຍລະອຽດຂອງປະຊາກອນທີ່ບໍ່ສາມາດເຂົ້າເຖິງການຮັກສາສຸຂະພາບຢ່າງພຽງພໍ. ລັດຖະບານ ຄວນຮັບຮອງເອົາແຜນການປັບປຸງການເຂົ້າເຖິງຂອງກຸ່ມຄົນເຫຼົ່ານັ້ນຢ່າງເປັນລະບົບ, ຊ່ວຍໃຫ້ສຸກສາລາທີ່ຫ່າງໄກສອກ ຫຼີກສາມາດຮັບມືກັບສິ່ງທ້າທາຍໃນລະດູຝົນໄດ້ດີຂຶ້ນ ແລະ ສ້າງແຜນການເພື່ອເຮັດໃຫ້ການເດີນທາງຈາກບ້ານໄປຫາໂຮງໝໍໃກ້ຄຽງໃນລາຄາທີ່ສາມາດຈ່າຍໄດ້.

---

30 Bertelsmann Stiftung, “BTI 2018: ບົດລາຍງານປະເທດລາວ”, ດັດຊະນີການປ່ຽນແປງ BTI. ຄັດຈາກ www.bti-project.org/en/reports/country-reports/detail/itc/LAO.

31 ອົງການອະນາໄມໂລກ, “ການເງິນດ້ານສາທາລະນະສຸກ”. ຄັດຈາກ http://www.wpro.who.int/laos/topics/health_financing/en/.

32 ທະນາຄານໂລກ,“ນະໂຍບາຍຄວາມທຸກຍາກຂອງລາວໂດຍຫຍໍ້: ການຈັດກຸ່ມຄົນທຸກຍາກ ແລະ ຜົນປະໂຫຍດຂອງມັນໃນການອອກແບບນະໂຍບາຍ,” ເດືອນທັນວາ ປີ 2017, ໜ້າ 8

33 ສະມາຄົມເພື່ອການພັດທະນາແມ່ຍິງ ແລະ ການສຶກສາກົດໝາຍ,“ ບົດລາຍງານການປະເມີນຄວາມສາມາດ: ການຈັດຕັ້ງປະຕິບັດ CEDAW ໃນສປປລາວ”, ເດືອນມິຖຸນາ ປີ 2016, ໜ້າ 10

34 ການພົບປະປະຊຸມກັບກະຊວງສາທາລະນະສຸກ, ວັນທີ 26 ເດືອນມີນາ ປີ 2019

35 ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສູນສະຖິຕິແຫ່ງຊາດ, "ການສຳຫຼວດຕົວຊີ້ວັດດ້ານສັງຄົມຂອງລາວຄັ້ງທີ II", p. 24

## B. ການສຶກສາ

49. ການເຂົ້າເຖິງການສຶກສາທີ່ມີຄຸນນະພາບສູງຢ່າງມີຄວາມໝາຍ ແມ່ນສິ່ງຈຳເປັນເພື່ອສ້າງເສັ້ນທາງຫຼຸດພົ້ນອອກຈາກຄວາມທຸກຍາກ ສໍາລັບເດັກນ້ອຍລາວ ແລະ ການພັດທະນາ ກໍາລັງແຮງງານທີ່ມີສີມື. ເຖິງແມ່ນວ່າ ກະຊວງສຶກສາທິການ ແລະ ກິລາ ມີຄວາມມຸ່ງໝັ້ນທີ່ຈະປັບປຸງການເຂົ້າເຖິງ ແລະ ໄດ້ລາຍງານຄວາມຄືບໜ້າ ໃນ ອັດຕາສ່ວນການເຂົ້າຮຽນ ແລະ ອັດຕາສ່ວນການຮັກສາບໍ່ໃຫ້ນັກຮຽນປະລະການຮຽນ, ແຕ່ວ່າ ການຈັດສັນຊັບພະຍາກອນທີ່ບໍ່ພຽງພໍສໍາລັບການສຶກສາຈະທໍາລາຍໂອກາດຕ່າງໆຂອງການປັບປຸງແບບຍືນຍົງ.[36]

50. ຜູ້ທີ່ມີການສຶກສາໜ້ອຍທີ່ສຸດ ມີໂອກາດຕໍ່າທີ່ສຸດທີ່ຈະຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ມີຄວາມເປັນໄປໄດ້ສູງທີ່ສຸດທີ່ຈະຕົກຢູ່ໃນສະພາບຕໍ່າກວ່າເສັ້ນຄວາມທຸກຍາກ[37]. ການເຂົ້າເຖິງການສຶກສາ ສາມາດເພີ່ມຜະລິດຕະພາບດ້ານກະສິກໍາຂອງຄອບຄົວ ຫຼື ເຮັດໃຫ້ພວກເຂົາຫັນປ່ຽນອອກຈາກວຽກກະສິກໍາໄດ້, ເຖິງຢ່າງໃດກໍ່ຕາມ, ຜູ້ທຸກຍາກ ພັດມີການເຂົ້າເຖິງການສຶກສາໜ້ອຍ. ມີພຽງແຕ່ 58ສ່ວນຮ້ອຍ ຂອງເດັກນ້ອຍໃນກຸ່ມຄົນທຸກຍາກທີ່ສຸດ ຈົບການສຶກສາຊັ້ນປະຖົມ, ທຽບກັບ 98ສ່ວນຮ້ອຍ ຂອງເດັກນ້ອຍໃນກຸ່ມຄົນຮັ່ງທີ່ສຸດ[38]. ເດັກນ້ອຍທີ່ມີຊີວິດຢູ່ໃນຄວາມທຸກຍາກສາມາດຖືກດຶງອອກຈາກໂຮງຮຽນ ຍ້ອນຄ່າໃຊ້ຈ່າຍ ແລະ ຄວາມຕ້ອງການໃຫ້ພວກເຂົາເຮັດວຽກເພື່ອລ້ຽງຄອບຄົວ.

51. ເຂດຊົນນະບົດ ມີການເຂົ້າເຖິງການສຶກສາຢ່າງຈໍາກັດທີ່ສຸດ. ເຖິງແມ່ນວ່າບ້ານສ່ວນໃຫຍ່ມີໂຮງຮຽນປະຖົມ, ແຕ່ວ່າ 57 ສ່ວນຮ້ອຍ ຂອງໂຮງຮຽນປະຖົມບໍ່ມີຄົບທັງໝົດ 5 ຊັ້ນ ແລະ ຫຼາຍບ້ານຍັງບໍ່ມີໂຮງຮຽນຊັ້ນມັດທະຍົມ. ເດັກນ້ອຍສ່ວນຫຼາຍຕ້ອງເດີນທາງໄກຈາກບ້ານເພື່ອເຂົ້າໂຮງຮຽນມັດທະຍົມ ຫຼື ເພື່ອຮຽນຈົບຊັ້ນປະຖົມ[39]. ລັດຖະບານ ຄວນຄົ້ນຄວ້າຫາທາງເລືອກໃນການຂົນສົ່ງທີ່ມີຫົວຄິດປະດິດສ້າງ ແລະ ການຈັດຫາທີ່ພັກອາໄສທີ່ປອດໄພ ແລະ ພຽງພໍ ສໍາລັບນັກຮຽນ, ເພື່ອເປີດກວ້າງການເຂົ້າເຖິງການສຶກສາຢ່າງແທ້ຈິງໃນເຂດຊົນນະບົດ.

52. ຄຸນນະພາບການສຶກສາຍັງຕໍ່າຢ່າງເປັນບັນຫາ. ທະນາຄານໂລກ ຄາດຄະເນວ່າ ການສຶກສາຂອງລາວ 10,8 ປີ ເທົ່າກັບ 6.4 ປີທີ່ໄດ້ຮັບການປັບປຸງດ້ານຄຸນນະພາບ. ໃນການສຶກສາຄົ້ນຄ້ວາບົດໜຶ່ງ, ເກືອບ 1/3 ຂອງນັກຮຽນຊັ້ນປໍ 2 ໄດ້ຄະແນນ 0 ດ້ານຄວາມສາມາດໃນການອ່ານ ແລະ 57ສ່ວນຮ້ອຍ ໄດ້ຮັບຄະແນນ 0 ໃນຄວາມເຂົ້າໃຈຈາກການອ່ານ.[40]

53. ຄວນເພີ່ມງົບປະມານດ້ານການສຶກສາ ເພື່ອໃຫ້ສອດຄ່ອງກັບມາດຕະຖານຂອງພາກພື້ນ ແລະ ລັດຖະບານ ຄວນປະເມີນວ່າ ເປັນຫຍັງວິທີການໃນປັດຈຸບັນຈຶ່ງພາໃຫ້ມີຜົນໄດ້ຮັບທີ່ບໍ່ດີດັ່ງກ່າວ. ເງິນສໍາລັບເງິນເດືອນແມ່ນສິ່ງສໍາຄັນ, ແຕ່ກໍ່ຍັງຈໍາເປັນ ສໍາລັບຄ່າໃຊ້ຈ່າຍໃນການດໍາເນີນງານ, ອຸປະກອນການສິດສອນ, ການຝຶກອົບຮົມຄູ ແລະ ໂຄງລ່າງພື້ນຖານຂອງໂຮງຮຽນ. ອີງຕາມທະນາຄານໂລກ, ປະມານເຄິ່ງໜຶ່ງຂອງໂຮງຮຽນທັງໝົດມີຫຼັງຄາຮົ່ວ ແລະ ໜ້ອຍກວ່າເຄິ່ງໜຶ່ງ ມີວິດຖ່າຍ.[41]

54. ຕາມຫຼັກການແລ້ວ, ປະເທດລາວໄດ້ຮັບຮອງເອົາການສຶກສາແບບຮຽນຮ່ວມ ແລະ ເດັກພິການທັງໝົດ 5,075 ຄົນໄດ້ເຂົ້າໂຮງຮຽນຫຼັກ. ຈານວນດັ່ງກ່າວແມ່ນຍັງຕໍ່າຫຼາຍ, ແຕ່ເຖິງຢ່າງໃດກໍ່ຕາມ, ອັນນີ້ແມ່ນທຽບໃສ່ຈໍານວນຜູ້ທີ່ຄວນໄດ້ຮັບຜົນປະໂຫຍດຈາກໂຄງການດັ່ງກ່າວ. ລັດຖະບານ ແລະ ຄູ່ຮ່ວມງານສາກົນ ຄວນເອົາໃຈໃສ່ປະເມີນຜົນຕົວຈິງດ້ານຈໍານວນ ແລະ ດ້ານຄວາມຕ້ອງການຂອງນັກຮຽນພິການໃນທົ່ວປະເທດ ແລະ ສ້າງບັນດາໂຄງການທີ່ເໝາະສົມ ເພື່ອຂະຫຍາຍການເຂົ້າຮຽນໃຫ້ໄດ້ຫຼາຍ.

---

36 ທະນາຄານໂລກ, "ການຕິດຕາມກວດກາເສດຖະກິດຂອງສປປລາວ," ເດືອນມັງກອນ ປີ 2019, p. 47. ຄັດຈາກ http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf.

37 Ibid., pp. 34–35.

38 ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສູນສະຖິຕິແຫ່ງຊາດ, "ການສໍາຫຼວດຕົວຊີ້ວັດດ້ານສັງຄົມຂອງລາວຄັ້ງທີ II", p. 45

39 ທະນາຄານໂລກ, "ການຕິດຕາມກວດກາເສດຖະກິດຂອງ ສປປລາວ," ເດືອນມັງກອນ ປີ 2019, p.53

40 Ibid., p. 45.

41 Ibid., p. 47.

# V. ສິ່ງທ້າທາຍ ແລະ ໂອກາດ

## A. ລະເບີດທີ່ບໍ່ທັນແຕກ

55. ລະເບີດທີ່ບໍ່ທັນແຕກ ຍັງສືບຕໍ່ເປັນສິ່ງຂັບເຄື່ອນຄວາມທຸກຍາກ, ດັ່ງທີ່ໄດ້ຮັບຮູ້ຢ່າງຖືກຕ້ອງແລ້ວວ່າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ໄດ້ຮັບຮອງເອົາການບັນລຸເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດຂອງຕົນເອງ ໃນການຫຼຸດຜ່ອນຜົນກະທົບຈາກລະເບີດທີ່ບໍ່ທັນແຕກ. ອີງຕາມຂໍ້ມູນຂອງອົງການ Legacies of War, ໃນລະຫວ່າງປີ 1964 ແລະ ປີ 1973, ສະຫະລັດອາເມລິກາໄດ້ຖິ້ມລະເບີດຫຼາຍກວ່າ 2 ລ້ານໂຕນ ໃນພາລະກິດການຖິ້ມລະເບີດ 580,000 ຄັ້ງໃນທົ່ວປະເທດ. ລະເບີດລູກຫວ່ານປະມານ 80 ລ້ານໜ່ວຍຍັງບໍ່ທັນລະເບີດ, ເປັນຜົນພາໃຫ້ພົນລະເຮືອນປະມານ 50,000 ຄົນເສຍຊີວິດ ຫຼື ໄດ້ຮັບບາດເຈັບ. ການສາຫຼວດ ແລະ ຕົວເລກຂໍ້ມູນ ຊີ້ໃຫ້ເຫັນວ່າ 1/3 ຂອງປະເທດຍັງປະປົນດ້ວຍລະເບີດທີ່ບໍ່ທັນແຕກ[42], ສະນັ້ນ ຊາວກະສິກອນບໍ່ສາມາດນຳໃຊ້ທີ່ດິນກະສິກຳ ເພື່ອລ້ຽງຄອບຄົວຂອງຕົນໂດຍບໍ່ມີຄວາມສ່ຽງຕໍ່ການເສຍຊີວິດ ຫຼື ການໄດ້ຮັບບາດເຈັບ. ລະເບີດສາມາດເຮັດໃຫ້ຄົນພິການ ເຊິ່ງເປັນການກີດກັ້ນຄົນຈາກການເຮັດວຽກ ແລະ ຍ້ອນວ່າ ການສະໜັບສະໜູນທາງສັງຄົມຍັງມີຢ່າງຈຳກັດ ຈຶ່ງອາດຈະຕ້ອງການການດູແລເບິ່ງແຍງຢ່າງໃກ້ຊິດຈາກສະມາຊິກຄອບຄົວ ເຊິ່ງເຮັດໃຫ້ສະມາຊິກຄອບຄົວຈຳນວນໜຶ່ງອີກ ຕ້ອງອອກຈາກການເຮັດວຽກ.

56. ບັນດາຄູ່ຮ່ວມພັດທະນາ ໂດຍສະເພາະແມ່ນສະຫະລັດອາເມລິກາ, ຄວນດຳເນີນການຫຼາຍຂຶ້ນຕື່ມອີກ ເພື່ອເກັບກູ້ລະເບີດທີ່ບໍ່ທັນແຕກ ແລະ ໃຫ້ການສະໜັບສະໜູນແກ່ຜູ້ທີ່ໄດ້ຮັບຜົນກະທົບ. ອີງຕາມການຄາດຄະເນຈາກແຫຼ່ງໜຶ່ງ, ເຖິງປັດຈຸບັນນີ້ ມີພຽງແຕ່ 1 ສ່ວນຮ້ອຍ ຂອງລະເບີດທີ່ບໍ່ທັນແຕກເທົ່ານັ້ນ ທີ່ໄດ້ຮັບການເກັບກູ້[43]. ແຕ່ໃນສະພາບການດຽວກັນນັ້ນ, ກໍ່ບໍ່ຄວນນຳໃຊ້ບັນຫາດັ່ງກ່າວເພື່ອບ່ຽງເບນຄວາມສົນໃຈຈາກຂໍ້ບົກຜ່ອງຫຼາຍປະການຂອງນະໂຍບາຍການລຶບລ້າງຄວາມທຸກຍາກຂອງລັດຖະບານ.

## B. ຄວາມທຸກຍາກໃນເຂດຊົນນະບົດ

57. ປະກົດວ່າປະຊາຊົນໃນເຂດຊົນນະບົດໄດ້ຮັບຜົນກະທົບຈາກຄວາມທຸກຍາກ. ອີງຕາມສະຖິຕິຫຼ້າສຸດທີ່ມີຢູ່, 71 ສ່ວນຮ້ອຍ ຂອງປະຊາກອນອາໄສຢູ່ເຂດຊົນນະບົດ ແລະ ອັດຕາສ່ວນຄວາມທຸກຍາກໃນເຂດຊົນນະບົດແມ່ນ 4 ເທົ່າຂອງອັດຕາສ່ວນໃນເຂດຕົວເມືອງ[44]. ນອກນັ້ນ, 88 ສ່ວນຮ້ອຍ ຂອງຜູ້ທີ່ດາລົງຊີວິດໃນຄວາມທຸກຍາກແມ່ນຊາວຊົນນະບົດ[45]. 14 ສ່ວນຮ້ອຍ ຂອງບັນດາບ້ານໃນເຂດຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ ແລະ ເຖິງແມ່ນວ່າເປັນບ້ານທີ່ມີເສັ້ນທາງ ກໍ່ບໍ່ສາມາດເຂົ້າເຖິງໄດ້ໃນລະດູຝົນ ເຊິ່ງເປັນການຈຳກັດບໍ່ໃຫ້ຜູ້ຢູ່ອາໄສສາມາດເຂົ້າເຖິງການບໍລິການຂັ້ນພື້ນຖານ ແລະ ຕະຫຼາດ[46]. ປະຊາຊົນເຂດຊົນນະບົດບໍ່ສາມາດເຂົ້າເຖິງການບໍລິການດ້ານສາທາລະນະສຸກ ແລະ ການສຶກສາຢ່າງພຽງພໍ ແລະ ເປັນຜູ້ແບກຫາບພາລະອັນໜັກໜ່ວງຂອງນະໂຍບາຍຕ່າງໆ ເຊັ່ນ: ການສາປະທານທີ່ດິນ ແລະ ການຍົກຍ້າຍຈັດສັນຕັ້ງຖິ່ນຖານໃໝ່, ໃນການເຂົ້າເຖິງທີ່ດິນ, ການດຳລົງຊີວິດ ແລະ ການຄ້ຳປະກັນສະບຽງອາຫານຂອງພວກເຂົາ[47].

58. ເຖິງແມ່ນວ່າລັກສະນະຂອງຄວາມຫ່າງໄກສອກຫຼີກ ແລະ ກະແຈກກະຈາຍຂອງປະຊາກອນຊົນນະບົດເປັນບັນຫາທ້າທາຍຫຼາຍຢ່າງກໍ່ຕາມ, ແຕ່ວ່າ ລັດຖະບານກໍ່ບໍ່ຄວນທໍ້ຖອຍຕໍ່ການເຮັດວຽກເພື່ອໃຫ້ຊຸມຊົນຊົນນະບົດ ສາມາດເຂົ້າເຖິງການບໍລິການ ແລະ ພື້ນຖານໂຄງລ່າງຢ່າງເທົ່າທຽມກັນ ເພື່ອຫຼີກລ່ຽງການປ່ອຍປະໃຫ້ພວກເຂົາມີສະຖານະພາບຄົນຊັ້ນ 2 ຫຼື ຮວບຮວມເປັນບັນຫາ ຫຼື ເປັນໂຄງການຍົກຍ້າຍຖິ່ນຖານ.

---

[42] ອົງການ Legacies of War,"ຄວາມຈິງຂອງລະເບີດລູກຫ່ວານ", ເດືອນມັງກອນ ປີ 2019, p. 33

[43] Ibid.

[44] ທະນາຄານໂລກ,“ ການຕິດຕາມກວດກາເສດຖະກິດຂອງສປປລາວ”, ເດືອນມັງກອນ

[45] ທະນາຄານໂລກ,“ຂໍ້ມູນຄວາມທຸກຍາກໃນສປປລາວ" p. 9.

[46] ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ, ສູນສະຖິຕິແຫ່ງຊາດ, "ການສຳຫຼວດຕົວຊີ້ວັດດ້ານສັງຄົມລາວຄັ້ງທີ II", p. 3.

[47] ເບິ່ງຕົວຢ່າງ, Miles Kenney-Lazar (ກຸ່ມວຽກປະເດັນທີ່ດິນ, ສະມາຄົມທົ່ວໂລກເພື່ອປະຊາຊົນ ແລະ ສິ່ງແວດລ້ອມ ແລະ ອົງການບ້ານຈຸດສຸມສາກົນ),“ ການເຊື່ອມໂຍງການຄ້ຳປະກັນສະບຽງອາຫານ ແລະ ການຄອບຄອງທີ່ດິນໃນສປປລາວ”, ປີ 2016, p. vii-viii. ຄັດຈາກ https://data.opendevelopmentmekong.net/dataset/2016-6/resource/ fbacdd35-9ca3-45de-b4bb-fa47d53852cd?type=library_record.

## C. ກຸ່ມຊົນເຜົ່າສ່ວນໜ້ອຍ

59. ກຸ່ມຊົນເຜົ່າສ່ວນໜ້ອຍມີປະມານ 45ສ່ວນຮ້ອຍ ຂອງປະຊາກອນ[48]. ພວກເຂົາປະເຊີນກັບຄວາມທຸກຍາກໃນອັດຕາສ່ວນສູງກ່ວາ[49] , ສ່ວນຫຼາຍອາໄສຢູ່ເຂດຊົນນະບົດທີ່ມີການບໍລິການທາງສັງຄົມ ແລະ ພື້ນຖານໂຄງລ່າງທີ່ຈຳກັດ ແລະ ອາດຈະບໍ່ເວົ້າພາສາລາວ[50]. ທະນາຄານໂລກພົບວ່າ ກຸ່ມຊົນເຜົ່າສ່ວນໜ້ອຍຫຼ້າຫຼັງກ່ວາ ກຸ່ມຊົນ ເຜົ່າລາວ-ໄທ ທີ່ເປັນສ່ວນໃຫຍ່ ໃນທຸກລະດັບດ້ານເສດຖະກິດ[51].

60. ສິ່ງສຳຄັນ, ບໍ່ສາມາດອະທິບາຍໄດ້ຢ່າງເຕັມສ່ວນກ່ຽວກັບຊ່ອງຫ່ວາງລະຫວ່າງກຸ່ມຊົນເຜົ່າສ່ວນໜ້ອຍ ແລະ ກຸ່ມຊົນເຜົ່າລາວ-ໄຕ ໂດຍຄວາມແຕກຕ່າງດ້ານຄຸນລັກສະນະຕ່າງໆ ເຊັ່ນ: ຂະໜາດຄົວເຮືອນທີ່ໃຫຍ່ກ່ວາ ຫຼື ການເຂົ້າເຖິງການສຶກສາ ແລະ ພື້ນຖານໂຄງລ່າງທີ່ຈຳກັດກ່ວາ[52]. ເຖິງຢ່າງໃດກໍ່ຕາມ, ລັດຖະບານບໍ່ໄດ້ຮັບຮູ້ເຖິງຄວາມເປັນຢູ່ຂອງກຸ່ມຊົນເຜົ່າ ແລະ ໄດ້ຮຽກຮ້ອງໃຫ້ຜູ້ລາຍງານພິເສດ ໃຊ້ຄຳວ່າ "ຊົນເຜົ່າ" ແທນ, ແຕ່ວ່າ ການຫຼີກລ່ຽງການນຳໃຊ້ຄຳສັບສະເພາະ ຈະບໍ່ສາມາດແກ້ໄຂຄວາມຫຼຸດໂຕນຢ່າງແທ້ຈິງທີ່ປະຊາຊົນຊົນເຜົ່າສ່ວນໜ້ອຍກຳລັງປະເຊີນຢູ່. ລັດຖະບານ ຄວນຮັບຮູ້ວ່າ ນະໂຍບາຍປັດຈຸບັນຂອງຕົນ ກຳລັງລະເລີຍຕໍ່ກຸ່ມຊົນເຜົ່າສ່ວນໜ້ອຍ ແລະ ບັ່ນທອນໂອກາດໃນການພັດທະນາເສດຖະກິດ.

61. ລັດຖະບານ ຄວນປັບວິທີການການແບບເຮັດໃຫ້ຕົນເອງຢູ່ໃນສະຖານະພາບເປັນຜູ້ຊະນະ ຕໍ່ການໃຊ້ພາສາຊົນເຜົ່າ. ການຢືນຢັນວ່າພາສາລາວເປັນພາສາໜຶ່ງດຽວໃນການສິດສອນ ເຮັດໃຫ້ເດັກນ້ອຍກຸ່ມຊົນເຜົ່າສ່ວນໜ້ອຍມີຂໍ້ເສຍປຽບໃນໂຮງຮຽນ[53] . ຫຼາຍປະເທດປະເຊີນກັບສິ່ງທ້າທາຍໃນການມີຫຼາຍພາສາເວົ້າໃນອານາເຂດປະເທດຂອງຕົນ ແລະ ຄຳຕອບກໍ່ບໍ່ແມ່ນວ່າຈະຢືນຢັນໃຫ້ການສຶກສາເປັນພາສາລາວເທົ່ານັ້ນ. ຖ້າວ່າ ລັດຖະບານຢາກນຳໃຊ້ທ່າແຮງຂອງສະມາຊິກຊຸມຊົນຊົນເຜົ່າສ່ວນໜ້ອຍ ໃຫ້ເກີດປະໂຫຍດສູງສຸດ, ລັດຖະບານຕ້ອງສ້າງແນວທາງທີ່ເໝາະສົມ ທີ່ປະສົມປະສານເອົາຄວາມມຸ່ງຫັວງຂອງຕົນ ໃນການສົ່ງເສີມພາສາລາວໃຫ້ເປັນພາສາທາງການ ພ້ອມດ້ວຍການນຳໃຊ້ພາສາທ້ອງຖິ່ນຢ່າງມີຍຸດທະສາດ. ເມື່ອໃດທີ່ມີເໝາະສົມ, ຄວນອະນຸຍາດຢ່າງເປັນທາງການໃຫ້ບັນດາຄູອາຈານ ແລະ ຜູ້ໃຫ້ບໍລິການສາທາລະນະສຸກໃນຊຸມຊົນເຫຼົ່ານັ້ນ ໃຫ້ບໍລິການເປັນພາສາທີ່ບໍ່ແມ່ນພາສາລາວ.

---

[48] Ian Baird,“ການລວມກຸ່ມຍົກຖິ່ນຖານ ແລະ ການໝູນວຽນຂອງແນວຄິດຂອງ ‘ຊົນເຜົ່າພື້ນເມືອງໃນລາວ”, ວາລະສານພູມສາດທາງການເມືອງ, vol. 46 (ເດືອນພຶດສະພາ ປີ 2015), ໜ້າ ທີ 54–64; ຂໍ້ມູນການຄາດຄະເນພົນລະເມືອງຂອງໂລກປີ 2017, "ປະຊາກອນໂລກ ປີ 2019 ແຍກຕາມປະເທດ: ປະເທດລາວ" ຄັດຈາກ http://worldpopulationreview.com; ອົງການກຸ່ມສິດທິຄົນຊົນເຜົ່າສາກົນ,“ປະເທດລາວ”, ປຶ້ມປະມວນຊາວຊົນເຜົ່າສ່ວນນ້ອຍ ແລະ ຊາວພື້ນເມືອງ, ເດືອນກໍລະກົດ ປີ 2018. ຄັດຈາກ https://minorityrights.org/country/laos/. ເຖິງຢ່າງໃດກໍ່ຕາມ, ອີງຕາມຂໍ້ມູນຂອງລັດຖະບານ, ກຸ່ມຊົນເຜົ່າລາວ-ໄຕສ່ວນໃຫຍ່ມີ 62,5% ຂອງປະຊາກອນ, ໃນກໍລະນີນີ້ກຸ່ມຊົນເຜົ່າສ່ວນນ້ອຍຈະມີເຖິງ 37,5%.

[49] ອົງການທະນາຄານໂລກ “ບົດສະຫຼຸບຫຍໍ້ນະໂຍບາຍດ້ານຄວາມທຸກຍາກຂອງລາວ: ເປັນຫຍັງຄົນຊົນເຜົ່າສ່ວນນ້ອຍຈຶ່ງທຸກຍາກ?”, ປີ 2017, ໜ້າ. 4. ຄັດຈາກ http://documents.worldbank.org/curated/en/501721505813643980/pdf/119793-WP-PovertyReport-PUBLIC-ENGLISH-and-LAO-ENGLAOFinal.pdf

[50] Elizabeth M. King ແລະ Dominique van de Walle,“ຊາວພື້ນເມືອງ, ຄວາມທຸກຍາກ ແລະ ການພັດທະນາ, ບົດທີ 7: ປະເທດລາວ, ຄວາມຫຼາກຫຼາຍດ້ານພາສາຊົນເຜົ່າ ແລະ ຂໍ້ເສຍປຽບ”, ເອກະສານທີ່ກະກຽມສຳລັບອົງການທະນາຄານໂລກ, ເດືອນມີນາ ປີ 2010, ໜ້າ. 2. ຄັດຈາກhttp://siteresources.worldbank.org/EXTINDPEOPLE/Resources/ 407801-1271860301656/ Chapter_7_Laos.pdf.

[51] ອົງການທະນາຄານໂລກ "ບົດສະຫຼຸບນະໂຍບາຍຄວາມທຸກຍາກຂອງລາວ: ເປັນຫຍັງຊົນເຜົ່າສ່ວນນ້ອຍຈຶ່ງທຸກຍາກ?”, p. 4.

[52] ອົງການທະນາຄານໂລກ "ຂໍ້ມູນຄວາມທຸກຍາກໃນສປປລາວ,” p. 14; ແລະ "ບົດບັນທຶກນະໂຍບາຍຄວາມທຸກຍາກຂອງສປປລາວ, p. 23.

[53] ແຜນງານຄວາມເຂົ້າໃຈເຖິງການເຮັດວຽກຂອງເດັກ, “ຄວາມເຂົ້າໃຈເຖິງການເຮັດວຽກຂອງເດັກ ແລະ ຜົນໄດ້ຮັບຂອງການມີວຽກເຮັດງານທຳຂອງຊາວໜຸ່ມໃນລາວ: ບົດລາຍງານສະຫຼຸບຫຍໍ້”, ນະຄອນຫຼວງໂຣມ, ເດືອນມັງກອນ ປີ 2014, ໜ້າ. 7. ຄັດຈາກ http://documents.worldbank.org/curated/en/587261545112094976/pdf/133003-WP-v1-PUBLIC-ADD-SERIES-see-103603-Laos-Summary-child-labour-youth-employment20140109-131624.pdf.

62. ຜູ້ເຂົ້າຮ່ວມສົນທະນາຫຼາຍຄົນໄດ້ກວມລວມເອົາສະຖານະພາບຂອງຊົນເຜົ່າພື້ນເມືອງເຂົ້າໃນບາງກຸ່ມຊົນເຜົ່າ. ເຖິງແມ່ນວ່າບົດລາຍງານສະບັບນີ້ບໍ່ຢູ່ໃນສະພາບການທີ່ເໝາະສົມເພື່ອແກ້ໄຂຄຳຮຽກຮ້ອງດັ່ງກ່າວ, ແຕ່ວ່າ ຜູ້ລາຍງານພິເສດໃຫ້ຂໍ້ສັງເກດວ່າ ສະຖານະພາບດັ່ງກ່າວຈະໄດ້ຮັບການສົນທະນາຕື່ມອີກ ພາຍໃຕ້ກົດໝາຍສາກົນ, ລວມທັງ ສິດທິການນຳໃຊ້ທີ່ດິນ ແລະ ຊັບພະຍາກອນຢ່າງເປັນອິດສະຫຼະ, ໄດ້ຮັບຄວາມຍິນຍອມ ແລະ ມີການແຈ້ງໃຫ້ຮູ້ກ່ອນ. ແທນທີ່ຈະປິດການສົນທະນາ, ລັດຖະບານ ຄວນມີສ່ວນຮ່ວມດ້ວຍຄວາມຫ້າວຫັນຕໍ່ສະຖານະພາບຂອງກຸ່ມຊົນເຜົ່າພື້ນເມືອງ.

## D. ບົດບາດຍິງ-ຊາຍ

63. ເຖິງວ່າ ແມ່ຍິງມີບົດບາດສຳຄັນ ໃນຊຸມຊົນບັນດາເຜົ່າພື້ນເມືອງລາວ, ໃນປັດຈຸບັນນີ້ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ແມ່ຍິງມັກຈະປະເຊີນກັບຄວາມດ້ອຍໂອກາດ ແລະ ການຈຳແນກ ເຊິ່ງເປັນຜົນສະທ້ອນໃນທາງລົບຢ່າງສຳຄັນຕໍ່ການຫຼຸດຜ່ອນຄວາມທຸກຍາກ ແລະ ສິດທິຂອງແມ່ຍິງຜູ້ທຸກຍາກ. ມີການຮຽກຮ້ອງໃຫ້ອົງການຈັດຕັ້ງທາງການສ່ວນໃຫຍ່ໃຫ້ມີຕົວແທນຂອງສະຫະພັນແມ່ຍິງລາວ ແລະ ນະໂຍບາຍອື່ນໆຢ່າງຫຼວງຫຼາຍຂອງລັດຖະບານກໍ່ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ. ເຖິງຢ່າງໃດກໍ່ຕາມ, ຫຼາຍມາດຕະການໃນການຮັບປະກັນວ່າໄດ້ລວມເອົາແມ່ຍິງເຂົ້າໃນການຕັດສິນໃຈຢ່າງຈິງຈັງນັ້ນ ຍັງເປັນພຽງຄວາມມຸ່ງຫວັງ ແລະ ຮູບການ ທີ່ເຮັດໄດ້ພຽງເລັກໜ້ອຍທີ່ສຸດ. ການໃຫ້ແມ່ຍິງຢູ່ໃຕ້ບັງຄັບບັນຊາເປັນສ່ວນຫຼາຍນັ້ນ ມີຜົນຕາມມາຢ່າງສຳຄັນດ້ານເສດຖະກິດ, ເຊິ່ງເປັນສ່ວນໜຶ່ງຂອງການປະຕິເສດສິດທິມະນຸດຂອງພວກເຂົາ.

64. ໂດຍທົ່ວໄປແລ້ວ, ແມ່ຍິງແມ່ນຢູ່ໃນລະດັບຕໍ່າກ່ວາໃນຕະຫຼາດແຮງງານ ແລະ ມີໜ້ອຍກ່ວາໃນຂະແໜງທີ່ເປັນທາງການ, ບໍ່ໄດ້ຮັບສິດທິ ແລະ ການປົກປ້ອງທາງສັງຄົມທີ່ມີຢູ່. ແມ່ຍິງກວມເອົາ 64 ສ່ວນຮ້ອຍຂອງກຳມະກອນໃນອາຊີບລະດັບພື້ນຖານ, ໃນຂະນະທີ່ຜູ້ຊາຍສ່ວນໃຫຍ່ແມ່ນພະນັກງານລັດຖະກອນ, ປະກອບອາຊີບ ແລະ ເປັນນັກວິຊາການດ້ານເຕັກນິກ. ອີງຕາມ ສະຫະພັນແມ່ຍິງລາວ, 7 ຄົນ ໃນຈຳນວນສະມາຊິກທັງໝົດ 69 ຄົນຂອງກຳມະການສູນກາງຂອງກົມການເມືອງແມ່ນແມ່ຍິງ, ເຊິ່ງມີພຽງແຕ່ 10 ສ່ວນຮ້ອຍເທົ່ານັ້ນ ແລະ ຕາມການຢັ້ງຢືນຂອງລັດຖະບານ, ປັດຈຸບັນນີ້ບໍ່ມີແມ່ຍິງເປັນເຈົ້າແຂວງທີ່ມີອຳນາດ ໃນຈຳນວນເຈົ້າແຂວງ 17 ຄົນ. ແມ່ຍິງເປັນນາຍບ້ານມີໜ້ອຍກວ່າ 3 ສ່ວນຮ້ອຍ ແລະ ໃນປີ 2012 ມີແມ່ຍິງພຽງແຕ່ 5 ສ່ວນຮ້ອຍ ຂອງສະມາຊິກໃນສະຖາບັນການຕ່າງໆໃນຂັ້ນຕັດສິນໃຈ. ຍົກເວັ້ນໃນສະພາແຫ່ງຊາດ ເຊິ່ງມີອັດຕາສ່ວນແມ່ຍິງທີ່ສູງກວ່າໃນ 27.5 ສ່ວນຮ້ອຍ[54], ປະທານ ແລະ ຮອງປະທານຂອງສະພາແຫ່ງຊາດ ກໍ່ແມ່ນແມ່ຍິງ. ການພົບປະປະຊຸມຂອງຜູ້ລາຍງານພິເສດກັບລັດຖະບານ ສ່ວນໃຫຍ່ແມ່ນຜູ້ຊາຍ, ໃນນັ້ນມີຫຼາຍຄົນສະແດງທັດສະນະຄະຕິແບບບິດາສິດທິລາດ (patriarchal - ສັງຄົມຜູ້ຊາຍເປັນໃຫ່ຍ) ຢ່າງເລິກເຊິ່ງ ແລະ ຕຳນິຕິຕຽນແມ່ຍິງ ຖ້າວ່າມີຊ່ອງຫ່ວາງໃນດ້ານຜົນສຳເລັດ. ແມ່ຍິງທີ່ດຳລົງຊີວິດໃນບ້ານ ແລະ ໃນແຄ້ມມີທ່າອ່ຽງທີ່ລາຍງານວ່າ ພວກເຂົາບໍ່ໄດ້ຮັບແຈ້ງໃຫ້ຊາບ ຫຼື ບໍ່ໄດ້ປຶກສາຫາລືນຳ ກ່ຽວກັບການຕັດສິນໃຈທີ່ສຳຄັນດ້ານການດຳລົງຊີວິດ, ລວມທັງການຍົກຍ້າຍຈັດສັນ ແລະ ຄ່າຊົດເຊີຍ, ການຈັດແຈງຂໍ້ຕົກລົງສັນຍາກະສິກຳ ຫຼື ການບັນເທົາທຸກໄພພິບັດ.

65. ລັດຖະບານຄວນກ້າວຂ້າມເກີນກ່ວາ ຄຳມຸ່ງໝັ້ນທີ່ມີຄວາມສະເໝີພາບຢ່າງເປັນທາງການ ດ້ວຍການກຳນົດເປົ້າໝາຍທີ່ມີຄວາມໝາຍ ເພື່ອອັດຊ່ອງຫວ່າງຄວາມຫຼຸດໂຕນດ້ານການສຶກສາ ແລະ ຕະຫຼາດວຽກເຮັດງານທຳ ແລະ ການສ້າງຄວາມເຂັ້ມແຂງດ້ານອຳນາດໃຫ້ແມ່ຍິງ. ຈຸດເລີ່ມຕົ້ນທີ່ດີເລີດແມ່ນການຮັບປະກັນວ່າໃນປີ 2025, 1/3 ຂອງບັນດາເຈົ້າແຂວງ ແລະ ນາຍບ້ານແມ່ນແມ່ຍິງ. ການບໍ່ມີຕົວແທນຂອງແມ່ຍິງໃນຂັ້ນດັ່ງກ່າວ ເປັນຂໍ້ຄວາມໃຫ້ຮູ້ທີ່ຊັດເຈັນແລ້ວວ່າ ສະພາບການນີ້ ສາມາດປັບປຸງໄດ້ດີກວ່ານີ້ໄດ້. ລັດຖະບານຍັງຄວນຮັບປະກັນວ່າ ກົດໝາຍທີ່ດິນສະບັບ ໃໝ່ຈະປົກປ້ອງສິດທິດ້ານທີ່ດິນຂອງແມ່ຍິງ ອີກດ້ວຍ.

## E. ເດັກນ້ອຍ

66. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງເຮັດວຽກຫຼາຍຂຶ້ນເພື່ອຮັບປະກັນໃຫ້ເດັກນ້ອຍຫຼຸດພົ້ນອອກຈາກວົງຈອນຄວາມທຸກຍາກ. ຄວາມບໍ່ສາມາດເຂົ້າເຖິງການສຶກສາ, ການບໍລິການດ້ານສາທາລະນະສຸກ ແລະ ການສະໜັບສະໜູນດ້ານສັງຄົມຢ່າງພຽງພໍ, ເດັກນ້ອຍຈຳນວນຫຼວງຫຼາຍໄດ້ປະລະການຮຽນ, ແຕ່ງງານແຕ່

[54] UNDP, "ສປປ ລາວ: ເປົ້າໝາຍ 5: ຄວາມສະເໝີພາບລະຫວ່າງຍິງ-ຊາຍ"

ອາຍຸຍັງນ້ອຍ ຫຼື ເຮັດວຽກເພື່ອລ້ຽງຄອບຄົວ ເຊິ່ງທັງໝົດນີ້ແມ່ນສິ່ງກີດຂວາງຕົ້ນຕໍ ຕໍ່ການຜ່ານຜ່າຄວາມທຸກຍາກຂ້າມຮຸ່ນຄົນ.

67. ອີງຕາມຂໍ້ມູນຂອງອົງການອຸຍນິເຊັບ, ເປັນໜ້າຕົກໃຈ ເມື່ອເຫັນວ່າເດັກນ້ອຍ 88ສ່ວນຮ້ອຍ ໃນປະເທດປະສົບກັບບາງຮູບແບບຂອງຄວາມຂາດເຂີນ[55]. ມີອັດຕາສ່ວນການແຕ່ງງານຂອງເດັກໃນລະດັບສູງ ເຊັ່ນ: ໃນກຸ່ມຄົນທຸກຍາກທີ່ສຸດ, 47ສ່ວນຮ້ອຍ ຂອງແມ່ຍິງອາຍຸ 20 ຫາ 49 ປີ ໄດ້ແຕ່ງງານແຕ່ອາຍຸ 18 ປີ[56]. ເຖິງແມ່ນວ່າມີການຫ້າມບໍ່ໃຫ້ໃຊ້ແຮງງານເດັກອາຍຸຕໍ່າກວ່າ 14 ປີ, ແຕ່ວ່າ ອີງຕາມການສໍາຫຼວດກໍາລັງແຮງງານ ແລະ ແຮງງານເດັກ ປີ 2010 ມີເດັກນ້ອຍອາຍຸ 6 ຫາ 17 ປີ 261,000 ຄົນ ພວມເຮັດວຽກ[57], ຫຼາຍຄົນເຮັດວຽກໃນສະພາບການອັນຕະລາຍ.[58]

68. ການລົງທຶນໃສ່ລະບົບການປົກປ້ອງສັງຄົມທີ່ເຂັ້ມແຂງ, ຄວາມສາມາດເຂົ້າເຖິງການສຶກສາ ແລະ ການຮັກສາສຸຂະພາບສໍາລັບເດັກແມ່ນບາດກ້າວທີ່ຈໍາເປັນໄປສູ່ການທໍາລາຍວົງຈອນຄວາມທຸກຍາກ ແລະ ການຝຶກອົບຮົມກໍາລັງແຮງງານທີ່ມີທັກສະ.

## F. ລະບຽບຂອງກົດໝາຍ

69. ຍັງບໍ່ທັນມີການຈັດຕັ້ງປະຕິບັດຢ່າງຈິງຈັງ ບັນດານິຕິກໍາກົດໝາຍ ແລະ ນະໂຍບາຍທີ່ໜ້າປະທັບໃຈທັງຫຼາຍ. ມີການສ້າງຕັ້ງໂກຕ້າ ແຕ່ວ່າບໍ່ໄດ້ບັງຄັບໃຊ້, ມີເງື່ອນໄຂຕ່າງໆທີ່ຕິດຄັດພ້ອມ ແຕ່ວ່າບໍ່ໄດ້ຮັບການຕິດຕາມກວດກາ, ໄດ້ເປີດວິທີການໃໝ່ ແຕ່ວ່າ ຍັງດາເນີນທຸລະກິດຕໍ່ໄປຕາມປົກກະຕິ.

### ການສໍ້ລາດບັງຫຼວງ

70. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈັດຢູ່ໃນອັນດັບທີ 132 ຂອງ 180 ຂອງດັດຊະນີການຮັບຮູ້ເຖິງການສໍ້ລາດບັງຫຼວງຂອງອົງການຄວາມໂປ່ງໃສສາກົນ (Transparency International) ສາລັບ ປີ 2018[59]. ການນໍາພາຂອງທ່ານນາຍົກລັດຖະມົນຕີກ່ຽວກັບບັນຫາດັ່ງກ່າວໄດ້ສ້າງຜົນກະທົບທີ່ສໍາຄັນ, ດັ່ງທີ່ໄດ້ສະແດງໃຫ້ເຫັນໃນບົດລາຍງານຂອງສື່ມວນຊົນກ່ຽວກັບການປາບປາມ "ໂຄງການຜີ" ແລະ ການໄລ່ອອກ ຫຼືການປົດຕໍາແໜ່ງເຈົ້າໜ້າທີ່ພະນັກງານ. ເນື່ອງຈາກມີຜູ້ຮ່ວມສົນທະນາຫຼາຍທ່ານອ້າງວ່າການສໍ້ລາດບັງຫຼວງຍັງແຜ່ຫຼາຍຢູ່ໃນທຸກລະດັບຂອງລັດຖະບານ, ເປັນສິ່ງຈໍາເປັນທີ່ຕ້ອງໄດ້ຮັບການແກ້ໄຂຢ່າງເປັນລະບົບ, ການດໍາເນີນຄະດີຕ່າງໆຈະເກີດຂຶ້ນໃນບ່ອນທີ່ເໝາະສົມ ແລະ ເຈົ້າໜ້າທີ່ຂັ້ນສູງ, ລວມທັງ ບັນດາລັດຖະມົນຕີ ແລະເຈົ້າແຂວງ ຕ້ອງຮັບຜິດຊອບ ເມື່ອມີຄວາມກ່ຽວຂ້ອງ. ເຖິງຢ່າງໃດກໍ່ຕາມ, ການບໍ່ມີຄວາມເສລີພາບຂອງສື່ມວນຊົນ ແລະອົງການປະຊາສັງຄົມທີ່ເປັນເອກະລາດ ຮັບປະກັນໄດ້ເລີຍວ່າ ການສໍ້ລາດບັງຫຼວງຈະບໍ່ຄ່ອຍໄດ້ຮັບການເປີດເຜີຍ.

### ການເຂົ້າເຖິງຄວາມຍຸຕິທໍາ

71. ສິ່ງກີດຂວາງຕໍ່ການເຂົ້າເຖິງຄວາມຍຸດຕິທໍາ ຍັງມີຫຼາຍ, ໂດຍສະເພາະຕໍ່ປະຊາຊົນຜູ້ທຸກຍາກ ແລະ ຜູ້ທີ່ຢູ່ເຂດຊົນນະບົດ. ສິ່ງກີດຂວາງເຫຼົ່ານັ້ນປະກອບດ້ວຍການຂາດເຂີນທະນາຍຄວາມ, ຄ່າໃຊ້ຈ່າຍ ແລະ ຄວາມຫຍຸ້ງຍາກໃນການເດີນທາງໄປສານ, ຄວາມຢ້ານກົວຕໍ່ຜົນສະທ້ອນທາງລົບ, ໂດຍສະເພາະ ຖ້າແມ່ນລັດຖະບານ ຫຼື ຜູ້ທີ່ໄດ້ຮັບການສະໜັບສະໜູນຂອງລັດຖະບານມີສ່ວນ ແລະ ຂໍ້ຈໍາກັດໃນການຮ້ອງຟ້ອງ, ຄະນະກໍາມະການ

---

[55] ອົງການຢູນິເຊັບ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ກະຊວງແຜນການ ແລະ ການລົງທຶນ,“ SDGs ແລະເດັກນ້ອຍ”, ໜ້າ 12

[56] ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສູນສະຖິຕິແຫ່ງຊາດ, "ການສໍາຫຼວດຕົວຊີ້ວັດດ້ານສັງຄົມລາວຄັ້ງທີ II", p. 57

[57] ແຜນງານ ຄວາມເຂົ້າໃຈເຖິງການເຮັດວຽກຂອງເດັກ, “ຄວາມເຂົ້າໃຈເຖິງການເຮັດວຽກຂອງເດັກ", p. 2.

[58] ອົງການຢູນິເຊັບ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ກະຊວງແຜນການ ແລະ ການລົງທຶນ,“ SDGs ແລະເດັກນ້ອຍ”, ໜ້າ 70.

[59] ອົງການຄວາມໂປ່ງໃສສາກົນ (Transparency International) ປະເທດລາວ: ດັດຊະນີການຮັບຮູ້ເຖິງການສໍ້ລາດບັງຫຼວງ ປີ 2018

ໄກ່ເກ່ຍຂັ້ນບ້ານ ແລະ ກົນໄກອື່ນໆທີ່ມີຕາມທິດສະດີ ເພື່ອຂໍຄວາມຊ່ວຍເຫຼືອ. ຜູ້ລາຍງານພິເສດໄດ້ຮັບລາຍງານວ່າ ການຮ້ອງທຸກ ບໍ່ຄ່ອຍຈະຄືບໜ້າສູ່ຂັ້ນສູງກວ່າລະດັບບ້ານ ຖ້າບໍ່ມີສາຍພົວພັນກັບຫົວໜ້າຜູ້ມີສິດອໍານາດ ຫຼື ການຮັບຮອງຂອງອໍານາດການປົກຄອງບ້ານ. ເຖິງແມ່ນວ່າ ສະພາແຫ່ງຊາດໄດ້ສ້າງຕັ້ງສາຍດ່ວນ ເຊິ່ງເປັນຂໍ້ລິເລີ່ມທີ່ສໍາຄັນ ແຕ່ວ່າກໍ່ຍັງບໍ່ສາມາດແກ້ໄຂບັນຫາໄດ້ຢ່າງເປັນເອກະລາດ. ສາຍດ່ວນດໍາເນີນງານພຽງແຕ່ 8 ອາທິດຕໍ່ປີເທົ່ານັ້ນ ໃນໄລຍະກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແລະ ມີໜ້າທີ່ດາເນີນການເປັນບ່ອນຮັບເອົາຄໍາຮ້ອງທຸກ ແຕ່ບໍ່ແມ່ນສະຖາບັນທີ່ມີອໍານາດໃນການສືບສວນ ແລະ ແກ້ໄຂຄໍາຮ້ອງທຸກ. ສາຍດ່ວນຄວນດໍາເນີນງານຕະຫຼອດປີ, ລາຍງານປະເພດຄໍາຮ້ອງທຸກ ແລະ ການແກ້ໄຂຄໍາຮ້ອງທຸກສູ່ສາທາລະນະ ແລະ ມີການຕິດຕາມແບບເປັນເອກະລາດ ແທນທີ່ຈະແມ່ນກະຊວງຂອງລັດຖະບານເປັນຜູ້ຕິດຕາມ.

# VI. ອົງການປະຊາສັງຄົມ ເປັນຄູ່ຮ່ວມໃນການພັດທະນາ

72. ໃນຄໍາຖະແຫຼງການເມື່ອສິ້ນສຸດພາລະກິດຂອງທ່ານ, ຜູ້ລາຍງານພິເສດໄດ້ອະທິບາຍຢ່າງລະອຽດກ່ຽວກັບນະໂຍບາຍຄວບຄຸມທີ່ອອກແບບມາ ເພື່ອສະກັດກັ້ນ ແລະ ກີດຂວາງທຸກກິດຈະກໍາຂອງອົງການປະຊາສັງຄົມທີ່ພະຍາຍາມເຮັດສິ່ງໃດໜຶ່ງທີ່ນອກເໜືອຈາກການເຮັດວຽກ ຫຼື ສະໜັບສະໜູນລັດຖະບານ. ນອກຈາກເປັນການລະເມີດພັນທະຂອງລັດຖະບານຕໍ່ສິດທິມະນຸດແລ້ວ, ນະໂຍບາຍຕ່າງໆຍັງມີຄ່າໃຊ້ຈ່າຍຫຼາຍ ແລະ ເຮັດໃຫ້ຕົນເອງຊະນະ. ຖ້າວ່າ ບໍ່ມີອົງການປະຊາສັງຄົມທີ່ເຮັດວຽກແລ້ວ, ກໍ່ບໍ່ສາມາດອອກແບບນະໂຍບາຍດ້ານສັງຄົມທີ່ມີຂໍ້ມູນຂ່າວສານ, ບໍ່ສາມາດໄດ້ຮັບຂໍ້ມູນທີ່ຈໍາເປັນ ສໍາລັບນະໂຍບາຍດ້ານເສດຖະກິດແບບຕອບສະໜອງ, ຂະບວນການໂຄສະນາຕ້ານການສໍ້ລາດບັງຫຼວງກໍ່ບໍ່ສາມາດເຕີບໂຕໄດ້ ແລະ ລັດຖະບານກໍ່ບໍ່ສາມາດເກັບກ່ຽວຜົນປະໂຫຍດຈາກຂໍ້ມູນທີ່ຫຼາກຫຼາຍເພື່ອປະກອບເຂົ້າໃນການສ້າງນະໂຍບາຍ. ການສະກັດກັ້ນການຂັບເຄື່ອນກິດຈະກໍາຢູ່ໃຕ້ດິນ ນໍາໄປສູ່ການສະສົມຄວາມຄຽດແຄ້ນໃນໃຈ, ຕ້ອງໃຊ້ເຄື່ອງມືທີ່ບໍ່ເກີດຜົນຢ່າງຫຼວງຫຼາຍ, ປ່ອຍປະຜູ້ທີ່ມີຄວາມທຸກໃຈໂດຍບໍ່ມີການແກ້ໄຂ ແລະ ສະກັດກັ້ນບໍ່ໃຫ້ຄົນລາວຮຸ່ນໃໝ່ໄດ້ສະເໜີວິທີແກ້ໄຂບັນຫາທີ່ເປັນສິ່ງທ້າທາຍຂອງປະເທດ. ຖ້າວ່າ ຢາກແກ້ໄຂຄວາມທຸກຍາກ ຈໍາເປັນຕ້ອງມີພື້ນທີ່ຢ່າງແທ້ຈິງຂອງອົງການປະຊາສັງຄົມໃນການສົນທະນາແນວຄວາມຄິດທີ່ເຂັ້ມແຂງ, ການຍົກບັນຫາຄວາມເປັນຫ່ວງທີ່ສໍາຄັນ, ການແບ່ງປັນຄວາມຮູ້ ແລະ ປະສົບການ, ການສົ່ງເສີມຄວາມໂປ່ງໃສ ແລະ ການແກ້ໄຂການສໍ້ລາດບັງຫຼວງ.

73. ລັດຖະບານ ຄວນປຶກສາຫາລື ກ່ຽວກັບວິທີຕ່າງໆໃນການດັດແກ້ດໍາລັດວ່າດ້ວຍສະມາຄົມສະບັບເລກທີ 238 ໃນປີ 2017 ເພື່ອໃຫ້ອົງການປະຊາສັງຄົມສາມາດເຄື່ອນໄຫວໄດ້ຢ່າງມີຄວາມໝາຍ ແລະ ເປັນອິດສະຫຼະ. ຄວນລຶບລ້າງບັນດາຂໍ້ຫ້າມທີ່ເຄັ່ງຄັດ ໃນການເດີນທາງພາຍໃນປະເທດຂອງບັນດາສະມາຄົມທີ່ບໍ່ຫວັງຜົນກໍາໄລ, ລວມທັງຂໍ້ກໍານົດຕ່າງໆ ທີ່ພວກເຂົາຕ້ອງມີຜູ້ຕິດຕາມກວດກາຂອງລັດຖະບານ ຕິດຕາມໄປນໍາຕະຫຼອດເວລາ. ອັນນີ້ກໍາລັງບອກວ່າ ລັດຖະບານໄດ້ຂະຫຍາຍຂອບເວລາການຈົດທະບຽນສະມາຄົມບໍ່ຫວັງຜົນກໍາໄລ ມາເປັນ 165 ມື້, ໃນຂະນະດຽວກັນ ກໍ່ຫຼຸດຜ່ອນຂອບເວລາໃນການສ້າງຕັ້ງບໍລິສັດຈາກ 6 ເດືອນ ເປັນໜ້ອຍກວ່າ 1 ເດືອນ [60]

74. ລັດຖະບານໄດ້ດໍາເນີນການແລ້ວ ໂດຍການພິຈາລະນາຢ່າງລະມັດລະວັງ ຂໍ້ສະຫຼຸບການສັງເກດການຂອງຄະນະກໍາມະການສິດທິເດັກ (CRC/C/LAO/CO/3-6) ແລະ ຄະນະກໍາມະການລຶບລ້າງການຈໍາແນກຕໍ່ແມ່ຍິງ (CEDAW/C/LAO/CO/8-9). ລັດຖະບານ ຍັງຄວນຈັດຕັ້ງປະຕິບັດຂໍ້ສະເໜີແນະທີ່ກ່ຽວຂ້ອງກັບອົງການປະຊາສັງຄົມ ທີ່ໄດ້ໃຫ້ໄວ້ໃນລະຫວ່າງ ຂະບວນການທົບທວນ ຄືນເປັນໄລຍະທົ່ວສາກົນ ຮອບວຽນທີສອງ ໃນປີ 2015 ແລະ ຂໍ້ສະຫຼຸບການສັງເກດການຂອງຄະນະກໍາມະການສິດທິມະນຸດ (CCPR /C/LAO/CO/1). ລັດຖະບານຈະຢູ່ໃນສະຖາພາບທີ່ດີກວ່າ ທີ່ຈະສາມາດລາຍງານຜົນເປັນດ້ານບວກ ໃນຮອບວຽນທີ 3 ຂອງການທົບທວນເປັນໄລຍະທົ່ວສາກົນ ໃນປີ 2020.

75. ສະພາແຫ່ງຊາດ ຄວນຊອກຫາວິທີການຕ່າງໆ ເພື່ອນໍາເອົາທັດສະນະຂອງອົງການປະຊາສັງຄົມເຂົ້າໃນການໂຕ້ວາທີທີ່ນັບມື້ນັບເພີ່ມຄວາມມີຊີວິດຊີວາຂຶ້ນ.

[60] ວາລະສານ ນັກເສດຖະສາດ "The Economist",“ ບົດລາຍງານຂອງປະເທດ: ມາເລເຊຍ, p. 13.

76. ໃນທີ່ສຸດ ລັດຖະບານ ກໍ່ຄວນອະນຸຍາດໃຫ້ມີການສືບສວນຢ່າງຈິງຈັງກ່ຽວກັບການຫາຍຕົວໄປຂອງທ່ານ ສົມບັດ ສົມພອນ, ຜູ້ນໍາຂອງອົງການປະຊາສັງຄົມທີ່ໄດ້ຮັບການຍ້ອງຍໍຊົມເຊີຍ ເຊິ່ງມີຜູ້ພົບເຫັນຄັ້ງສຸດທ້າຍ ແມ່ນ ເມື່ອລາວເຂົ້າໄປໃນລົດຄັນໜຶ່ງ ຫຼັງຈາກຖືກບອກໃຫ້ຢຸດຢູ່ດ່ານຕໍາຫຼວດ ໃນປີ 2012.

77. ປະຊາຄົມສາກົນຕ້ອງຊ່ວຍເຫຼືອ ແລະ ໃຫ້ຄໍາປຶກສາແກ່ລັດຖະບານໃນຂົງເຂດເຫຼົ່ານັ້ນ. ການໂອ້ລົມ ສົນທະນາທີ່ໄດ້ວາງຮູບແບບໄວ້ແລ້ວບັນລຸຜົນໄດ້ພຽງເລັກນ້ອຍ ແລະ ຄວາມພະຍາຍາມຢ່າງມີດຽງບຂອງ ເປົ້າໝາຍການພັດທະນາ ຄຽງຄູ່ກັບການກີດກັ້ນການສົນທະນາເຖິງສິດທິມະນຸດ ແລະ ພື້ນທີ່ຂອງອົງການປະຊາ ສັງຄົມ ຈະບໍ່ນໍາໄປສູ່ການເຕີບໂຕແບບຍືນຍົງ, ເສດຖະກິດພາຍໃນປະເທດທີ່ເຂັ້ມແຂງ ຫຼື ສັງຄົມທີ່ມີສະເຖຍລະ ພາບ. ຜູ້ໃຫ້ທຶນ ຄວນສະໜັບສະໜູນຂັ້ນຕອນຕ່າງໆຢ່າງໂປ່ງໃສ ເພື່ອເປີດພື້ນທີ່ຂອງອົງການປະຊາສັງຄົມ ແລະ ການໂຕ້ວາທີຂອງມວນຊົນ. ພວກເຂົາຄວນເວົ້າອອກສູ່ມວນຊົນ ເພື່ອທາລາຍຄວາມມິດງຽບທີ່ອຸ້ມອາຍທີ່ ປົກອ້ອມປະເດັນບັນຫາດັ່ງກ່າວ ເພາະວ່າ ຜູ້ອື່ນບໍ່ສາມາດເຮັດແນວນັ້ນໄດ້; ການສົ່ງຂໍ້ຄວາມພຽງແຕ່ຢູ່ຫຼັງປະຕູທີ່ ປິດເທົ່ານັ້ນແມ່ນບໍ່ພຽງພໍ. ການທູດແມ່ນການກະທາແບບດຸນດ່ຽງ, ແຕ່ວ່າ ຜູ້ໃຫ້ທຶນ ຄວນຖາມວ່າຂໍ້ລິເລີ່ມຕ່າງໆ ທີ່ພວກເຂົາປະສົບຜົນສໍາເລັດຈະນໍາໄປສູ່ຄວາມກ້າວໜ້າໃນໄລຍະຍາວ ຫຼື ບໍ ຫຼືວ່າ ເປັນການຊ່ວຍປົກປິດບັນຫາ ທີ່ຍັງຄົງຄ້າງຢູ່. ພວກເຂົາຍັງສາມາດມີບົດບາດ ໃນການຕິດຕາມຂໍ້ສະເໜີແນະທີ່ກ່ຽວຂ້ອງກັບສະພາບການ ການທົບທວນເປັນໄລຍະທົ່ວສາກົນ ແລະ ຂໍ້ສະເໜີແນະຂອງບັນດາອົງການສົນທິສັນຍາວ່າດ້ວຍສິດທິມະນຸດ.

# VII. ຊຸມຊົນອົງການຈັດຕັ້ງສາກົນ ແລະ ຜູ້ປະກອບການຂອງບໍລິສັດຕ່າງໆ

78. ຊຸມຊົນອົງການຈັດຕັ້ງສາກົນມີສ່ວນຮ່ວມຢ່າງເລິກເຊິ່ງ ໃນຄວາມພະຍາຍາມເພື່ອແກ້ໄຂຄວາມທຸກຍາກ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໂດຍສະເພາະແມ່ນການສະໜັບສະໜູນຢ່າງມະຫາສານ ໃນ ໂຄງການຕ່າງໆທີ່ລັດຖະບານ ແລະ ອົງການປະຊາສັງຄົມຈັດຕັ້ງປະຕິບັດ ແລະ ດ້ວຍການໃຫ້ຄໍາປຶກສາແກ່ ລັດຖະບານກ່ຽວກັບການພັດທະນາແບບຍືນຍົງ. ດັ່ງນັ້ນ, ການວິເຄາະທີ່ກ່າວມາເບື້ອງຕົ້ນ ສ່ວນຫຼາຍແມ່ນ ກ່ຽວຂ້ອງກັບວຽກງານຂອງຕົນເອງ ແລະ ຜູ້ໃຫ້ທຶນເອງກໍ່ສົ່ງເສີມການສ້າງວາລະ ແລະ ແຜນງານຕ່າງໆ ທີ່ບໍ່ເຂົ້າໃຈ ຢ່າງເຖິງຖອງ ເຊິ່ງເປັນຜົນພາໃຫ້ເກີດໄພອັນຕະລາຍຫຼາຍ. ມັນມີທັງຄວາມຮັບຜິດຊອບ ແລະ ໂອກາດທີ່ຈະ ສົ່ງເສີມມາດຕະຖານ ແລະ ບັນທັດຖານສາກົນ ແລະ ເພື່ອປົກປ້ອງສິດທິຂອງຄົນທຸກຍາກ ແລະ ຜູ້ດ້ອຍໂອກາດ ແລະ ຜູ້ທີ່ໄດ້ຮັບຜົນກະທົບທາງລົບຈາກບັນດາໂຄງການພັດທະນາ.

79. ບັນດາອົງການສາກົນ ຄວນຕໍ່ຕ້ານສິ່ງລໍ້ລວງຂອງຜົນປະໂຫຍດໄລຍະສັ້ນ, ການເພີ່ມເຕີມໃສ່ໂຄຕ້າ ແລະ ການສໍາເລັດໂຄງການຢ່າງເປັນທາງການ ຖ້າວ່າມັນກ່ຽວຂ້ອງກັບການຍອມຮັບເງື່ອນໄຂທີ່ມີບັນຫາເຊິ່ງເປັນຜົນ ກະທົບໃນໄລຍະຍາວ ແລະ ຄວາມຍືນຍົງ. ພວກເຂົາຄວນລະມັດລະວັງໃນວິທີການຈັດລຽງບູລິມະສິດທີ່ໃຫ້ ຄວາມສໍາຄັນຕໍ່ສາຍພົວພັນທີ່ດີ ຫຼາຍກວ່າການສະໜອງການວິເຄາະທີ່ມີຄວາມໝາຍ. ການບໍ່ປະກອບຄໍາຕໍານິຕິ ຊົມທີ່ເຂັ້ມແຂງ ແລະ ບໍ່ເຂົ້າຮ່ວມການສົນທະນາແບບຈິງໃຈຈະສ້າງຄວາມເສຍຫາຍຕໍ່ປະຊາຊົນ ແລະ ລັດຖະບານລາວ. ມັນສາມາດນໍາໄປສູ່ຄວາມລົ້ມເຫຼວດ້ານວິໄສທັດ, ສູນຄວາມເພິ່ງພໍໃຈໃສ່ຜົດບ່ອນດ້ວຍການ ເພີ່ມທະວີການປັບປຸງໃຫ້ດີຂຶ້ນ ແລະ ການຍົກເວັ້ນປະຊາຊົນລາວຢ່າງມີປະສິດທິຜົນ ອອກຈາກດ້ານສໍາຄັນຕ່າງໆ ຂອງການສົນທະນາກ່ຽວກັບການພັດທະນາ.

## A. ອົງການສະຫະປະຊາຊາດ

80. ຜູ້ລາຍງານພິເສດໄດ້ຮັບແຈ້ງຢ່າງເປັນປະຈໍາວ່າ ອົງການສະຫະປະຊາຊາດເອງ, ເຊິ່ງກົງກັນຂ້າມກັບອົງ ການຕ່າງໆຂອງຕົນ, ເປັນທີ່ຮັບຮູ້ຢ່າງກວ້າງຂວາງວ່າ ເປັນການປະຕິບັດໜ້າທີ່ເປັນໄມ້ມືຂອງລັດຖະບານ, ບໍ່ໄດ້ ເປັນກະບອກສຽງໃຫ້ຜູ້ມີຄວາມສ່ຽງ, ເປັນການປ່ອຍປະລະເລີຍຕໍ່ສິດທິມະນຸດ ແລະ ໄດ້ສົ່ງເສີມພາບພົດໃນແງ່ດີ ທີ່ສຸດຂອງຜົນສໍາເລັດຂອງປະເທດ, ພ້ອມກັນນັ້ນກໍ່ຫຼີກລ່ຽງບັນຫາສ່ວນໃຫຍ່ທີ່ຖືວ່າ "ລະອຽດອ່ອນ". ນະໂຍບາຍທີ່ກ້າຫານຂອງສະຫະປະຊາຊາດວ່າ "ເອົາສິດທິມະນຸດເປັນແນວໜ້າ" ນັ້ນ ເບິ່ງແລ້ວຄືວ່າເປັນ ນະໂຍບາຍ "ສິດທິມະນຸດຢູ່ນອກສາຍຕາ" ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

81. ດ້ວຍການແຕ່ງຕັ້ງຜູ້ປະສານງານປະຈໍາປະເທດ ແລະ ຜູ້ຕາງໜ້າປະຈໍາປະເທດຄົນໃໝ່ຂອງ ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP), ອົງການສະຫະປະຊາຊາດ ຄວນພິຈາລະນາເຖິງວິທີ ການທີ່ສາມາດປ່ຽນແປງທັດສະນະດັ່ງກ່າວ ແລະ ມີບົດບາດທີ່ສ້າງສັນກ່ວາ ໃນການສົ່ງເສີມຄຸນຄ່າທີ່ອົງການ ແລະ

ປະເທດສະມາຊິກໄດ້ຮັບຮອງເອົາ. ກອງທຶນ ແລະ ອົງການຕ່າງໆຂອງຕົນ ຄວນຮັບປະກັນໃຫ້ມີການປະຕິບັດງານທີ່ສອດຄ່ອງກັບມາດຕະຖານ ແລະ ຂໍ້ແນະນຳສາກົນ, ເຊັ່ນ: ຫຼັກການຊີ້ນຳ ກ່ຽວກັບການຍົກຍ້າຍພາຍໃນປະເທດ ແລະ ຂໍ້ແນະນຳແບບສະໝັກໃຈ ກ່ຽວກັບການປົກຄອງທີ່ຮັບຜິດຊອບຕໍ່ການຄອບຄອງທີ່ດິນ, ການປະມົງ ແລະ ປ່າໄມ້ ໃນສະພາບການຂອງການຄໍ້າປະກັນສະບຽງອາຫານແຫ່ງຊາດຂອງອົງການອາຫານ ແລະ ກະສິກຳ ຂອງສະຫະປະຊາຊາດ.

## B. ສະຖາບັນການເງິນສາກົນ

82. ສະຖາບັນການເງິນສາກົນໄດ້ມີບົດບາດສຳຄັນ ໃນການສ້າງຮູບແບບການພັດທະນາຂອງປະເທດ. ໃນປີ 2017, ສະມາຄົມການພັດທະນາສາກົນຂອງທະນາຄານໂລກ ເປັນຜູ້ໃຫ້ການຊ່ວຍເຫຼືອດ້ານການພັດທະນາຢ່າງເປັນທາງການທີ່ໃຫຍ່ທີ່ສຸດ (76.74 ລ້ານໂດລາ), ຕໍ່ມາກໍ່ແມ່ນທະນາຄານພັດທະນາອາຊີ (56.34 ລ້ານໂດລາ)[61]. ບັນດາໂຄງການຂອງທະນາຄານໂລກກວມເອົານະໂຍບາຍຫຼາຍຂົງເຂດ ເຊັ່ນ: ການຄຸ້ມຄອງການເງິນພາກລັດ, ທີ່ດິນ, ກະສິກຳ ແລະ ໄຟຟ້າພະລັງງານນໍ້າ ແລະ ຄາມຸ່ງໝັ້ນດ້ານການເງິນຂອງຕົນໄດ້ເພີ່ມຂຶ້ນໃນຊຸມປີມໍ່ໆມານີ້, ເຖິງ 130 ລ້ານໂດລາ ໃນປີ 2018 ແລະ ເປັນ 83.73 ລ້ານໂດລາໃນ 4 ເດືອນທາອິດເທົ່ານັ້ນຂອງປີ 2019.[62]

83. ທະນາຄານໂລກໄດ້ເປັນຜູ້ສົ່ງເສີມຢ່າງພາກພູມໃຈ ດ້ານກະແສໄຟຟ້າພະລັງນໍ້າ ໃຫ້ເປັນເສັ້ນທາງໃຈກາງໃນການພັດທະນາເສດຖະກິດ ຕັ້ງແຕ່ຊຸມປີ 1990 ເປັນຕົ້ນມາ ແລະ ຍັງສືບຕໍ່ເປັນຜູ້ເບິ່ງໂລກໃນແງ່ດີຕໍ່ອະນາ ຄົດຂອງຂະແໜງດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ຄວນປັບປຸງວິທີການຂອງໂຄງການ, ຍ້ອນຄວາມລົ້ມເຫຼວຂອງ "ຕົວແບບ" ເຂື່ອນໄຟຟ້ານໍ້າເທີນ 2 ຂອງຕົນ, ເຊິ່ງຖືກວິຈານຢ່າງໜັກຈາກ ທ່ານ ໄທເຢີ ສະກຸດເດີ (Thayer Scudder), ສະມາຊິກຂອງຄະນະຊ່ຽວຊານຂອງໂຄງການນໍ້າເທີນ 2 [63], ການປະຕິບັດການແບບບໍ່ພຽງພໍຕໍ່ນະໂຍບາຍ ກ່ຽວກັບການພັດທະນາໄຟຟ້າພະລັງງານນໍ້າແບບຍືນຍົງທີ່ສະໜັບສະໜູນໂດຍກຸ່ມທະນາຄານໂລກໃນປີ 2015 ແລະ ເຂື່ອນໄຟຟ້າເຊປຽນ-ນໍ້ານ້ອຍແຕກພັງທະລາຍ. ໂດຍທົ່ວໄປ, ທະນາຄານໂລກລັງເລໃຈທີ່ຈະພິຈາລະນາເຖິງຂໍ້ບົກຜ່ອງທີ່ຜ່ານມາ ແລະ ໄດ້ຍອມຮັບວ່າມີຄວາມແຕກຕ່າງກັນຫຼາຍລະຫວ່າງນະໂຍບາຍ ແລະ ການປະຕິບັດຕົວຈິງ.

84. ຕ້ອງໄດ້ພິຈາລະນາຕື່ມອີກ ຕໍ່ຜົນເສຍຫາຍທີ່ຊຸມຊົນໄດ້ຮັບຜົນກະທົບ ຈາກການບຸກເບີກທີ່ດິນ ແລະ ເຂື່ອນໄຟຟ້າ ແລະ ໂຄງການກໍ່ສ້າງພື້ນຖານໂຄງລ່າງຂະໜາດໃຫຍ່ອື່ນໆ, ພ້ອມທັງການປູກຕົ້ນໄມ້ອຸດສາຫະກຳ. ແຜນງານລຶບລ້າງຄວາມທຸກຍາກ ຄວນຮັບປະກັນການເຄົາລົບສິດທິຂອງບຸກຄົນທີ່ມີຄວາມທຸກຍາກ ແລະ ຮັບປະກັນວ່າ ການທຶນລົງທຶນຂອງຕ່າງປະເທດມີຂຶ້ນ ໃນເງື່ອນໄຂທີ່ເປັນຜົນປະໂຫຍດຕໍ່ປະຊາຊົນລາວ ແລະ ບໍ່ພຽງແຕ່ຕໍ່ນັກລົງທຶນເທົ່ານັ້ນ.

85. ໃນຂະນະທີ່ທະນາຄານໂລກ ເປັນຜູ້ສະໜັບສະໜູນຢ່າງກະຕືລືລົ້ນ ໃນການເປີດພື້ນທີ່ໃຫ້ແກ່ ພາກເອກະຊົນ, ທະນາຄານໂລກສະເໜີພຽງບໍ່ເທົ່າໃດຄຳເວົ້າກ່ຽວກັບພື້ນທີ່ຂອງອົງການປະຊາສັງຄົມ ຫຼື ການມີສ່ວນຮ່ວມຂອງປະຊາຊົນ.[64]

[61] ອົງການເພື່ອການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ,“ ບັນດາປະເທດທີ່ໄດ້ຮັບ ODA: ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ”, Tableau interactive charts. ຄັດຈາກ https://public.tableau.com/views/OECDDACAidataglancebyrecipient_new/Recipients?:embed=y&:display_count=yes&:showTabs=y&:toolbar=no?&:showVizHome=no.

[62] ທະນາຄານໂລກ, ໂຄງການຕ່າງໆໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ. ຄັດຈາກ http://projects.worldbank.org/search?lang=en&searchTerm=&countrycode_exact=LA.

[63] ແມ່ນໍ້າສາກົນ,“ເຂື່ອນນໍ້າເທີນ 2" . ຄັດຈາກ www.internationalrivers.org/campaigns/nam-theun-2-dam.

[64] ທະນາຄານໂລກ "ທະນາຄານໂລກ ອາຊີຕາເວັນອອກ ແລະ ປາຊີຟິກ VP ຊີ້ໃຫ້ເຫັນເຖິງທຶນມະນຸດ, ການເຕີບໂຕສີຂຽວໃນການຢ້ຽມຢາມສປປລາວ,” ບົດຂ່າວ, ວັນທີ 1 ເດືອນເມສາປີ 2019. ຄັດຈາກ www.worldbank.org/en/news/press-release/2019/04/01/world-bank-east-asia-and-pacific-vp-highlights-human-capital-green-growth-in-visit-to-lao-pdr.

### C. ຂະແໜງທຸລະກິດ

86. ບັນດາບໍລິສັດເລືອກທີ່ຈະລົງທຶນ ຫຼື ດຳເນີນທຸລະກິດໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຮູ້ຢ່າງເຕັມທີກ່ຽວກັບຄວາມເປັນຫ່ວງ ດ້ານສິດທິມະນຸດທີ່ຮ້າຍແຮງ, ການສໍ້ລາດບັງຫຼວງໃນລະດັບສູງ ແລະ ການຂາດເຂີນຊັບພະຍາກອນຕ່າງໆ ໃນການຕິດຕາມກວດກາ ແລະ ການບັງຄັບໃຊ້ກົດລະບຽບ. ທ່ານອາດຫວັງວ່າຈະໄດ້ເຫັນບາດກ້າວຢ່າງຕັ້ງໜ້າ, ໂດຍສະເພາະແມ່ນບໍລິສັດແບບພະຫຸພາຄີທີ່ມີຊັບພະຍາກອນສຳຄັນ, ເພື່ອຫຼີກລ່ຽງການກໍ່ໃຫ້ເກີດ ຫຼື ຄວາມສັບສົນໃນຜົນກະທົບທີ່ບໍ່ດີດ້ານສິດທິມະນຸດ, ສອດຄ່ອງກັບຄວາມຮັບ ຜິດຊອບຂອງພວກເຂົາໃນການເຄົາລົບສິດທິມະນຸດ (ເບິ່ງA/HRC/17/31, ເອກະສານຊ້ອນທ້າຍ). ບັນດາບໍລິສັດ, ລວມທັງບໍລິສັດຕ່າງປະເທດທີ່ມາລົງທຶນໃນເຂດເສດຖະກິດພິເສດຂອງລາວ ຫຼື ໃນຂະແໜງໄຟຟ້າພະລັງນໍ້າ ແລະ ບໍ່ແຮ່ ຄວນມີຂະບວນການກວດສອບດ້ານສິດທິມະນຸດຢ່າງຕໍ່ເນື່ອງ ເພື່ອກຳນົດ, ປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິດທິມະນຸດ, ພ້ອມທັງຂັ້ນຕອນ ເພື່ອແກ້ໄຂໃນບ່ອນທີ່ເໝາະສົມ. ໜ້າເສຍດາຍ, ຫຼາຍບໍລິສັດທີ່ດຳເນີນທຸລະກິດໃນປະເທດມີປະຫວັດບັນທຶກຕິດຕາມເປັນເວລາຍາວນານມາແລ້ວ ໃນທຸກຢ່າງ ຕັ້ງແຕ່ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ຈົນເຖິງການປະຕິບັດຕາມກົດໝາຍພາຍໃນປະເທດ ແລະ ກົດໝາຍສາກົນ.[65] ບັນດາບໍລິສັດ ຄວນຮ່ວມມືຢ່າງເຕັມທີ່ກັບກົນໄກການຮ້ອງທຸກ ທັງໃນລະບົບຍຸດຕິທຳ ແລະ ບໍ່ແມ່ນໃນລະບົບຍຸດຕິທຳ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໃນປະເທດຂອງຕົນ ເພື່ອແກ້ໄຂການລະເມີດສິດທິມະນຸດ ແລະ ຄວາມອັນຕະລາຍອື່ນໆທີ່ຕິດພັນກັບວຽກງານຂອງພວກເຂົາ.

87. ບັນດາບໍລິສັດ ຄວນເຮັດເອກະສານໂຄງການທີ່ມີຢູ່ ໃນອິນເຕີເນັດເປັນພາສາອັງກິດ ແລະ ພາສາລາວ, ລວມທັງ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ສິດທິມະນຸດ, ພ້ອມທັງຂໍ້ມູນກ່ຽວກັບຂັ້ນຕອນໃນການຊອກຫາວິທີແກ້ໄຂ ແລະ ສະຖານະພາບຂອງການຊົດເຊີຍຕໍ່ການສູນເສຍທີ່ດິນ. ບັນດາບໍລິສັດຄວນເຜີຍແຜ່ນະໂຍບາຍຄວາມຮັບຜິດຊອບຂອງບໍລິສັດທີ່ສອດຄ່ອງກັບສິດທິມະນຸດ.

88. ບັນດາບໍລິສັດທີ່ລົງທຶນ ແລະ ມີກິດຈະກຳຕ່າງໆທີ່ສົ່ງຜົນກະທົບໂດຍກົງຕໍ່ຊຸມຊົນ ຄວນດຳເນີນການດ້ວຍຄວາມລະມັດລະວັງໃນການໃຫ້ຄຳປຶກສາ ແລະ ຂໍຄວາມຍິນຍອມທີ່ໄດ້ຮັບຂໍ້ມູນຕໍ່ກິດຈະກຳຂອງຕົນ. ພວກເຂົາຄວນນຳໃຊ້ເຄື່ອງມື, ຂໍ້ແນະນຳ ແລະ ການປະຕິບັດຕົວຈິງທີ່ດີທີ່ສຸດທີ່ມີຢູ່ ເພື່ອໃຫ້ຂໍ້ມູນຢ່າງທ້າວທັນ ແລະ ຢ່າງຕໍ່ເນື່ອງ ເປັນພາສາ ແລະ ຮູບແບບອັນເປັນທີ່ຕ້ອງການຂອງຊຸມຊົນ ແລະ ໃຫ້ມີຕົວແທນຂອງພວກເຂົາຕໍ່ບຸກຄົນ ແລະ ເຊື່ອມໂຍງຊຸມຊົນກັບຜູ້ສະໜັບສະໜູນອິດສະຫຼະ. ການປຶກສາຫາລືກັບ ຫຼື ການຍິນຍອມຈາກຜູ້ນຳຂອງບ້ານ ບໍ່ແມ່ນສິ່ງປ່ຽນແທນໄດ້ກັບການມີສ່ວນຮ່ວມຂອງຊຸມຊົນ, ລວມທັງ ກັບບຸກຄົນທີ່ເປັນຜູ້ດ້ອຍໂອກາດ ຫຼື ຖືກປິດບັງຈາກຂະບວນການດັ່ງກ່າວ ເຊັ່ນ: ແມ່ຍິງ ແລະ ຄົນພິການ.

89. ລັດມີບົດບາດສຳຄັນໃນການຕິດຕາມກວດກາບັນດານັກລົງທຶນ ແລະ ການປະພຶດຂອງພວກເຂົາໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ລັດ ຄວນເສີມສ້າງຂີດຄວາມສາມາດຂອງສະຖາບັນ ແລະ ຂອບກົດໝາຍ ເພື່ອແກ້ໄຂຜົນກະທົບນອກຂອບເຂດຂອງການລົງທຶນ ຫຼື ກິດຈະກາຕ່າງໆທີ່ດາເນີນໂດຍບໍລິສັດທີ່ຢູ່ໃນຂອບເຂດສິດອຳນາດຂອງພວກເຂົາ, ລວມທັງ ການລວມເອົາການກວດສອບ ແລະ ຂໍ້ກຳນົດໃນການແກ້ໄຂ ຂອງຫຼັກການຊີ້ນຳກ່ຽວກັບທຸລະກິດ ແລະ ສິດທິມະນຸດ ເຂົ້າໃນລະດັບພາຍໃນປະເທດ ແລະ ດ້ວຍການຮັບປະກັນວ່າຜູ້ຖືກເຄາະຮ້າຍ ຈາກຄວາມເສຍຫາຍນອກຂອບເຂດ ສາມາດຊອກຫາວິທີແກ້ໄຂໃນລະບົບຍຸດຕິທຳຂອງພວກເຂົາ ແລະ ສາມາດເຂົ້າເຖິງກົນໄກທີ່ບໍ່ແມ່ນໃນລະບົບຍຸດຕິທຳ ເຊັ່ນ: ສະຖາບັນສິດທິມະນຸດແຫ່ງຊາດເປັນຕົ້ນ.

## VIII. ຂໍ້ສະເໜີແນະທີ່ເປັນບຸລິມະສິດ

90. **ໃນຫຼາຍຂໍ້ສະເໜີແນະທີ່ມີຢູ່ ໃນບົດລາຍງານປັດຈຸບັນ, ຜູ້ລາຍງານພິເສດຮຽກຮ້ອງໃຫ້ລັດຖະບານ ແລະ ພາກສ່ວນກ່ຽວຂ້ອງໃຫ້ຈັດລຽງບຸລິມະສິດໃນການແກ້ໄຂບັນຫາ ດັ່ງຕໍ່ໄປນີ້:**

[65] ເບິ່ງ, ຕົວຢ່າງ, ພັນທະມິດສື່ຂ່າວອາຊີຕາເວັນອອກສຽງໃຕ້,“ ການເບື່ອປາເປັນຄວາມກັງວົນໃຈຂອງບ້ານ ເພາະວ່າເມືອງສັງທອງສົ່ງເສີມການປະຕິບັດຕົວຈິງທີ່ດີດ້ານກະສິກຳ”, ປີ 2019. ຄັດຈາກ www.seapa.org/laos-poisoned-fish-worries-village-as-sangthong-district-promotes-good-agricultural-practices/.

(a) ຄວນເພີ່ມທະວີການໃຊ້ຈ່າຍເຂົ້າໃນດ້ານສາທາລະນະສຸກ, ການສຶກສາ ແລະ ການພັດທະນາເດັກກ່ອນໄວຮຽນຢ່າງຫຼວງຫຼາຍ ແລະ ໂດຍທັນທີ. ບາດກ້າວທຳອິດແມ່ນຮັບປະກັນວ່າ ລະດັບເປົ້າໝາຍທີ່ໄດ້ກຳນົດໄວ້ໃນງົບປະມານປະຈຳປີ ໄດ້ບັນລຸຜົນເປັນຈິງ. ການໃຊ້ຈ່າຍທີ່ເພີ່ມຂຶ້ນດັ່ງກ່າວ ຍັງຄວນຕິດພັນກັບໂຄງການໄລຍະຍາວທີ່ສຳຄັນ ເພື່ອສ້າງຊັບພະຍາກອນມະນຸດທີ່ຂາດບໍ່ໄດ້ ຖ້າວ່າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢາກກະຈາຍດ້ານເສດຖະກິດໃຫ້ທົ່ວເຖິງ ແລະ ເພື່ອຮັບປະກັນການເຕີບໂຕແບບຍືນຍົງ ແລະ ແບບສະເໝີພາບ;

(b) ຖ້າວ່າ ຢາກໃຫ້ຜົນປະໂຫຍດຂອງການເຕີບໂຕດ້ານເສດຖະກິດໄປເຖິງຜູ້ທຸກຍາກ, ລັດຖະບານຄວນປະເມີນຍຸດທະສາດຂອງຕົນຄືນໃໝ່ຢ່າງເປັນລະບົບ ເພື່ອດຶງດູດການລົງທຶນຈາກຕ່າງປະເທດ. ວິທີການທີ່ມີຢູ່ແລ້ວເຮັດໃຫ້ຄົນຊັ້ນສູງຮັ່ງມີຂຶ້ນຕື່ມ, ເປັນຜົນໜ້ອຍທີ່ສຸດຕໍ່ຜູ້ທຸກຍາກ, ສ້າງວຽກເຮັດງານທຳໜ້ອຍທີ່ສຸດ ແລະ ນຳເອົາເງິນທຶນໜ້ອຍທີ່ສຸດເຂົ້າໃນງົບປະມານແຫ່ງຊາດ. ອົງປະກອບຫຼັກຂອງຍຸດທະສາດ ຄວນປະກອບມີ ດັ່ງນີ້:

(i) ການປະເມີນຄືນໃໝ່ຍຸດທະສາດໄຟຟ້າພະລັງງານນ້ຳ, ລວມທັງ ການປະເມີນຜົນກະທົບແບບຮອບດ້ານ ແລະ ທົ່ວປວງຊົນ ແລະ ການວາງແຜນການທີ່ໄດ້ຮັບການປັບປຸງ ສຳລັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດໃນອະນາຄົດ;

(ii) ການທົບທວນຢ່າງລະອຽດກ່ຽວກັບການສຳປະທານທີ່ດິນທີ່ໄດ້ຮັບ, ການສ້າງບັນຊີທີ່ມີຄວາມໂປ່ງໃສຂອງທຸກຂໍ້ຕົກລົງສັນຍາດັ່ງກ່າວ ແລະ ໃຫ້ມີການປະຕິບັດຕາມໂດຍທັນທີ ຫຼື ຢຸດຕິຂໍ້ຕົກລົງສັນຍາຕ່າງໆທີ່ບໍ່ຖືກຕ້ອງ ຫຼື ແບບສໍ້ລາດບັງຫຼວງ;

(iii) ກະຈາຍໂອກາດການລົງທຶນໃຫ້ທົ່ວເຖິງ ເພື່ອເນັ້ນໜັກ ແລະ ເປັນການສ້າງວຽກເຮັດງານທຳ ໃຫ້ແກ່ປະຊາຊົນລາວ;

(iv) ການປະເມີນຜົນກະທົບດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມຂອງເຂດເສດຖະກິດພິເສດ;

(v) ເປີດເຜີຍຢ່າງເຕັມທີ່ ກ່ຽວກັບການຍົກເວັ້ນພາສີອາກອນທີ່ມີຢູ່;

(vi) ເປີດເຜີຍຢ່າງເຕັມທີ່ ກ່ຽວກັບຂອບເຂດໜີ້ສິນພາກລັດ ແຍກຕາມຜູ້ໃຫ້ກູ້ຢືມ ແລະ ໜີ້ສິນ ລວມທັງການຄ້ຳປະກັນທີ່ກ່ຽວຂ້ອງ;

(c) ຄວາມໂປ່ງໃສດ້ານຂໍ້ມູນແມ່ນສ່ວນປະກອບສຳຄັນຂອງການປົກຄອງທີ່ດີ ແລະ ການກຳນົດນະໂຍບາຍທີ່ມີຂໍ້ມູນ, ແຕ່ວ່າໃນການກຳນົດໃນປັດຈຸບັນ ຍັງມີຄວາມລັບ ແລະ ຄວາມສັບສົນ. ສິ່ງນີ້ເປັນຜົນປະໂຫຍດຕໍ່ພວກຄົນຊັ້ນສູງ, ອຳນວຍຄວາມສະດວກໃຫ້ແກ່ການສໍ້ລາດບັງຫຼວງ ແລະ ການຄຸ້ມຄອງແບບບໍ່ຖືກຕ້ອງ ແລະ ເປັນການລັບລອບຜົນປະໂຫຍດຈາກທີ່ດິນ ແລະ ຊັບພະຍາກອນທຳມະຊາດຂອງປະຊາຊົນລາວ. ລັດຖະບານ ຄວນຮັບຮອງເອົາ ແລະ ຈັດຕັ້ງປະຕິບັດຢ່າງແທ້ຈິງ ນະໂຍບາຍຄວາມໂປ່ງໃສແບບຮອບດ້ານ ເຊິ່ງລວມມີສະຖິຕິໃໝ່ລ້າສຸດດ້ານເສດຖະກິດ-ສັງຄົມ, ຂໍ້ມູນດ້ານງົບປະມານ, ໜີ້ສິນຂອງລັດຖະບານ, ຂໍ້ຕົກລົງສັນຍາໄຟຟ້າພະລັງງານນ້ຳ, ການສຳປະທານທີ່ດິນ ແລະ ການຈັດສັນເຂດເສດຖະກິດພິເສດ;

(d) ມີຂໍ້ບົກພ່ອງຢ່າງຮ້າຍແຮງໃນດ້ານລະບຽບກົດໝາຍ. ບໍ່ມີທະນາຍຄວາມຢ່າງພຽງພໍ, ສານປະຊາຊົນສ່ວນໃຫຍ່ແມ່ນການຂະຫຍາຍສາຍພັກ ແລະ ບຸກຄົນທົ່ວໄປ ໂດຍສະເລ່ຍແມ່ນປະເຊີນກັບອຸປະສັກຫຼາຍຢ່າງໃນການເຂົ້າເຖິງ. ທາງເລືອກໜຶ່ງ ອາດຈະແມ່ນການຄົ້ນຄວ້າການປະຕິຮູບທີ່ສຳຄັນຂອງຄະນະກຳມະການໄກ່ເກ່ຍຂັ້ນບ້ານ ເພື່ອຮັບປະກັນຄວາມສະເໝີພາບລະຫວ່າງຍິງ-ຊາຍ, ຄວາມເປັນທຳໃນຂະບວນການ ແລະ ຄວາມເປັນໄປໄດ້ຂອງການອຸທອນ. ຕ້ອງກວມເອົາການປາບປາມການສໍ້ລາດບັງຫຼວງຕື່ມອີກ ເຊິ່ງບໍ່ພຽງແຕ່ພວກປານ້ອຍເທົ່ານັ້ນ ແລະ ປະກອບມີການດຳເນີນຄະດີຕໍ່ເຈົ້າໜ້າທີ່ລະດັບສູງທີ່ຮັບຜິດຊອບອີກດ້ວຍ. ພຽງແຕ່ການເຄື່ອນຍ້າຍຜູ້ກະທຳຜິດໄປເຮັດວຽກອື່ນ ເປັນການສົ່ງຂໍ້ຄວາມທີ່ສະແດງເຖິງການຍົກເວັ້ນການລົງໂທດ;

(e) ຄວນສ້າງອົງການຕິດຕາມກວດກາ ທີ່ເປັນເອກະລາດຂຶ້ນ ສຳລັບຜົນກະທົບຕໍ່ສິ່ງແວດລ້ອມ, ດ້ານສັງຄົມ ແລະ ດ້ານສິດທິມະນຸດຂອງບັນດາໂຄງການພື້ນຖານໂຄງລ່າງຂະໜາດໃຫຍ່ ທີ່ກ່ຽວຂ້ອງກັບ

ຊັບພະຍາກອນທຳມະຊາດ ພ້ອມທັງການປູກຕົ້ນໄມ້ອຸດສາຫະກຳ, ລວມທັງ ສຳລັບປະຊາຊົນທີ່ຕ້ອງໄດ້ຍົກຍ້າຍຈັດສັນ ແລະ ສູນເສຍທີ່ດິນແບບບໍ່ສະໝັກໃຈ;

(f) ສະພາບການຂອງຜູ້ທີ່ໄດ້ຮັບຜົນກະທົບຈາກເຂື່ອນເຊປຽນ-ເຊນ້ຳນ້ອຍແຕກ ແມ່ນບໍ່ເປັນໜ້າເພິ່ງພໍໃຈທີ່ສຸດ. ຕ້ອງໄດ້ເພີ່ມເງິນອຸດໜູນປະຈາເດືອນ ແລະ ຈ່າຍໃຫ້ທັນເວລາ, ຕ້ອງໄດ້ປຶກສາຫາລືຢ່າງແທ້ຈິງກັບຜູ້ຖືກເຄາະຮ້າຍ, ຕ້ອງຕອບສະໜອງເນື້ອທີ່ດິນທີ່ອຸດົມສົມບູນ ແລະ ມີການໃຫ້ຄຳປຶກສາ;

(g) ບໍ່ຄວນຄວບຄຸມອົງການປະຊາສັງຄົມ. ລັດຖະບານ ຄວນຮີບຮ້ອນແກ້ໄຂບັນດາຂໍ້ຈາກັດໃນກິດຈະກຳຕ່າງໆຂອງອົງການປະຊາສັງຄົມ, ຢຸດຕິການແກ້ແຄ້ນຕໍ່ບົດປາໄສຢ່າງສັນຕິ ແລະ ໃຫ້ສະມາຄົມສາມາດຈົດທະບຽນໃນໄລຍະເວລາບໍ່ຮອດ 1 ເດືອນ ດັ່ງທີ່ເຮັດກັບພາກທຸລະກິດ. ລັດຖະບານ ຄວນສະໜອງຖານຂໍ້ມູນສາທາລະນະ ທີ່ຊີ້ບອກເຖິງ ສິ່ງທີ່ໄດ້ດາເນີນການ ແລະ ປະຕິບັດງານ. ຄວນຢຸດຕິການເຝົ້າລະວັງຂອງລັດຖະບານກ່ຽວກັບອົງການປະຊາສັງຄົມ ແລະ ຄວນລຶບລ້າງຂໍ້ກຳນົດໃຫ້ມີຜູ້ຕິດຕາມກວດກາຂອງລັດຖະບານ ໃນການເດີນທາງພາຍໃນປະເທດ.

91. ການລ່ວງລະເມີດຕໍ່ສິດທິພົນລະເມືອງບໍ່ແມ່ນຜົນປະໂຫຍດຂອງຜູ້ໃດເລີຍ. ລັດຖະບານ ຄວນສະແດງຄວາມຫ້ວງດີ ດ້ວຍການເຊື້ອເຊີນກຸ່ມປະຕິບັດງານເພື່ອບັງຄັບໃຊ້ ຫຼື ເພື່ອສືບສວນຄະດີຕ່າງໆກ່ຽວກັບການຫາຍສາບສູນແບບບໍ່ສະມັກໃຈ, ລວມທັງ ກໍລະນີຂອງທ່ານສົມບັດສົມພອນ ແລະ ລັດຖະບານ ຄວນແກ້ໄຂຄວາມບໍ່ຍຸຕິທຳຕໍ່ຜູ້ຖືກຄຸມຂັງໃນແຂວງເຊກອງ.

92. ຄວນປະເມີນຄືນໃໝ່ນະໂຍບາຍຕໍ່ກຸ່ມຊົນເຜົ່າສ່ວຍນ້ອຍ ເພື່ອໃຫ້ພວກເຂົາສາມາດຫຼຸດພົ້ນຈາກຄວາມທຸກຍາກທີ່ແຜ່ຂະຫຍາຍເປັນວົງກວ້າງ ແລະ ສາມາດເຂົ້າເຖິງການບໍລິການຂັ້ນພື້ນຖານ. ການປະຕິເສດບໍ່ຮັບຮູ້ວ່າພວກເຂົາມີຢູ່ ພຽງແຕ່ປະກອບເປັນການຍົກເວັ້ນ ແລະ ກີດຂວາງພວກເຂົາ ບໍ່ສາມາດປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງປະເທດ.

93. ຄຳມຸ່ງໝັ້ນຢ່າງເປັນທາງການຕໍ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ ຖືກທຳລາຍ ດ້ວຍຄວາມລຸບໂຕນຢ່າງເລິກເຊິ່ງໃນດ້ານການສຶກສາ, ການມີວຽກເຮັດງານທຳ ແລະ ການມີສ່ວນຮ່ວມໃນດ້ານນະໂຍບາຍ. ເພື່ອສົ່ງສັນຍານທີ່ມີຄວາມໝາຍ ແລະ ນຳເອົາການປ່ຽນແປງຢ່າງແທ້ຈິງ, ລັດຖະບານ ຄວນໝາຍໝັ້ນວ່າຈະປິດຊ່ອງຫວ່າງດ້ານການສຶກສາ ແລະ ການມີວຽກເຮັດງານທຳ ແລະ ຮັບປະກັນວ່າ 1/3 ຂອງບັນດາເຈົ້າແຂວງ ແລະນາຍບ້ານ ແມ່ນແມ່ຍິງ ໃນປີ 2025.

94. ກົດໝາຍທີ່ດິນທີ່ໄດ້ສະເໜີ ຄວນປົກປ້ອງສິດທິການຄອບຄອງທີ່ດິນຕາມປະເພນີ, ລວມທັງ ປະຊາຊົນຜູ້ທີ່ເພິ່ງພາອາໄສທີ່ດິນຊຸມຊົນ ແລະ ຜູ້ທີ່ອາໄສຢູ່ໃນເນື້ອທີ່ດິນທີ່ຖືກກຳນົດໃຫ້ເປັນເຂດປ່າໄມ້ ແລະ ລັດຖະບານຄວນຮັບເອົາວິທີການຊົດເຊີຍທີ່ມີຄວາມໂປ່ງໃສ ແລະ ສະເໝີພາບກວ່າ.

95. ປະຊາຄົມສາກົນ ຕ້ອງເພີ່ມທະວີ ການເກັບກູ້ລະເບີດທີ່ບໍ່ທັນແຕກຢ່າງຮີບດ່ວນ ແລະ ສະໜັບສະໜູນຜູ້ຖືກກະທົບ. ບັນດາຄູ່ຮ່ວມພັດທະນາ ຄວນຄິດໄລ່ຄວາມຮັບຜິດຊອບຂອງຕົນເອງຕໍ່ການບໍ່ມີຄວາມຄືບໜ້າທີ່ກ່ຽວຂ້ອງກັບການລຶບລ້າງຄວາມທຸກຍາກ ແລະ ດ້ານສິດທິມະນຸດ. ອົງການສະຫະປະຊາຊາດ ຄວນພິຈາລະນາເຖິງວິທີການທີ່ສາມາດປ່ຽນແປງຄວາມຮັບຮູ້ທີ່ວ່າ ເປັນທັຍງອົງການຈິ່ງລົ້ມເຫຼວຕໍ່ການເປັນກະບອກສຽງໃຫ້ແກ່ຜູ້ທີ່ມີຄວາມສ່ຽງ, ປ່ອຍປະລະເລີຍຕໍ່ສິດທິມະນຸດ. ຜູ້ໃຫ້ເງິນກູ້ແບບພະຫຸພາຄີ ແລະ ແບບ 2 ຝ່າຍ ຄວນພິຈາລະນາຕື່ມອີກ ເຖິງຄວາມເສຍຫາຍທີ່ເກີດຈາກການລົງທຶນຂອງຕ່າງປະເທດ ແລະ ຮັບປະກັນວ່າ ໂຄງການຕ່າງໆ ນຳເອົາຜົນປະໂຫຍດສູ່ປະຊາຊົນລາວໃຫ້ຫຼາຍຂຶ້ນ.